ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

22 ທັນວາ 2022

ປີທີ 11

ສະບັບພິເສດ

## ໂຄງການຈັດສັນໜີ້ສິນ 30 ກວ່າເປີເຊັນ ໃນແຜນປີ 2023



ທ່ານ ຄຳເຈນ ວົງໂພສີ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ຊີ້ແຈງຕໍ່ຄຳຊັກຖາມຂອງສະພາແຫ່ງຊາດ

ກ່ອນອື່ນຂ້າພະເຈົ້າກໍຂໍຕາງໜ້າໃຫ້ກະຊວງແຜນການ ແລະ ການລົງທຶນ ກໍຄືລັດຖະບານ ຂໍມາຊີ້ແຈງຄຳຊັກຖາມຂອງຄະນະປະຈຳສະພາແຫ່ງຊາດ ກໍຄືສະມາຊິກສະພາແຫ່ງຊາດ. ຄຳຊັກຖາມທີ່ຂ້າພະເຈົ້າໄດ້ຮັບເປັນທາງການກໍແມ່ນມີ 4 ຄຳຖາມ, ນອກຈາກນັ້ນ, ກໍມີຄຳຊັກຖາມຂອງສະມາຊິກສະພາແຫ່ງຊາດຢູ່ແຕ່ລະເຂດເລືອກຕັ້ງຕື່ມອີກ 5 ຄຳຖາມ ແຕ່ວ່າແຕ່ລະເຂດເລືອກຕັ້ງນັ້ນຍ້ອນວ່າເວລາຈຳກັດ ພວກຂ້າພະເຈົ້າຈະສົ່ງໃຫ້ບັນດາທ່ານແຕ່ລະເຂດເລືອກຕັ້ງຕໍ່ຄຳຊັກຖາມ, ອັນລວມມີຢູ່ 4 ຄຳຖາມ ດັ່ງນີ້:

ຄຳຖາມທີ່ 1 ແມ່ນປະຕິບັດເປົ້າໝາຍທີ 1 ຂອງແຜນພັດທະນາເສດຖະກິດ-ສັງຄົມ ໃຫ້ເສດຖະກິດເຕີບໂຕຕໍ່ເນື່ອງ ມີຄຸນນະພາບ ໝັ້ນທ່ຽງ ແລະ ຍືນຍົງ ຕິດພັນກັບເປົ້າໝາຍທີ 3 ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນເທື່ອລະກ້າວນັ້ນ ໄດ້ກຳນົດຕົວຊີ້ບອກຄຸນນະພາບ ແລະ ຍົກລະດັບ

ອ່ານຕໍ່ໜ້າ 2

## ການສ້າງຄັງແຮສຳຮອງ



ທ່ານ ປອ. ບຸນເຫລືອ ສິນໄຊວໍຣະວົງ ຜູ້ວ່າການທະນາຄານແຫ່ງ ສປປລາວ ຊີ້ແຈງຕໍ່ຄຳຊັກຖາມຂອງສະມາຊິກສະພາແຫ່ງຊາດ

ມີ 5 ທ່ານຜູ້ແທນໄດ້ມີຄຳເຫັນ. ຂ້າພະເຈົ້າຄິດວ່າຄຳຖາມທີ1 ທັງຜູ້ແທນມາຍຟອງ ມາຍຊາຍ ທີ່ເປັນເພື່ອນຮ່ວມຮຽນອຸດົມວຽງຈັນນຳກັນ ຂອບໃຈຄຳຖາມ. ຄັງແຮສະສົມນີ້ ຊິເຮັດແນວໃດຊິໃຫ້ມັນເພີ່ມຂຶ້ນ, ຄືຂ້າພະເຈົ້າເວົ້າແລ້ວ ພວກເຮົາຖອດຖອນບົດຮຽນຈາກການຄຸ້ມຄອງເສດຖະກິດມະຫາພາກໃນຊຸມປີຜ່ານມານີ້ ຂ້າພະເຈົ້າເວົ້າວ່າຫົວໃຈຂອງການຟື້ນຟູຄືການສ້າງຄັງແຮສຳຮອງ ໃຫ້ມັນມີຄວາມເຂັ້ມແຂງ ອັນນີ້ແມ່ນຫົວໃຈຂອງມັນ, ຖ້າຫາກວ່າໂຕນີ້ຜ່ອນຄາຍແລ້ວ ໂຕອື່ນຈະຜ່ອນຄາຍໄປຖ້າເຮົາຫາກມີຄັງແຮສຳຮອງສູງ, ຄວາມເຊື່ອຖືຂອງສາກົນສູງ ທຸລະກິດກໍດຳເນີນງ່າຍ, ການກູ້ຢືມກໍງ່າຍ, ການບໍລິຫານໜີ້ສິນກໍງ່າຍ ອັນນີ້ແມ່ນຫົວໃຈຂ້າພະເຈົ້າເອກະພາບທີ່ສຸດ ແລະ ສະພາບທີ່ພວກເຮົາຈະເຮັດ ອັນທີ 1 ຄື: ການຄຸ້ມຄອງເງິນຕາໃຫ້ເຂົ້າລະບົບທະນາຄານກ່ອນໝູ່ໝົດໃຫ້ມັນໄດ້. ຊິພະຍາຍາມສ້າງນິຕິກຳມາ, ສ້າງລະບົບມາ, ໃຫ້ໝົດສິ່ງອອກ ເຖິງວ່າຊິບໍ່ໄດ້ນຳເຂົ້າ ກໍໃຫ້ມີເຫດມີຜົນຈະຕ້ອງຄຸ້ມຄອງໂຕນີ້ໃຫ້ມັນໄດ້, ສ້າງຄວາມສົມດຸນ ຫລື ເກີນດຸນທາງດ້ານເງິນຕາໃຫ້ມັນໄດ້, ຈະບໍ່ແມ່ນເກີນດຸນແຕ່ສະຖິຕິ ປັດຈຸບັນນີ້ພວກເຮົາເກີນດຸນສະຖິຕິການສົ່ງອອກ, ແຕ່ວ່າພວກເຮົາບໍ່ໄດ້ເກີນດູນເມັດເງິນທັນແທ້ ອັນນີ້ອັນທີ 1 ຂ້າພະເຈົ້າຄິດວ່າ. ອັນທີ 2: ບັນຫາແມ່ນພວກເຮົາກໍຮ່ວມມືກັບບັນດາປະເທດເພື່ອນມິດທີ່ມີຄູ່ຄ້າ

ອ່ານຕໍ່ໜ້າ 2

## ສະບັບພິເສດ



## ຢາກໃຫ້ການຄຸ້ມຄອງລັດມີປະສິດທິຜົນ



ຄຳເຫັນຂອງທ່ານ ແດງ ປະທຸມທອງ ສະມາຊິກສະພາແຫ່ງຊາດ ເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ.

ຂ້າພະເຈົ້າເຫັນດີເປັນເອກະພາບສູງ ຕໍ່ບົດປະກອບຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດ ທີ່ໄດ້ຜ່ານໃນຄາບເຊົ້ານີ້, ຜ່ານການລົງພົບປະກັບປະຊາຊົນ ແລະ ການລົງຕິດຕາມກວດກາໃນນາມຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ ຂໍມີຄຳເຫັນ ແລະ ຍົກຂຶ້ນໃຫ້ລັດຖະບານໄດ້ມີການພິຈາລະນາ 3 ຈຸດ ຕໍ່ບົດລາຍງານໃນການປະຕິບັດບາງເປົ້າໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມ 9 ເດືອນ ປີ 2022 ດັ່ງນີ້:

ໃນເປົ້າໝາຍທີ 3 ເວົ້າເຖິງການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ມີ 8 ຕົວຊີ້ວັດ ປະຕິບັດໄດ້ 6 ຕົວຊີ້ວັດ ເຊິ່ງໃນບົດນີ້ໄດ້ຕີລາຄາວ່າ ຕົວຊີ້ວັດທີ 1 ຈະສາມາດປະຕິບັດໄດ້ ໃນນີ້ແມ່ນການປະຕິບັດການສ້າງຄອບຄົວພົ້ນທຸກໃຫ້ໄດ້ຕາມແຜນນີ້ແມ່ນ 30,654 ຄອບຄົວ ຕົວເລກນີ້ແມ່ນນອນໃນຄາດໝາຍລວມ ການສ້າງ

ອ່ານຕໍ່ໜ້າ 3

## ເພີ່ມທະວີຄວາມເຂັ້ມງວດ ໃນການເກັບລາຍຮັບ



ຄຳເຫັນຂອງທ່ານ ກົງແກ້ວ ມີວໍລະຈັກ ສະມາຊິກສະພາແຫ່ງຊາດ ເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ

ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ

ຂ້າພະເຈົ້າກໍຂໍສະແດງຄວາມເຄົາລົບ ແລະ ສະໜັບສະໜູນຕໍ່ຄຳເຫັນຕໍ່ຜູ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ ແລະ ບັນດາທ່ານສະມາຊິກສະພາແຫ່ງຊາດ ທີ່ໄດ້ປະກອບຄຳເຫັນຜ່ານມາແລ້ວ, ຜ່ານການເຄື່ອນໄຫວຕິດຕາມກວດກາໃນການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຢູ່ໃນເຂດເລືອກຕັ້ງທີ 13 ຜ່ານມານີ້ ຂ້າພະເຈົ້າຂໍປະກອບບາງຄຳເຫັນຄືດັ່ງນີ້:

1. ຕໍ່ກັບວຽກງານສຶກສາ: ໂດຍພື້ນຖານກໍແມ່ນເຫັນດີຕາມແຜນທີ່ຈະປັບປຸງຫລັກສູດການຮຽນ-ການສອນຂອງນັກຮຽນຢູ່ຂັ້ນປະຖົມ ແຕ່ວ່າການຈັດຕັ້ງປະຕິບັດນະໂຍບາຍ

ອ່ານຕໍ່ໜ້າ 7

## ຢາກໃຫ້ເອົາໃຈໃສ່ ການລົງທຶນເຊົ່າສຳປະທານ



ຄຳເຫັນຂອງທ່ານ ດວງເພັດ ພະຍົນ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 16 ແຂວງເຊກອງ ຕໍ່ບົດລາຍງານຂອງລັດຖະບານ.

ຂ້າພະເຈົ້າແມ່ນເຫັນດີເປັນເອກະພາບ ຕາມບົດລາຍງານ ກໍຄືບົດປະກອບຄຳເຫັນຕາງໜ້າຄະນະປະຈຳສະພາແຫ່ງຊາດ ພ້ອມດ້ວຍຄຳເຫັນຂອງບັນດາທ່ານຜູ້ແທນໄດ້ມີຄຳເຫັນໄປນັ້ນ ສຳລັບທ້ອງຖິ່ນກໍຂໍຢັ້ງຢືນວ່າແມ່ນສະໜັບສະໜູນຕໍ່ຂໍ້ມູນ ແລະ ຜົນສຳເລັດຕໍ່ອັດຕາການເຕີບໂຕເສດຖະກິດໃນລະດັບ 4,2 ຂອງລັດຖະບານ ສຳລັບທ້ອງຖິ່ນນີ້ກໍຖືວ່າບັນລຸໃນ 9 ເດືອນ ຫລື ວ່າ 11 ເດືອນຕົ້ນປີນີ້ ແລະ ຄາດວ່າຢູ່ໃນທ້າຍປີຈະບັນລຸຕາມຄາດໝາຍທີ່ວາງໄວ້ ສຳລັບແຜນງົບປະມານແຫ່ງລັດກໍຄືບົດສະຫລຸບຂາດຕົວນີ້ ປະກົດວ່າໃນທ້ອງຖິ່ນ ກໍເຫັນວ່າປະຕິບັດເກີນແຜນ ປີ 2021 ແລະ ຄາດວ່າ ປີ 2022 ກໍຈະເກີນແຜນອີກ ສຳລັບການຈັດເກັບລາຍຮັບ ແຕ່ວ່າທັງໝົດນັ້ນ ກໍເນື່ອງ

ອ່ານຕໍ່ໜ້າ 7

## ການຕ້ານການຮົ່ວໄຫລ ຂອງງົບປະມານມີຄວາມສຳຄັນ



ຄຳເຫັນຂອງທ່ານ ສຈ. ປອ. ດຣ. ມາຍຟອງ ມາຍຊາຍ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ 12 ແຂວງຄຳມ່ວນ ຕໍ່ບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາ

ໂດຍລວມແລ້ວ ແມ່ນເຫັນດີເປັນເອກະພາບກັບບົດປະກອບຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດຕໍ່ກັບບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາ ໃນໄລຍະທີ່ຜ່ານມາ, ແຕ່ວ່າຂ້າພະເຈົ້າຢາກຂໍປະກອບຄຳເຫັນເພີ່ມຕື່ມໃນບາງຈຸດຕໍ່ໄປນີ້:

ອັນທີໜຶ່ງ ແມ່ນຂໍສັງເກດຕໍ່ກັບບົດລາຍງານດັ່ງກ່າວ ເຊິ່ງຂ້າພະເຈົ້າສັງເກດເຫັນວ່າ ໃນການຍົກໃຫ້ເຫັນຕົວເລກ ຫລືວ່າຄາດໝາຍສູ້ຊົນບາງຢ່າງເພິ່ນຈະມີການປຽບທຽບລະ

ອ່ານຕໍ່ໜ້າ 7



ໜ້າ 4



ໜ້າ 4



ໜ້າ 4



ໜ້າ 4



ໜ້າ 5



ໜ້າ 5

ຊົມເຊີຍກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງສຸດໃຈ!



## ໂຄງການ...

ຊີວິດການເປັນຢູ່ຄືແນວໃດ?

ເນື່ອງຈາກຜ່ານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໄລຍະ 2 ປີ ຜ່ານມາ:

ອັນທີ 1: ລາຍໄດ້ແຫ່ງຊາດແມ່ນຫລຸດລົງຕໍ່ເນື່ອງ ຈາກ 2,161 ໂດລາ ໃນ 2020 ແລະ 2,004 ໂດລາ ໃນປີ 2021 ສາເຫດເນື່ອງຈາກອັດຕາເງິນເຟີ້ ແລະ ຜັນຜວນຂອງອັດຕາແລກປ່ຽນທີ່ເພີ່ມຂຶ້ນໃນປີ 2022.

ຈຸດທີ 2: ເງິນເຟີ້ໄດ້ເພີ່ມຂຶ້ນຈາກ 6,25% ໃນເດືອນ 1 ປີ 2021 ຕໍ່ເນື່ອງມາຮອດເດືອນ 11 ປີ 2022 ແມ່ນ 38,46% ເຫັນວ່າອັດຕາເງິນເຟີ້ເພີ່ມຂຶ້ນຫລາຍ ເຊິ່ງສະແດງໃຫ້ເຫັນຄວາມສາມາດຊື້ຕົວຈິງມີທ່າອ່ຽງຫລຸດລົງຕໍ່ເນື່ອງ.

ຈຸດທີ 3: ອັດຕາຫວ່າງງານຢູ່ໃນລະດັບ 19,5%, ມະຕິສະພາ 19,4% ສາເຫດແມ່ນຍ້ອນກິດຈະກຳການສ້າງວຽກເຮັດງານທຳ ແລະ ການສ້າງສີມືແຮງງານຂະຫຍາຍຕົວຈຳກັດ, ຄວນກຳນົດຕົວຊີ້ບອກການປະຕິບັດ 2 ເປົ້າໝາຍດັ່ງກ່າວຄືແນວໃດ?

ຄຳຖາມຂໍ້ນີ້ ແມ່ນສຳຄັນຫລາຍ ແລະກໍແມ່ນຍາກຫລາຍ ແຕ່ເຖິງຢ່າງໃດ ຂ້າພະເຈົ້າກໍຂໍແລກປ່ຽນນຳບັນດາທ່ານສະມາຊິກສະພາແຫ່ງຊາດວ່າ ດັ່ງທີ່ໄດ້ຍົກຂຶ້ນຢູ່ໃນບົດຄຳເຫັນຂອງທ່ານນາຍົກ ແລະ ການລາຍງານຂອງສະມາຊິກລັດຖະບານໃນມື້ເປີດທັ້ນ ແມ່ນຄວາມຫຍຸ້ງຍາກຂອງບັນດາປະເທດໃນໂລກລວມທັງປະເທດຂອງພວກເຮົາແມ່ນພົວພັນເຖິງບັນຫາການແລກປ່ຽນ, ລາຄານ້ຳມັນ, ພະຍາດໂຄວິດ-19 ແລະ ໄພພິບັດ ແລະອື່ນໆ. ສຳຫລັບປະເທດຂອງພວກເຮົາ ບວກກັບຄວາມບອບບາງທາງດ້ານເສດຖະກິດທີ່ໄດ້ສະສົມມາຫລາຍປີ; ສະນັ້ນ, ຂ້າພະເຈົ້າຂໍສະເໜີວ່າ ຕົວຊີ້ບອກ ຢູ່ໃນ 2 ຕົວຊີ້ບອກຄວນຮັກສາໄວ້ສາກ່ອນ ມີແຕ່ວ່າມາດຕະການໃນການຈັດຕັ້ງປະຕິບັດສຳຄັນຫລາຍ ເຊິ່ງໃນນີ້ມາດຕະການສຳຄັນກໍແມ່ນເລື່ອງສືບຕໍ່ປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນເປັນສຳຄັນ ເພາະວ່າຢູ່ໃນວາລະແຫ່ງຊາດນີ້ ແມ່ນໄດ້ເລັ່ງໃສ່ອັນທີ 1 ແມ່ນສ້າງຖານການຜະລິດ ຕິດພັນກັບການສ້າງຖານລາຍຮັບ; 2 ແມ່ນປະຢັດລາຍຈ່າຍງົບປະມານຂອງລັດ ການລົງທຶນຂອງລັດທຸກດ້ານໃນທຸກຂົງເຂດ; ອັນຕໍ່ໄປແມ່ນຕ້ອງໄດ້ປັບປຸງການບໍລິຫານການຄຸ້ມຄອງຂອງລັດຖະບານກໍຄືຂອງລັດເຮົາໃນຂົງເຂດເສດຖະກິດ-ສັງຄົມ ແລະ ທັງໝົດເຫລົ່ານັ້ນ ລ້ວນແຕ່ໄດ້ນຳໃຊ້ການຫັນເປັນເຄື່ອງມືທັນສະໄໝ ເພື່ອເຮັດໃຫ້ການແກ້ໄຂຄວາມຫຍຸ້ງຍາກໄດ້ວ່ອງໄວທັນການຂຶ້ນກວ່າເກົ່າ. ສະນັ້ນ, ຂ້າພະເຈົ້າຢູ່ໃນນີ້ກໍຂໍສະເໜີວ່າ ພະຍາຍາມ ຕ້ອງໄດ້ສູ້ຊົນນຳກັນ ແລະ ປະຕິບັດຢູ່ໃນ 3 ຫລັກການທີ່ໄດ້ກຳນົດໄວ້ຢູ່ໃນວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ຢູ່ໃນນີ້ສຳຄັນແມ່ນຕ້ອງໄດ້ສ້າງຄວາມເປັນເອກະພາບໄປລວງດຽວກັນແທ້ໆ, ຢູ່ໃນນີ້ແມ່ນລວມທັງເລື່ອງການສ້າງຖານການຜະລິດພາຍໃນໃຫ້ມີຄວາມເຂັ້ມແຂງຂົງເຂດກະສິກຳ, ອຸດສາຫະກຳ, ການບໍລິການເຂັ້ມແຂງຂຶ້ນ. ອັນນີ້ກໍແມ່ນເລື່ອງປະຢັດລາຍຈ່າຍ ຂຸດຄົ້ນລາຍຮັບໃຫ້ໄດ້ຕາມຄາດໝາຍ ແລະອື່ນໆ ອັນນີ້ແມ່ນຄຳຖາມທີ 1 ຂໍຕອບແນວນັ້ນ.

ຄຳຖາມທີ 2 ແມ່ນສະເໜີໃຫ້ຊີ້ແຈງຫລັກການ ແລະ ເງື່ອນໄຂການກຳນົດໂຄງປະກອບການຈັກສັນງົບປະມານການລົງທຶນຂອງລັດປີ 2023 ສຳຫລັບປະເພດໂຄງການຕາມລາຍງານຂອງກະຊວງແຜນການ ແລະ ການລົງທຶນ ຄືໂຄງການໜີ້ສິນ 30,71%, ໂຄງການສືບຕໍ່ 76,68%, ໂຄງການສະເໜີໃໝ່ 11,53%.

ຂ້າພະເຈົ້າຂໍສະເໜີວ່າ ໃນປີ 2023 ພວກຂ້າພະເຈົ້າໄດ້ແຈ້ງ ມີຄຳແນະນຳໃຫ້ແກ່ຂະແໜງການ ແລະ ທ້ອງຖິ່ນນັບແຕ່ເດືອນ 8 ປີ 2022 ແລ້ວ ແລະ ໄດ້ກຳນົດໂຄງປະກອບຢູ່ໃນສັດສ່ວນຢູ່ໃນ 3 ດ້ານ, ໂຄງການຊຳລະໜີ້ແມ່ນໃຫ້ໄດ້ຢູ່ 40-50%, ໂຄງການສືບຕໍ່ແມ່ນ 30-40%, ໂຄງການໃໝ່ແມ່ນ 10-15% ບໍ່ໃຫ້ກາຍນີ້, ແຕ່ວ່າຜ່ານການຈັດຕັ້ງປະຕິບັດຕົວຈິງຂອງບັນດາຂະແໜງການທ້ອງຖິ່ນ ຜ່ານການສັງລວມໂຄງການບັນຊີໂຄງການຂອງແຕ່ລະຂະແໜງການ ແລະທ້ອງຖິ່ນ ແມ່ນບໍ່ໄດ້ປະຕິບັດຕາມການແນະນຳຂອງກະຊວງແຜນການ ແລະ ການລົງທຶນ ແລະ ພວກຂ້າພະເຈົ້າກໍໄດ້ສັງລວມຕາມການສະເໜີແຕ່ລະຂະແໜງການ ແລະ ທ້ອງຖິ່ນ; ສະນັ້ນ, ສັດສ່ວນໃນການຈັດສັນງົບປະມານການລົງທຶນຂອງລັດ ກໍໄດ້ອອກມາຕາມການເຈາະຈີ້ມຂອງສະພາແຫ່ງຊາດ; ສະນັ້ນ, ສຳຫລັບປີນີ້ ຖ້າວ່າຊິໄປປັບປຸງຄືນຕາມສັດສ່ວນທີ່ໄດ້ກຳນົດນັ້ນ ມັນຊິຊ້າຕື່ມອີກ ມັນຊິຊ້າຄືກັນກັບປີ 2022 ສະນັ້ນ ຂໍສະເໜີໃຫ້ຄະນະປະຈຳ ກໍຄືສະມາຊິກສະພາແຫ່ງຊາດ ຂໍຮັບເອົາໂຕນີ້ກ່ອນ ເພາະວ່າບັນຊີໂຄງການໂຕນີ້ໄດ້ສົ່ງໃຫ້ຄະນະປະຈຳສະພາແຫ່ງຊາດແລ້ວ ຖ້າວ່າໄປປັບໂຄງສ້າງຊິໄດ້ຫຍຸ້ງຍາກຕື່ມອີກ ເພາະເຈາະໄປແຕ່ລະທ້ອງຖິ່ນ, ແຕ່ວ່າຢູ່ໃນປີ 2024 ແມ່ນພວກຂ້າພະເຈົ້າຈະສືບຕໍ່ປຶກສາຫາລືກັບຂະແໜງການທ້ອງຖິ່ນແຕ່ຫົວທີ ໝາຍຄວາມວ່າສັດສ່ວນໃຫ້ແກ່ການຊຳລະໜີ້ໃຫ້ສູງຂຶ້ນ, ໂຄງການສືບຕໍ່ຈະຫລຸດລົງ ໝາຍຄວາມວ່າສູງຂຶ້ນຢູ່ໃນລະດັບ 60% ແລ້ວ ແຕ່ການຕົກລົງຂອງສະມາຊິກສະພາ ໂຄງການສືບຕໍ່ຈະຢູ່ໃນລະດັບ 30% ແລະ ໂຄງການໃໝ່ຢູ່ໃນລະດັບ 10% ອັນນີ້ແມ່ນຂໍສະເໜີແນວນັ້ນ.

ຄຳຖາມທີ 3 ສະເໜີໃຫ້ຊີ້ແຈງການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການລົງທຶນຂອງລັດ ມາດຕາ 18-19 ມີຜົນສັກສິດ ແລະ ມີຄວາມຫຍຸ້ງຍາກຄືແນວໃດ? ຈະມີວິທີການ ແລະ ມາດຕະການແກ້ໄຂແນວໃດເພື່ອສາມາດຈັດຕັ້ງປະຕິ 2 ມາດຕາ ທີ່ໄດ້ກ່າວມານັ້ນໃຫ້ມີຜົນສັກສິດ.

ຂໍລາຍງານຕໍ່ທີ່ປະຊຸມວ່າ ເວລາໃນການຄົ້ນຄວ້າປັບປຸງກົດໝາຍສະບັບນີ້ ເຫັນວ່າການເຕີບໂຕເສດຖະກິດຂອງປະເທດພວກເຮົາກໍຍັງຢູ່ໃນລະດັບດີຢູ່ ໄດ້ຂະຫຍາຍຕົວຢູ່ໃນດັບ 6-7% ຕໍ່ປີ, ການເກັບລາຍຮັບກໍສາມາດໄດ້ຕາມແຜນ ແລະ ກໍລື່ນແຜນຢູ່ໃນແຕ່ລະປີ ຈຶ່ງສາມາດດຳເນີນການລົງທຶນຕາມສັດສ່ວນທີ່ຢູ່ໃນລະດັບເໝາະສົມ, ແຕ່ໄລຍະຫລັງໆມານີ້ ໂດຍໄດ້ຮັບຜົນກະທົບຈາກສະພາບການຂອງໂລກດັ່ງທີ່ຂ້າພະເຈົ້າສະເໜີຢູ່ໃນຄຳຖາມທີ 1 ທັ້ນ ເຮັດໃຫ້ຖານລາຍຮັບຂອງພວກເຮົານັບມື້ນັບມີບັນຫາ, ມີຄວາມຫຍຸ້ງຍາກ, ສະນັ້ນ; ຈຶ່ງສະເໜີວ່າ ປີຕໍ່ໄປນີ້ກໍຈະເຮັດໃຫ້ພວກເຮົາຕ້ອງໄດ້ສືບຕໍ່ນຳກັນວ່າ ຕ້ອງໄດ້ເອົາໃຈໃສ່ໃນການຄົ້ນຄວ້າ ແລະ ປະຕິບັດ 2 ມາດຕານີ້, ຕ້ອງໄດ້ສືບຕໍ່ປະຕິບັດຢ່າງຕັ້ງໜ້າໃຫ້ມີຄວາມສູ້ຊົນ ແລະ ມາດຕານີ້ຊິປັບປຸງຫລືບໍ່ ແມ່ນຂໍສະເໜີໃຫ້ທາງສະມາຊິກສະພາແຫ່ງຊາດ ກໍຄືຄະນະປະຈຳສະພານີ້ ຊີ້ນຳຕໍ່ລັດຖະບານຕື່ມຈະປັບປຸງແນວໃດ, ຢາກສະເໜີວ່າໂຕນີ້ກໍມີບັນຫາກວມລວມທີ່ພົວພັນເຖິງຄວາມຫຍຸ້ງຍາກ, ຄວາມບອບບາງທາງດ້ານເສດຖະກິດຂອງພວກເຮົາ; ສະນັ້ນ, ຄິດວ່າຈະປັບປຸງຫລືບໍ່, ບໍ່ປັບປຸງນັ້ນກະພາຍຫລັງທີ່ມີການຊີ້ນຳຂອງກອງປະຊຸມໃນຄັ້ງນີ້, ລັດຖະບານກໍຈະໄດ້ສືບຕໍ່ສົມທົບກັບຂະແໜງການກ່ຽວຂ້ອງ ແລະ ຊິໄດ້ຄົ້ນຄວ້າປັບປຸງຢູ່ໃນ 2 ມາດຕາດັ່ງກ່າວ.

ອັນທີ 4 ແມ່ນສະເໜີໃຫ້ຊີ້ແຈງການຈັດຕັ້ງປະຕິບັດການຈັດສັນງົບປະມານສຳຫລັບຂະແໜງການທີ່ເປັນຂະແໜງການເສດຖະກິດ, ວັດທະນະທຳ-ສັງຄົມ, ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, ຂະແໜງສິ່ງແວດລ້ອມ ໄດ້ອີງໃສ່ເງື່ອນໄຂ ແລະ ຫລັກການອັນໃດ? ຕົວຢ່າງ: ຂະແໜງສຶກສາໄດ້ຮັບການຈັດສັນງົບປະມານ 12% ຕາມກົດໝາຍແມ່ນ 18%.

ຂໍສະເໜີແລກປ່ຽນນຳບັນດາສະມາຊິກສະພາແຫ່ງຊາດ ວ່າໃນໄລຍະຫລາຍປີຜ່ານມາ ແມ່ນຍ້ອນມີຮ່ວງເງິນຊຳລະໂຄງການໃໝ່ຫລາຍສົມຄວນ ຍ້ອນແນວນັ້ນ ລັດຖະບານຈຶ່ງໄດ້ຄົ້ນຄວ້າກຳນົດໂຄງປະກອບການລົງທຶນຂອງລັດ ໃນຂົງເຂດວັດທະນະທຳ-ສັງຄົມຫລາຍຂຶ້ນ, ແຕ່ນັບແຕ່ປີ 2020 ເປັນຕົ້ນມາ ໂຄງການລົງທຶນຂອງລັດສ່ວນໃຫຍ່ແມ່ນສຸມໃສ່ການຊຳລະໜີ້ໂຄງການສືບຕໍ່ເທົ່ານັ້ນ ສ່ວນວ່າໂຄງການໃໝ່ແມ່ນໄດ້ກຳນົດແຕ່ອັນທີ່ຈຳເປັນ ແລະ ພົວພັນເຖິງຄວາມໝັ້ນຄົງຂອງປະເທດພວກເຮົາ. ສະນັ້ນ, ຈຶ່ງບໍ່ສາມາດບັນລຸ ແລະ ບໍ່ໄດ້ກຳນົດຢູ່ໃນສັດສ່ວນຂົງເຂດວັດທະນະທຳ-ສັງຄົມດັ່ງທີ່ໄດ້ກຳນົດຢູ່ໃນກົດໝາຍນັ້ນ ຂ້າພະເຈົ້າ ຂໍຕອບບັນຫາລວມໂດຍຫຍໍ້ແນວນັ້ນ.

## ການສັງ...

ຫລາຍອັນ ເຮັດລະບົບການຊຳລະສະສາງທີ່ເປັນສະກຸນເງິນທ້ອງຖິ່ນກັບຈີນ ພວກເຮົາກໍໄດ້ເຮັດ ແລະ ເລີ່ມຕົ້ນແລ້ວ ພວກເຮົາມີລະບົບສະວັອບເງິນກີບ-ເງິນຢວນ. ອັນນີ້ການສະວັອບພວກເຮົາກໍໄດ້ເງິນຢວນນີ້ລະເຂົ້າມາ ພວກເຮົາກໍເອົາເງິນກີບໄປໃຫ້ເຂົາເຈົ້າ, ເຂົາເຈົ້າເອົາເງິນຢວນມາໃຫ້ເຮົາ ໃຊ້ເງິນຢວນເຂົ້າໃນການຄ້າຂາຍ. ຄັນຊັ້ນຖ້າເງິນຢວນເຂົ້າມາຢູ່ໃນລະບົບທະນາຄານຂອງພວກເຮົາກໍເຮັດໃຫ້ຄັງແຮສຳຮອງຂອງພວກເຮົາເພີ່ມຂຶ້ນ ອັນນີ້ເປັນໄລຍະສັ້ນທີ່ພວກເຮົາເຮັດໄດ້, ພວກເຮົາຈະຕ້ອງຄຸ້ມຄອງການຄ້າຊາຍແດນ ໂດຍສະເພາະປັດຈຸບັນເຮົາໄປສັງເກດນີ້ການຄ້າຊາຍແດນຊຳລະເປັນເງິນສົດນີ້ ຍັງຫລວງຫລາຍຢູ່ເຂດຈຳປາສັກ, ຢູ່ໃນສະຫວັນນະເຂດ, ຊິສິ່ງມັນຕົ້ນອອກ ຫລື ສິ່ງຜະລິດຕະພັນກະສິກຳຢູ່ໄຊຍະບູລີ, ເມືອງສິງ (ຫລວງນ້ຳທາ) ທາງພາກເໜືອ ດຽວນີ້ພວກເຮົາຈະຕ້ອງຫັນເອົາພວກທີ່ການຄ້າຊາຍແດນ ແລະ ປະເພດສິນຄ້າກະສິກຳ ໄປເຂົ້າໃຈລະບົບໃຫ້ມັນໄດ້, ແລ້ວໄປສະໜັບສະໜູນໃຫ້ເຂົາເຈົ້າ ຈາກການຈ່າຍເງິນສົດມາເຂົ້າສູ່ລະບົບທະນາຄານ, ແຕ່ພວກເຮົາຈະບໍ່ໄປສ້າງຕົ້ນທຶນໃຫ້ເຂົາເຈົ້າ ພວກເຮົາຈະອຳນວຍຄວາມປອດໄພ ແລະ ອຳນວຍຄວາມສະດວກໃຫ້ເຂົາເຈົ້າມາຄຸ້ນເຄີຍກັບການນຳໃຊ້ລະບົບທະນາຄານໃນຊຳລະສະສາງ. ຂ້າພະເຈົ້າຄິດວ່າມາດຕະການອື່ນໆ ການເກັບໜີ້ຄືນບໍ່ ແລະ ມາດຕະການອື່ນໆ ຂ້າພະເຈົ້າຄິດວ່າມີຄວາມຈຳເປັນ ອັນນີ້ມັນແມ່ນວຽກບຸລິມະສິດຂອງທະນາຄານແຫ່ງ ສປປລາວ.

ບັນຫາທີ 2 ທ່ານຜູ້ແທນເຂດ 18 ເພິ່ນວ່າເລື່ອງເຕະບານ ເພິ່ນຖາມອີກ. ຂ້າພະເຈົ້າເຫັນຄຳຖາມດຽວເພິ່ນຖາມ ຂ້າພະເຈົ້າຂໍຮັບປາກວ່າພວກເຮົາຈະຮີບຮ້ອນ, ປັດຈຸບັນນີ້ຂ້າພະເຈົ້າກໍໄດ້ຮັບໂທລະສັບຈາກໝູ່ເພື່ອນຢູ່ຕ່າງແຂວງຫລາຍວ່າ ທະນາຄານໄດ້ດັດສົມຮ້ານແລກປ່ຽນລົງໜ້ອຍລົງ ຫລື ບໍ່ມີໃນບາງແຂວງ, ແຕ່ດຽວນີ້ບັນຫາຂອງມັນລະແມ່ນຮ້ານຄ້າ, ຮ້ານຂາຍທົ່ວໄປເດຈະເປັນຮ້ານແລກປ່ຽນ ຈັ່ງຊັ້ນເຮົາສິຄຸມແນວໃດ? ອັນນັ້ນແມ່ນຄຳຖາມຕົວຈິງທີ່ຖືກຕ້ອງ ຜູ້ຂາຍເຄື່ອງຕົວຈິງຫັນລະຊິແລກປ່ຽນກັນເອງ ອັນນີ້ມັນຕ້ອງໄດ້ມີລະບຽບຄຸ້ມຄອງ. ຂ້າພະເຈົ້າກໍຮັບປາກວ່າຊິໃຫ້ມັນໄດ້ເລີ່ມຮ່າງໃນເດືອນ 12 ຕົ້ນເດືອນ 1 ກໍໃຫ້ໄດ້ໃຊ້ສາລະບຽບໂຕນີ້, ຖ້າວ່າປະຕິບັດໄດ້ສ່ຳໃດຄຸ້ມຄອງນຳກັນບັນດາຂະແໜງອັນນີ້ມັນກະຕ້ອງໄດ້ຊ່ວຍກັນບັນດາຜູ້ແທນເຮົາ ບັນດາຂະແໜງການຄຸ້ມຄອງນຳກັນ ຖ້າມີລະບຽບອອກແລ້ວພວກເຮົາກໍມີອັນເວົ້າອັນວ່າໄດ້.

ຜູ້ແທນເຂດ 18 ເພິ່ນຖາມເລື່ອງນິຕິກຳໃຊ້ ພວກເຮົາຈະເຮັດແນວໃດໃຫ້ສຳເລັດ. ບັນດານິຕິກຳຕ່າງໆທີ່ພວກເຮົາມີພວກເຮົາກະດຽວນີ້ 28 ນິຕິກຳ ທີ່ພວກເຮົາກຳລັງດັດ ເພາະວ່າພວກເຮົາປ່ຽນໝົດລະບົບຫລາຍສົມຄວນລະບົບການຄຸ້ມຄອງທາງດ້ານເງິນຕາ ແລະ ລະບົບແລກປ່ຽນ, ລະບົບຕະຫລາດລະຫວ່າງທະນາຄານ ມີ 28 ນິຕິກຳ. ທະນາຄານແຫ່ງ ສປປລາວ ແບ່ງກຳລັງກັນເຮັດ ດຽວນີ້ກໍແລ້ວປະມານ 50-60%, ແຕ່ວ່າອັນທີມັນຕົ້ນຕໍທີ່ຈະມານຳໃຊ້ໃຫ້ໄດ້ໄວປະມານ 4-5 ນິຕິກຳ ຖືວ່າຮ່າງເບື້ອງຕົ້ນແລ້ວໝົດແລ້ວ, ພວກເຮົາພຽງແຕ່ຢາກປຶກສາສະພາອຸດສາຫະກຳ ແລະ ການຄ້າ. ທັດສະນະຂອງຂ້າພະເຈົ້າກໍຄືທັດສະນະຂອງທະນາຄານກາງ ອອກນິຕິກຳພວກເຮົາຢາກໃຫ້ທຸລະກິດທັ້ນເຂົ້າມາເບິ່ງນຳ ເພາະເຮົາບໍ່ຢາກອອກນິຕິກຳເປັນລັກສະນະບັງຄັບ, ເຮົາຢາກອອກນິຕິກຳເປັນລັກສະນະທີ່ເບື້ອງທຸລະກິດກໍໄດ້ ເຮົາກໍຄຸ້ມຄອງລະເຂົາເຈົ້າກໍຮັບໄດ້ ປະຕິບັດນຳກັນ, ຄັນເຮົາອອກບັງຄັບໄປທຸລະກິດ ຫລື ພາກປະຊາຊົນ ເພິ່ນກໍບໍ່ປະຕິບັດ ຈັ່ງຊັ້ນຢາກໃຫ້ມີຄຳຄິດຄຳເຫັນຮ່ວມກັນວ່າ ລະດັບໃດຄຸ້ມຄອງ ລະດັບໃດທີ່ທຸລະກິດນັ້ນຮັບໄດ້ ຄ່ອຍເຕົ້າຄ່ອຍໂຮມເຂົ້າ ອັນນີ້ຂ້າພະເຈົ້າຢາກມີຄຳເຫັນແນວນັ້ນ.

ເວົ້າເລື່ອງຜູ້ແທນ ໄຊບັນດິດ ຣາຊະພົນ ເພື່ອນຮ່ວມຮຽນອຸດົມ ກໍເຫັນດີແລ້ວຄັນໄດ້ສ້າງທະນາຄານ SME ແຕ່ວ່າຂ້າພະເຈົ້າດຽວນີ້ພວກເຮົາກຳລັງປັບປຸງທະນາຄານນະໂຍບາຍມາເປັນທະນາຄານພັດທະນາຊົນນະບົດເພື່ອແກ້ໄຂບັນຫາເລື່ອງໜີ້ເສຍທີ່ຢູ່ໃນວາລະແຫ່ງຊາດ ຂ້າພະເຈົ້າຈະເວົ້າຕື່ມມື້ອື່ນເວລາເວົ້າເລື່ອງວາລະແຫ່ງຊາດ. ທະນາ ຄານພວກເຮົາໄປຄົ້ນຄວ້າວິທີທີ່ຈະປັບປຸງຕື່ມທະນາຄານນະໂຍບາຍໃຫ້ເປັນທະນາຄານພັດທະນາຊົນນະບົດເພື່ອສ້າງຄວາມເຂັ້ມແຂງ ເພາະວ່າທະນາຄານນະໂຍບາຍ ຫລື ທະນາຄານພັດທະນາຊົນນະບົດນີ້ ແມ່ນການປ່ອຍກູ້ໃຫ້ຄົວເຮືອນແກ້ໄຂຄວາມທຸກຍາກ, ກຸ່ມການຜະລິດ ຫລື ສະຫະກອນ. ພວກເຮົາຈະມີນະໂຍບາຍ ເພາະວ່າພວກເຮົາຢາກໃຫ້ທຸລະກິດໄປທຸລະກິດລວມໝູ່ຫລາຍຂຶ້ນ ຖ້າວ່າເປັນສະຫະກອນກູ້ ຫລື ກຸ່ມການຜະລິດກູ້ດອກເບ້ຍອາດຈະຕ່ຳລົງ, ແຕ່ວ່າຄອບຄົວກູ້ອາດຈະສູງກວ່າໜ້ອຍໜຶ່ງ ເພື່ອເຮົາຢາກຍູ້ເຂົ້າເປັນການຜະລິດເປັນກຸ່ມມັນຄ່ອຍຕົ້ນທຶນຈະຕ່ຳ, ການນຳໃຊ້ເຕັກໂນໂລຊີເຂົ້າສູ່ການຜະລິດມັນຈະໄດ້ດີຂຶ້ນ ອັນນີ້ຂ້າພະເຈົ້າຈະເວົ້າຕື່ມໃນມື້ອື່ນ.

ສຸດທ້າຍເວົ້າເລື່ອງເງິນເຟີ້ 9%. ຂ້າພະເຈົ້າກໍອະທິບາຍແລ້ວວ່າໃນຄວາມຈິງແລ້ວ ຖ້າບໍ່ມີຫຍັງ ຖ້າບໍ່ເກີດສະພາບຫຍັງທີ່ນອກເໜືອຈາກພວກເຮົາຄາດຄິດກັນ ສະພາບເສດຖະກິດໂລກເຮົາ ແລະ ສະພາບເສດຖະກິດຂອງພວກເຮົາ, ຂ້າພະເຈົ້າຄິດວ່າ ລາຄານ້ຳມັນເປັນຕົ້ນຕໍຂອງເງິນເຟີ້ມັນກະຊິຢູ່ນີ້ລະ, ແຕ່ວ່າປັດຈຸບັນນີ້ຜູ້ປະກອບການໄດ້ໄລ່ເປັນຕົ້ນທຶນໝົດແລ້ວ ປີໜ້ານີ້ເຂົາເຈົ້າກະຊິບໍ່ໄລ່ອີກ ເພາະວ່າເຂົາເຈົ້າໄລ່ເຂົ້າໄປແລ້ວໃນຕົ້ນທຶນຂອງການຜະລິດ, ການຂົນສົ່ງຂອງເຂົາເຈົ້າ. ສົມມຸດວ່າເງິນເຟີ້ຂອງໂລກ ພວກເຮົາກະຄາດຄະເນວ່າສິຫລຸດລົງ ມັນກໍຊິຫລຸດຄວາມກົດດັນລົງ, ບາດນີ້ສະເພາະບັນຫາປັດໄຈອັນທີ່ເປັນອັນອ່ອນຄ່າຂອງເງິນກີບເຮົາຈະເຫັນວ່າມັນເລີ່ມຂຶ້ນແຮງໃນເດືອນ 5 ເດືອນ 6, ມາຮອດປັດຈຸບັນນີ້ທຳອິດນີ້ແມ່ນກຸ່ມສິນຄ້າທີ່ຕິດພັນກັບລາຄານ້ຳມັນໂດຍກົງກັບສິນຄ້ານຳເຂົ້າ, ລາຄາສິນຄ້າເພີ່ມຂຶ້ນກ່ອນລະສືບຕໍ່ເພີ່ມຂຶ້ນ 2-3 ເດືອນ ແລ້ວປະຊາຊົນຈະເອົາປັດໄຈໂຕນີ້ເຂົ້າໄປໃນການຄິດໄລ່ລາຄາຂອງເຂົາເຈົ້າ, ຫລັງຈາກນັ້ນສິນຄ້າທີ່ບໍ່ຕິດພັນກັບການນຳເຂົ້າກໍເລີ່ມປັບໂຕຂຶ້ນມາຄືກັນ ເພາະວ່າມັນເຊື່ອມໂຍງກັນ. ສົມມຸດຕັດຜົມ ຂ້ອຍກໍໄດ້ຂຶ້ນລະເພາະຂ້ອຍໄປຊື້ສິນຄ້າມັນແພງ ບໍ່ກ່ຽວນຳດອກນຳລາຄານ້ຳມັນ, ກະບໍ່ກ່ຽວນຳດອກອັດຕາແລກປ່ຽນ ແຕ່ຂ້ອຍກໍຂຶ້ນຄ່າຕັດຜົມ, ຈັ່ງຊັ້ນດຽວນີ້ມັນເປັນການປັບໂຕຂອງລະບົບລາຄາໃນເສດຖະກິດ ຂ້າພະເຈົ້າຄິດວ່າມັນໃຊ້ເວລາ 5-6 ເດືອນ ມັນກໍປັບໂຕແລ້ວມັນກໍຊົງໂຕ ຫລັງຈາກນັ້ນ, ມັນກໍຖືວ່າຜົນກະທົບທີ່ມັນເກີດຂຶ້ນໃນຕົ້ນປີລາຄາມັນຈະຊົງໂຕແລ້ວມັນກໍຈະຄ່ອຍໆຫລຸດລົງ ລາຄາມັນກໍຢູ່ໂຕ, ເມື່ອລາຄາຢູ່ໂຕແລ້ວເວລາເຮົາຄິດໄລ່ CPI ແລ້ວອັດຕາປ່ຽນຕໍ່ເດືອນມັນກໍໜ້ອຍລົງ ກະຊັ້ນມັນກໍຕ້ອງລົງ, ອັນນີ້ມັນຄືແນວນັ້ນ ອັນບໍ່ແມ່ນວ່າໃຫ້ອັນນັ້ນໄດ້ສະເລ່ຍໝົດປີເນາະທ່ານຜູ້ແທນ 9%, ບໍ່ແມ່ນວ່າເດືອນໜຶ່ງເດືອນສອງໄດ້ 9% ໂລດໃດ ສະເລ່ຍໝົດແຕ່ເດືອນ 1 ຮອດເດືອນ 12 ພວກເຮົາຄາດວ່າບໍ່ເກີນ 9% ສະເລ່ຍ.



# ເພີ່ມທະວີການຮັດກຸມໃນການໃຊ້ຈ່າຍງົບປະມານ



ຄຳເຫັນຂອງທ່ານ ໄຊຍະເດດ ພຸຍຍະວົງ ສະມາຊິກສະພາແຫ່ງຊາດ ເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ

ຂ້າພະເຈົ້າ ຂໍອະນຸຍາດມີຄຳເຫັນຕິດພັນກັບທິດທາງແຜນການ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດຂອງພວກເຮົາ.

ອັນທີ 1 ຕິດພັນກັບວຽກພັດທະນາຊົນນະບົດລຶບລ້າງຄວາມທຸກຍາກນີ້ ປີນີ້ກໍເປັນປີທີ 8 ແລ້ວ ພວກເຮົາໂຮມກົງຈັກເຂົ້າກັນຕາມທິດກະທັດຫັດ ໂດຍລວມກໍເຫັນດີເປັນເອກະພາບ ແຕ່ວ່າກໍຢາກໃຫ້ປະເມີນຄືນ ຜ່ານການປະຕິບັດໃນໄລຍະຜ່ານມາກໍຖືວ່າວຽກງານພັດທະນາຊົນນະບົດລຶບລ້າງຄວາມທຸກຍາກຂອງພວກເຮົານີ້ກໍຖືວ່າຢາກຊັກຊ້າ ຖືວ່າບໍ່ມີຄວາມຄືບໜ້າ ບັນດາທ່ານເຈົ້າເມືອງຫລາຍເມືອງກະຮ້ອງໂອກແລ້ວ ມັນເປັນນຳຫຍັງແທ້, ເງິນກະປະມານ 150 ລ້ານ ແລະ ວຽກພັດທະນາຊົນນະບົດກໍເປັນວຽກທີ່ສຳຄັນ ມັນເປັນວຽກທີ່ຜັນຂະຫຍາຍແນວທາງຂອງພັກເຂົ້າສູ່ຊີວິດຕົວຈິງ ເປັນວຽກທີ່ສຳຄັນ ແລະ ຂັ້ນສູນກາງພວກເຮົາກໍໄດ້ເຕົ້າໂຮມເຂົ້າກັບກະຊວງກະສິກຳ ແລະ ປ່າໄມ້ ແລະ ຂັ້ນທ້ອງຖິ່ນ ຂອງພວກເຮົາໄດ້ໂຮມເຂົ້າກັບພະແນກກະສິກຳ ແລະ ປ່າໄມ້, ເຖິງວ່າເປັນວຽກສຳຄັນລະດັບນີ້ ແຕ່ເຮົາຊິເອົາໄປເກາະຫ້ອຍຢູ່ກະຊວງໃດໜຶ່ງ ຫລື ວ່າພະແນກການໃດໜຶ່ງໃນຂັ້ນທ້ອງຖິ່ນຂອງພວກເຮົານີ້ກະເຮັດໃຫ້ມີຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດເຮົາຈະໃຫ້ຫົວໜ້າຂະແໜງພັດທະນາຊົນນະບົດທີ່ຂຶ້ນກັບພະແນກກະສິກຳ ແລະ ປ່າໄມ້ ນຳພາບັນດາຂະແໜງການ, ບັນດາພະແນກການ ແລະ ບັນດາທ່ານເຈົ້າເມືອງ ຈັດຕັ້ງປະຕິບັດວຽກນີ້ເຫັນວ່າເປັນສິ່ງທີ່ເຮັດໄດ້ຍາກຫລາຍ ກໍຢາກສະເໜີໃຫ້ປະເມີນຄືນ ແລະ ຕິດພັນກັບການຈັດຕັ້ງປະຕິບັດງົບປະມານແຫ່ງລັດນີ້ ໂດຍສະເພາະພາກລາຍຈ່າຍ ຢາກໃຫ້ເບິ່ງຄືນຕື່ມ, ຢາກໃຫ້ເພີ່ມທະວີຄວາມຮັດກຸມຕື່ມ ເປັນຕົ້ນແມ່ນການໃຊ້ຈ່າຍງົບປະມານເຂົ້າໃນການລົງທຶນໃສ່ພື້ນຖານໂຄງລ່າງຊຶ່ງເຂດໂຍທາທິການ ແລະ ຂົນສົ່ງຂອງພວກເຮົານີ້ ທີ່ຜ່ານມາເຫັນວ່າໜີ້ສິນຂອງພວກເຮົາທີ່ເກີດຂຶ້ນຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ ຄືວ່າມະຫາສານທຽບໃສ່ກັບໝາກຜົນທີ່ໄດ້ຮັບກໍຖືວ່າບໍ່ສົມຄູ່ກັນໃດ ທາງທຸກເສັ້ນເປ່ເພ່ໝົດ, ໄລຍະຜ່ານມາພວກເຮົາມີແຕ່ແປງທາງ ພວກເຮົານີ້ເປັນແນວທາງຂອງພັກຂອງພວກເຮົາຊິກ້າວຂຶ້ນສູ່ສັງຄົມນິຍົມ ການທີ່ຈະກ້າວຂຶ້ນສູ່ສັງຄົມນິຍົມ ມັນຕ້ອງເວົ້າເຖິງຕາໜ່າງການບໍລິການທາງສັງຄົມ, ສຶກສາ, ສາທາ ກໍຕ້ອງໃຫ້ມີຄຸນນະພາບ ອັນນີ້ພວກເຮົາສຸມໃສ່ແຕ່ການແປງທາງຫັນນະຢາກໃຫ້ມີການສ້າງທາງໃນຕໍ່ໜ້າຢາກໃຫ້ມີການລັກສະນະບຸກທະລຸຂຶ້ນຕື່ມ ເຮັດກໍໃຫ້ມັນແລ້ວອີ່ຫລີ ແລ້ວກະແລ້ວເລີຍ, ສ້ອມແປງລະສ້ອມແປງເລັກໜ້ອຍໃນຕໍ່ໜ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 2023 ກໍຢາກໃຫ້ສຸມໃສ່ສ້າງໜ່ວຍສ້ອມແປງເສັ້ນທາງຂັ້ນແຂວງ, ຂັ້ນເມືອງ ວຽກເລັກໆນ້ອຍໆໃຫ້ພວກເພິ່ນຫັນເຮັດ, ຊິອີງໃສ່ແຕ່ທາງບໍລິສັດໃຫ້ເຂົາເຈົ້າຂຶ້ນແຜນມາເອົາເງິນຖືວ່າມັນຢາກຄອງເດີມໂພດ ອັນໃດທີ່ພວກເຮົາເຮັດໄດ້ກໍເຮັດ, ອັນໃດທີ່ມັນໃຫຍ່ ໂຄງການລະດັບໃຫຍ່ກໍໃຫ້ມີການປະມູນຈັດຊື້ຈັດຈ້າງຕາມກົດໝາຍ ວ່າດ້ວຍການປະມູນຈັດຊື້ຈັດຈ້າງ ໃຫ້ມີຄວາມຮັດກຸມ ເພາະວ່າມາເບິ່ງແລ້ວອ້າຍນ້ອງຜູ້ທີ່ໄປຈັດເກັບລາຍຮັບເຂົາກໍຢາກທໍ້ຖອຍຄືກັນ ຜູ້ໄປເກັບລະໄປເລາະເກັບປະຊາຊົນຊົນກະເຄາະຂອດໃຫ້ລະຜູ້ໃຊ້ຈ່າຍຕົວຈິງມັນບໍ່ເກີດປະໂຫຍດສູງສຸດໃຫ້ແກ່ສັງຄົມກໍຄືການພັດທະນາເສດຖະກິດ-ສັງຄົມຂອງພວກເຮົາ.

ອັນຕິດພັນກັບວຽກສິ່ງແວດລ້ອມນີ້ ຂ້າພະເຈົ້າກໍຢາກສະເໜີໃຫ້ເບິ່ງຄືນ ເບິ່ງການນຳເຂົ້າຂີ້ເຫຍື້ອນີ້ເພື່ອມາຜະລິດເປັນແບບຢ່າງ Recycle ຕາມຂ້າພະເຈົ້າເກັບກຳຄືວ່າເຂົາຈ້າງມາຖິ້ມບ້ານເຮົາຫັນນາ ແຕ່ໃນກົງກັນຂ້າມທັງພັກທັງລັດຂອງພວກເຮົາ ມີທິດການພັດທະນາຕາມທິດຍືນຍົງສີຂຽວຫັນນະ ຂີ້ເຫຍື້ອທີ່ເອົາເຂົ້າມາຜະລິດກໍຕ້ອງມີສິ່ງເສດເຫລືອ ເຮົາຊິເຮັດແນວໃດກັບມັນຕາມທີ່ໄດ້ຍິນມາຕູ້ໜຶ່ງ 8,000-10,000 ໂດລາ/ຄອນທີເນີ ກະຊວງການເງິນໄດ້ບໍ່ເງິນຈາກຕົວນີ້ນະ ເຮົາໄດ້ຫຍັງຈາກຕົວນີ້ ຢາກສະເໜີເບິ່ງຄືນຕື່ມ ຢູ່ແຂວງສະຫວັນນະເຂດຂອງພວກເຮົາລະໄປຜະລິດຢູ່ຂ້າງນ້ຳຂອງໂລດ ຖົງຢາງທີ່ເຂົາເອົາມາຖົງຢາງຫໍ່ຄົນຕາຍກໍມີ ລ້າງລົງມາກໍ່ປ່ອຍລົງນ້ຳ ພວກເຮົາລະມີທັງອາບທັງກິນລະອັນນີ້ກໍເບິ່ງຄືນຕື່ມ ຂ້າພະເຈົ້າໃນນາມຜູ້ແທນທີ່ຈັດຕັ້ງປະຕິບັດ ຫລື ວ່າເຮັດໜ້າທີ່ການເມືອງຢູ່ໃນທ້ອງຖິ່ນຮາກຖານ ກໍພະຍາຍາມເຈາະຈີ້ມຢູ່ແຕ່ມັນກໍບໍ່ມີຄວາມຄືບໜ້າ, ບັນດາຂະແໜງການກໍບໍ່ໃຫ້ຄວາມຮ່ວມມືເທົ່າທີ່ຄວນ.

ນອກຈາກຫັນວຽກງານສາທາລະນະສຸກຂອງພວກເຮົານີ້ ຢາກໃຫ້ເບິ່ງຄືນຄວາມສະອາດໃນໂຮງໝໍ ລາຍຮັບຂອງວິຊາການຂອງພວກເຮົາກໍພໍມີຢູ່ ແລະ ເງິນທີ່ພວກເຮົາທຸ້ມໃສ່ວຽກສາທາລະນະສຸກກໍບໍ່ແມ່ນໜ້ອຍ ແຕ່ວ່າຄວາມເປິະເປື້ອນຂອງໂຮງໝໍ ເດືອນໜຶ່ງເຮົາຊື້ສີມາທາ, ຊື້ນ້ຳຢາທຳຄວາມສະອາດມາຖູກໍຊິບໍ່ໄດ້ແດ່ບໍ ເປັນຕາອາຍ ເຂົ້າໄປໂຮງໝໍແຫ່ງຊິໄຂ້ຕື່ມຊ້ຳ ເລື່ອງຄຸນນະພາບຂອງພະນັກງານພວກເຮົາຜູ້ໃດກໍຈົບແຕ່ດ່ອກເຕີມາແຕ່ຕ່າງປະເທດໝົດ ອັນນີ້ກໍຢາກໃຫ້ເບິ່ງຄືນ ຂ້າພະເຈົ້າກໍມີຄຳເຫັນໂດຍສັງເຂບ.

# ການພັດທະນາຊົນນະບົດ



ຄຳເຫັນຂອງທ່ານ ບຸນສອນ ເພັດລາວັນ ສະມາຊິກສະພາແຫ່ງຊາດ ເຂດເລືອກຕັ້ງທີ 10 ແຂວງວຽງຈັນ ຂ້າພະເຈົ້າຂໍປະກອບຄຳເຫັນບາງຈຸດຕໍ່ກັບພາກບົດສະຫລຸບຕີລາຄາຄາດຄະເນການຈັດຕັ້ງແຜນພັດທະນາເສດຖະກິດແຫ່ງຊາດ ແຜນງົບປະມານ ແລະ ແຜນເງິນຕາ ປີ 2022 ແລະ ທິດທາງແຜນການ ປີ 2023 ພື້ນຖານກໍເຫັນດີເປັນເອກະພາບສູງ ຕໍ່ບົດສະເໜີ ຂອງການນຳຝ່າຍລັດຖະບານ ຂ້າພະເຈົ້າ ຂໍລົງເລິກຄື:

ບັນຫາທີ 1 ຕໍ່ແຜນພັດທະນາເສດຖະກິດສັງຄົມ ປີ 2023 ຕາມບົດປະກອບຄຳເຫັນຂອງສະພາແຫ່ງຊາດ ແລະ ຄຳເຈາະຈີ້ມຂອງທ່ານປະທານ ຄືວຽກງານພັດທະນາຊົນນະບົດ ວຽກງານແກ້ໄຂຄວາມທຸກຍາກ ເຊິ່ງຢູ່ແຂວງພວກຂ້າພະເຈົ້າປະເມີນຕາມ 7-8 ຄອບຄົວກະເພີ່ມຂຶ້ນເປັນ 7 ພັນປາຍກວ່າຄອບຄົວເຫັນວ່າລາຍຮັບຫັນຕ່ຳ ຖ້າປະເມີນຕາມ 309 ກໍຍັງແຕ່ 2 ບ້ານ ທີ່ຍັງທຸກຍາກ ແຕ່ວ່າຢູ່ຈຸດນີ້ຂ້າພະເຈົ້າຂໍສະເໜີວ່າທຶນຂຶ້ນຈາກ 2 ຕື້ ຂຶ້ນອີກຈຳນວນໜຶ່ງ ເປັນຫຍັງຈຶ່ງວ່າແນວນີ້ ເຫດຜົນໜຶ່ງ ເພາະວ່າວຽກງານເສດຖະກິດເວົ້າເລື່ອງປາກເລື່ອງທ້ອງມັນມີສ່ວນຮ່ວມກວມປະຊາຊົນຢູ່ແຂວງຂອງພວກຂ້າພະເຈົ້າ 80% ເຮັດກະສິກຳ ເຫັນວ່າຢູ່ຈຸດນີ້ ເພື່ອປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ.

ບັນຫາທີ 2 ການແກ້ໄຂຜົນກະທົບເລື່ອງເກົ່າ ທາງລົດໄຟລາວ-ຈີນ ທ່າງດ່ວນນະຄອນຫລວງ-ວັງວຽງ ກໍເຫັນວ່າໄດ້ຮັບໜັງສືຈາກສະພາແຫ່ງຊາດ ເຊິ່ງແຈ້ງໄປ ແລະ ສົມທົບກັບຄະນະນຳທີ່ກ່ຽວຂ້ອງເຫັນວ່າມາຮອດປະຈຸບັນນີ້ກໍເປັນການສະເໜີແລກປ່ຽນບາງເມືອງກໍກວມເອົາເມືອງໂພນໂຮງ, ເມືອງຫີນເຫີບ, ວັງວຽງ, ກາສີ ທາງລົດໄຟລາວ-ຈີນ ກໍຍັງມີຈຳນວນໜຶ່ງວ່າການແກ້ໄຂຜົນກະທົບ ກໍຍັງບໍ່ທັນແລ້ວຍັງປະມານ 4 ຄອບຄົວ, ນອກຈາກນັ້ນ, ກໍຍັງອອກໃບແຈ້ງທີ່ດິນທີ່ປະຊາຊົນຈະເສຍໃຫ້ລັດພວກເຮົານັ້ນ ຖືວ່າພາກສ່ວນຂະແໜງການທີ່ກ່ຽວຂ້ອງກໍເຮັດຢູ່ ແຕ່ວ່າກໍບໍ່ທັນກັບຄວາມຮຽກຮ້ອງຕ້ອງການຂອງປະຊາຊົນກ່ຽວກັບການຕັດເນື້ອທີ່ດິນອອກ ທີ່ມັນຖືກທາງກໍຍັງຢູ່ ແລະ ກໍຈະໄດ້ປະສານສົມທົບກັນຕື່ມ.

ບັນຫາທີ 3 ຕໍ່ກັບປາກົດການຫຍໍ້ທໍ້ທີ່ທາງປະຊາຊົນ ທີ່ທາງຄະນະນຳສູນກາງ ແລະ ທ້ອງຖິ່ນ ເປັນຕົ້ນຈຸດທາງດ່ວນທີ່ຄົນບໍ່ດີຈຳນວນໜຶ່ງທີ່ໄປລັກເອົາເສົາ, ລັກເອົາເຫລັກ, ລັກເອົາໂຄງ, ທາງຄະນະນຳ, ທາງສະພາຂອງພວກເຮົາກໍໄດ້ໜັງສືສະເໜີຫາກະຊວງທີ່ກ່ຽວຂ້ອງ ຍທຂ ນັບແຕ່ຂັ້ນເມືອງ ຂັ້ນແຂວງ ເຫັນວ່າໄປສົມທົບກັບເຈົ້າຂອງຜູ້ເປັນເຈົ້າຂອງລົງທຶນທາງດ່ວນນີ້ ເຫັນວ່າພວກເຮົາຢາກເອົາຊາວໜຸ່ມ ຫລື ວ່າປະຊາຊົນຈຳນວນໜຶ່ງໄປແປງໄປດຶງຂຶ້ນເຫລັກກັນໂຄງທີ່ມັນຕົກ ເພິ່ນວ່າບໍ່ຖືກລະບຽບມັນ, ມັນບໍ່ຖືກກັບທາງດ່ວນຂອງສາກົນ. ສະນັ້ນ, ເພື່ອຢາກຈະແກ້ໄຂມັນກໍເປັນອັນອາຍໆ. ແຂວງວຽງຈັນ ຄືວ່າມີຂີ້ລັກເອົາແທ້ເອົາວ່າລັກຂອງສ່ວນລວມແລ້ວຢາກຝາກມາຍັງຂະແໜງການທີ່ກ່ຽວຂ້ອງຢາກໃຫ້ຊ່ວຍແຂວງພວກຂ້າພະເຈົ້າ ອາຍຄົນເກົາຫລີ ອາຍຄົນໄທ ເພາະວ່າເພິ່ນບໍ່ໃຫ້ແປງວ່າຖ້າຈະແປງຕ້ອງໃຫ້ຖືກເຕັກນິກຂອງສາກົນ ເປັນການສະເໜີຢາກແລກປ່ຽນຄືຢາກໃຫ້ພາກສ່ວນກ່ຽວຂ້ອງຈຶ່ງໄດ້ຊ່ວຍ ແລະ ທາງອອກທັງໝົດນີ້ວຽກທີ່ຄົງຄ້າງນີ້ຕິດພັນກັບບົດຕີລາຄາຂອງລັດຖະບານ ອັນໜຶ່ງແມ່ນຂອດການປະສານສົມທົບລະຫວ່າງສູນກາງ ແລະ ທ້ອງຖິ່ນ ຕາມການແບ່ງຂັ້ນຄຸ້ມຄອງພວກເຮົາ, ພວກເຮົາກໍມີແລ້ວນິຕິກຳ ຫລື ກົດໝາຍຕ່າງໆ ເພື່ອການປະສານສົມທົບກັນໃຫ້ມັນເປັນຄວາມເອກະພາບຕົວຢ່າງການຄຸ້ມຄອງລົດແກ່ທາດຕ່າງໆຈາກແຕ່ລະແຂວງ ເຊິ່ງໄປໂຮມຢູ່ຈຸດສີ່ງຂຽນວ່າວັງວຽງ ເຫັນວ່າທາງ 13 ເຮົາ, ປີນີ້ເຫັນວ່າກໍມີຄວາມຍຸ້ງຍາກພໍສົມຄວນໄລຍະ 2-3 ເດືອນໄລຍະລະດູຝົນປະຊາຊົນ ຖືວ່າລົດນ້ອຍກໍຫຽວບໍ່ໄດ້ເຮັດໃຫ້ການສົ່ງສິນຄ້ານັ້ນກໍມີຄວາມຫຍຸ້ງຍາກພໍສົມຄວນ ເຫດຜົນຈຳນວນໜຶ່ງ ກໍແມ່ນຕາງເກີນນ້ຳໜັກລົດກໍແມ່ນລົດຄົນຕ່າງປະເທດ ລົດຫວຽດນາມ, ລົດ ສປ.ຈີນ ລົດລາວເຮົານີ້ແມ່ນແຕ່ຄັນນ້ອຍ ລົດໃຫຍ່ແມ່ນແຕ່ລົດພວກເພິ່ນໝົດ ລົດແກ່ແຮ່ນີ້ມາແຕ່ທາງໄຊສົມບູນ, ທາງຄຳມ່ວນ ສະພາບກໍເປັນແນວນັ້ນຕໍ່ມາກໍຢາກໃຫ້ເອົາໃຈໃສ່ປະຕິບັດນິຕິກຳ ຫລື ວ່າລະບຽບຄຸ້ມຄອງພວກເຮົາ ກໍມີໝົດແຕ່ວ່າການຈັດຕັ້ງປະຕິບັດນັ້ນບໍ່ໄດ້ຮັບຜົນດີເທົ່າທີ່ຄວນ ແລະ ພວກເຮົາຈະຄິດວ່າຈະປຸກລະດົມປະຊາຊົນມີສ່ວນຮ່ວມ ເປັນຕົ້ນແມ່ນການປົກປັກຮັກສາຄວາມງາມສະອາດຕາມທາງເລກ 13 ເໜືອ ແລະ ກໍທາງລົດໄຟລາວ-ຈີນ ທາງດ່ວນນະຄອນຫລວງ-ວັງວຽງ ເຫັນວ່າມັນຕິດພັນກັບການທ່ອງທ່ຽວ ນັກທ່ອງທ່ຽວກໍເຫັນວ່າມີຫລາຍພໍສົມຄວນແລ້ວ ເຊັ່ນ: ໄທ, ເກົາຫລີ ແລະ ອື່ນໆ ເພິ່ນກໍໄດ້ຫ້ວງພວກເຮົາວ່າການຖິ້ມຂີ້ເຫຍື້ອກໍຢາກໃຫ້ສູນກາງລົງຊ່ວຍພວກເຮົາ ແຕ່ວ່າການສຶກສາອົບຮົມກໍຫລາຍພໍສົມຄວນ ແຕ່ກໍບໍ່ໄດ້ຜົນເທົ່າທີ່ຄວນ ແຕ່ວ່າພວກເຮົາຈະມີໂຄງການເພື່ອຊ່ວຍບັນເທົາ ແລະ ຈຳນວນໜຶ່ງກໍບໍ່ນັບຖືລະບຽບວິໄນ ປະຊາຊົນຢາກຖິ້ມຊະຊາຍກໍຖິ້ມໄປເລີຍເຮັດໃຫ້ຄວາມສະອາດບໍ່ໄດ້ດີເທົ່າທີ່ຄວນ ເພື່ອຈັດຕັ້ງປະຕິບັດໃນການປົກປັກຮັກສານັ້ນ ພວກເຮົາກໍຈະໄດ້ສືບຕໍ່ສຶກສາອົບຮົມເປັນຫລັກ;

## ຢາກໃຫ້...

ຄອບຄົວໃຫ້ພົ້ນທຸກຕາມແຜນ 5 ປີ 2021-2025 ໃນຈຳນວນ 204,360 ຄອບຄົວ, ຖ້າຮອດປີ 2025 ແລະ ຊິມາເພີ່ມໃສ່ຄອບຄົວທີ່ສາມາດປະເມີນຜ່ານແລ້ວມີ 964,000 ກວ່າຄອບຄົວນັ້ນ ທົ່ວປະເທດເຮົາຈະມີຄອບຄົວພົ້ນທຸກ 1,168,000 ກ່ວາຄອບຄົວ ຕົວເລກນີ້ ແມ່ນຕົວເລກປະເມີນໄລຍະຕົ້ນ ຂອງສະພາບພົ້ນທຸກພັດທະນາ ຕາມດຳລັດ 348 ວ່າດ້ວຍມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາຂອງກະຊວງກະສິກຳ. ສຳລັບໂຕເລກທີ່ຄາດວ່າຈະສຳເລັດ 30.000 ກ່ວາຄອບຄົວນີ້ ສະເໜີໃຫ້ພິຈາລະນາເບິ່ງລະອຽດຊັດເຈນຕື່ມ ຂ້າພະເຈົ້າມີຂໍ້ສັງເກດວ່າຕາມມີຂໍ້ມູນໃນທ້າຍປີ 2018 ນີ້ ທະນາຄານໂລກໄດ້ມີຂໍ້ສັງເກດ ໂດຍສະເພາະແມ່ນໄດ້ມີກຳນົດເສັ້ນຄວາມທຸກຍາກ 2 ໂດລາຕໍ່ຄົນຕໍ່ວັນ ແລະ ປາກົດວ່າມີຄົນທຸກຍາກ 400 ລ້ານຄົນໃນທົ່ວໂລກ ແຕ່ພາຍຫລັງປີ 2019 ພະຍາດໂຄວິດລະບາດ ໄດ້ມີການປະເມີນເຫັນວ່າ ຄົນທຸກຍາກນີ້ເພີ່ມຂຶ້ນອີກ 300 ລ້ານຄົນ ແລະ ສຳລັບປະເທດພວກເຮົານີ້ ຜ່ານການສຳຫລວດ ແລະ ການໃຊ້ຈ່າຍຄົວເຮືອນ ໃນລະຫວ່າງ 200.000-1.500.000 ກີບນີ້ ການກຳນົດເສັ້ນຄວາມທຸກຍາກນີ້ແມ່ນມີ 2 ລະດັບຂອງພວກເຮົານີ້ ເອົາຈາກ 469.184 ຂຶ້ນໄປ ແມ່ນຄອບຄົວພົ້ນທຸກ ແລະ ຖ້າຖືເອົາ 469.000 ລົງມາຮອດ 289.083 ກີບນີ້ ກໍຖືວ່າເປັນຄອບຄົວພົ້ນທຸກ ແຕ່ກໍຍັງມີຄວາມສ່ຽງທີ່ຈະກັບມາທຸກຕໍ່ອີກ ແລະ ຍ້ອນເຫດຜົນນີ້ ຈຶ່ງຢາກສະເໜີໃຫ້ພິຈາລະນາເພາະວ່າປະເທດເຮົາຫາກໍຜ່ານພົ້ນ ໄດ້ຮັບຜົນກະທົບຈາກໂຄວິດ-19 ແລະ ໄດ້ຮັບຜົນກະທົບຈາກສະພາບພາຍນອກປະເທດ ແລະ ພາຍໃນປະເທດ ເປັນຕົ້ນລາຄາສິນຄ້າເພີ່ມສູງຂຶ້ນ, ການອ່ອນຄ່າຂອງເງິນກີບ ພວກເຮົາເຊື່ອວ່າຜົນກະທົບອັນນີ້ ຈະເຮັດໃຫ້ຈຳນວນຄອບຄົວທີ່ພົ້ນທຸກມີຂອບບອບບາງ ຈະກັບຄືນມາທຸກຄືນອີກ ຈັ່ງຊັ້ນຢາກໃຫ້ເບິ່ງຄືນຕົວເລກຕົວນີ້ທີ່ເປັນຄາດໝາຍ ທີ່ເອົາໃສ່ໃນບົດສະຫລຸບວ່າປະຕິບັດໄດ້ ແລະ ສຳລັບປີ 2023 ການກຳນົດຕົວເລກຄາດໝາຍແມ່ນ 28 ກ່ວາພັນ ເຊິ່ງວ່າຢູ່ໃນ 5 ປີແມ່ນ 40 ກ່ວາພັນ ຈັ່ງຊັ້ນຄັນເອົາລົງແນວນີ້ ເວລາພວກເຮົາຮອດທ້າຍປີ 2025 ນີ້ມັນຊິໄດ້ສູ້ຊົນໜັກກວ່າເກົ່າບໍ່ໂຕນີ້ ຂໍໃຫ້ເບິ່ງລະອຽດຕື່ມ. ອັນນັ້ນແມ່ນຢາກສະເໜີຕໍ່ລັດຖະບານໄດ້ພິຈາລະນາ ສຳລັບປະເທດພວກເຮົານີ້ກໍໄດ້ເຮັດສຳເລັດໄດ້ຈັດຕັ້ງປະຕິບັດ ໂດຍສະເພາະແມ່ນ 4 ບັນຫາທີ່ພວກເຮົາໄດ້ເຮັດກ່ຽວກັບບັນຫາພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃນຫັ້ນອັນທີ 1 ແມ່ນພວກເຮົາໄດ້ຕອບສະໜອງສິ່ງທີ່ຈຳເປັນໃນການດຳລົງຊີວິດຊ່ວຍເຂົາເຈົ້າ ເປັນຕົ້ນ: ເສັ້ນທາງ, ໂຮງຮຽນ, ສຸກສາລາ, ນ້ຳສະອາດຕ່າງໆນີ້ກໍໄດ້ເຮັດ.

ບັນຫາທີ 2 ແມ່ນການມອບຊັບສິນຫາເງິນໃຫ້ແກ່ເຂົາເຈົ້າ ພວກເຮົາຮັບຮູ້ນຳກັນວ່າ ຄົນຢູ່ປະເທດເຮົາສ່ວນຫລາຍແມ່ນຢູ່ໃນຊົນນະບົດມີປະມານ 69% ແລະ ປະກອບອາຊີບເປັນຊາວກະສິກຳແມ່ນ 90 ກວ່າເປີເຊັນ ຜ່ານມາ ການມອບດິນ ມອບປ່າ, ການມອບແນວພັນພືດ ພັນສັດນີ້ ພວກເຮົາໄດ້ເຮັດ ແຕ່ວ່າພວກເຮົາບໍ່ໄດ້ຕິດຕາມຄຸ້ມຄອງເປັນຢ່າງດີ ຍົກຕົວຢ່າງໃນທ້ອງຖິ່ນພວກຂ້າພະເຈົ້ານີ້ ມອບເປັນສັດໃຫ້ ມາຮອດປະຈຸບັນນີ້ ກະບໍ່ໄປຮອດໃສ ຊອກຫາກະບໍ່ເຫັນ, ມອບກອງທຶນບ້ານກໍຄືກັນ ເກັບກູ້ກະບໍ່ໄດ້ ອັນນີ້ແມ່ນຕ້ອງໄດ້ເຮັດຢ່າງຕໍ່ເນື່ອງ ໄດ້ເຮັດຢ່າງເລິກເຊິ່ງແທ້ໆ ເພື່ອໃຫ້ສິ່ງທີ່ພວກເຮົາລົງທຶນລົງຮອນໄປເກີດຜົນປະໂຫຍດ ໃຫ້ສາມາດລຶບລ້າງໃຫ້ໄດ້ແທ້ໆ ອັນນັ້ນແມ່ນຂ້າພະເຈົ້າຢາກສະເໜີ.

ບັນຫາທີ 3 ແມ່ນບັນຫາທີ່ໄດ້ລົງພົບປະປະຊາຊົນ ເຂົາເຈົ້າສະເໜີຝາກມານີ້ວ່າ ຢາກໃຫ້ລັດຖະບານພາກສ່ວນທີ່ກ່ຽວຂ້ອງ ໄດ້ມີການປະເມີນຢ່າງແທ້ຈິງເບິ່ງດູວ່າການທົດລອງຂຸດຄົ້ນແຮ່ເຫລັກ ຜ່ານການຈັດຕັ້ງປະຕິບັດຕົວຈິງໄດ້ຮັບຜົນປະໂຫຍດໜ້ອຍຫລາຍສ່ຳໃດ ເພາະວ່າໃນທ້ອງຖິ່ນພວກຂ້າພະເຈົ້າ ພາຍຫລັງມີການຂຸດຄົ້ນ ມີການຂົນສົ່ງ ແລະ ມີການໄປຈຳໜ່າຍແຮ່ເຫລັກ ເຫັນວ່າມີຫລາຍອັນທີ່ເປັນການກະທົບຕໍ່ຊີວິດຕົວຈິງຂອງປະຊາຊົນເປັນຕົ້ນນີ້ແມ່ນເສັ້ນທາງນີ້ການໄປ-ມາຫຍຸ້ງຍາກ ສ້າງຄວາມສັບສົນຫລາຍອັນ ໂດຍສະເພາະແມ່ນແຕ່ກ່ອນຈາກເທດສະບານແຂວງມາຫານະຄອນຫລວງໃຊ້ເວລາ 4 ຊົ່ວໂມງ, ແຕ່ປັດຈຸບັນນີ້ຕ້ອງແມ່ນ 5 ຫລື 7 ຊົ່ວໂມງ. ອັນທີ 2 ແມ່ນເສັ້ນທາງເປ່ເພ່ຫລາຍຈາກເທດສະບານມາຫາເມືອງລ້ອງຊານ ແຕ່ກ່ອນແມ່ນປູຢາງ ດຽວນີ້ແມ່ນເພ່ໝົດ ເປັນທາງດິນ ທາງຫີນໄປແລ້ວ ອັນນັ້ນແມ່ນຢາກສະເໜີເບິ່ງຄືນຕື່ມ ປະຊາຊົນຝາກມາວ່າໃຫ້ພິຈາລະນາເບິ່ງລະອຽດ.

ບັນຫາທີ 4 ແມ່ນຕໍ່ກັບເປົ້າໝາຍທີ 6 ແມ່ນການຄຸ້ມຄອງບໍລິຫານລັດໃຫ້ມີປະສິດທິພາບ ສັງຄົມມີຄວາມສະເໝີພາບ ຕໍ່ບັນຫານີ້ ຍັງເຫັນວ່າພວກເຮົາຍັງເຮັດບໍ່ທັນໜັກແໜ້ນເຂັ້ມແຂງ ໂດຍສະເພາະແມ່ນການບັງຄັບໃຊ້ກົດໝາຍຂອງລັດຖະບານໃຫ້ມີຜົນສັກສິດ ໂດຍສະເພາະຢູ່ຂັ້ນທ້ອງຖິ່ນ ເຫັນວ່າຍັງມີຫລາຍບ່ອນທີ່ລະເມີດກົດໝາຍກ່ຽວກັບສິ່ງແວດລ້ອມ, ກ່ຽວກັບປ່າຕ່າງໆ ແລະ ດິນ ຍັງມີຄົນຈັບຈອງດິນຊະຊາຍ ທີ່ເຫັນວ່າບໍ່ທັນຖືກຕ້ອງຕາມກົດໝາຍ ແຕ່ເຂົາເຈົ້າເຫລົ່ານັ້ນບໍ່ໄດ້ຖືກປະຕິບັດວິໄນລົງໂທດອັນໃດ ອັນນີ້ເປັນຄວາມຫຍຸ້ງຍາກທີ່ປະຊາຊົນສະເໜີ ຜ່ານການຈັດຕັ້ງຂອງສະພາພວກເຮົາມາ ເພື່ອມາສະເໜີຕໍ່ລັດຖະບານໃຫ້ພວກເຮົາພິຈາລະນາ. ທັງໝົດນັ້ນ ແມ່ນພວກຂ້າພະເຈົ້າໃນນາມຕາງໜ້າປະຊາຊົນເຂດ 18 ໄດ້ສະເໜີເພື່ອໃຫ້ລັດຖະບານໄດ້ພິຈາລະນາ.

# ເອົາໃຈໃສ່ການຄຸ້ມຄອງທີ່ດິນ



ຄຳເຫັນຂອງທ່ານ ສົມຈິດ ທັບລະກອນ ສະມາຊິກສະພາແຫ່ງຊາດ ເຂດເລືອກຕັ້ງທີ 2 ແຂວງຜົ້ງສາລີ ຕໍ່ບົດລາຍງານຂອງລັດຖະບານກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ.

ໂດຍພື້ນຖານ ຂ້າພະເຈົ້າເຫັນດີເປັນເອກະພາບຕໍ່ບົດລາຍງານແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດຖະບານທີ່ໄດ້ສະເໜີໄປໃນມື້ວານນີ້ແລ້ວ ເຊິ່ງກໍສະແດງຄວາມຊົມເຊີຍຕໍ່ລັດຖະບານທີ່ໄດ້ມີຄວາມພະຍາຍາມໃນການແກ້ໄຂບັນຫາເສດຖະກິດພາຍໃນປະເທດ ເຊິ່ງມີຫລາຍດ້ານທີ່ມີລັກສະນະທີ່ພົ້ນເດັ່ນ ແລະ ດີຂຶ້ນ, ເຖິງວ່າພວກເຮົາຈະພົບຫລາຍບັນຫາ ແຕ່ກໍສາມາດສູ້ຊົນ ແລະ ແກ້ໄຂບັນຫາໄດ້ຫລາຍດ້ານ. ສະນັ້ນ, ຢູ່ໃນຈຸດນີ້ ຂ້າພະເຈົ້າຂໍອະນຸຍາດແລກປ່ຽນບາງຈຸດດັ່ງນີ້:

**ບັນຫາທີໜຶ່ງ** ຂ້າພະເຈົ້າຂໍສະເໜີແລກປ່ຽນກ່ຽວກັບການຄຸ້ມຄອງທີ່ດິນ ຕາມບົດລາຍງານຂອງລັດຖະບານ ກໍເຫັນວ່າພວກເຮົາບໍ່ສາມາດບັນລຸໄດ້ໃນການຂຶ້ນທະບຽນ ແລະ ອອກໃບຕາດິນ, ນັບແຕ່ການຂຶ້ນສຳມະໂນທີ່ດິນ ໃນຂອບເຂດທົ່ວປະເທດ. ໂດຍສະເພາະສຳລັບແຂວງຂອງພວກຂ້າພະເຈົ້າ ແຂວງຜົ້ງສາລີຂອງພວກເຮົາ ເຊິ່ງເບິ່ງໃນການຈັດຕັ້ງປະຕິບັດຕົວຈິງໃນການຂຶ້ນທະບຽນອອກໃບຕາດິນນີ້ ແມ່ນສຳເລັດພຽງແຕ່ 78%, ການຂຶ້ນສຳມະໂນທີ່ດິນສຳເລັດພຽງແຕ່ 39,7% ເທົ່ານັ້ນ. ສະນັ້ນ, ການຂຶ້ນທະບຽນທີ່ດິນໃນໄລຍະຜ່ານມາ ສ່ວນຫລາຍພວກເຮົາກໍຍັງອອກໃບຕາດິນ ສ່ວນຫລາຍກໍຍັງເປັນປະເພດດິນປຸກສ້າງ, ສຳຫລັບດິນປະເພດອື່ນແມ່ນພວກເຮົາຍັງບໍ່ທັນໄດ້ຈັດຕັ້ງປະຕິບັດເທົ່າທີ່ຄວນ ແລະ ດິນປຸກສ້າງເອງ ໃນການອອກໃບຕາດິນກໍຖືວ່າເປັນຈຳນວນໜ້ອຍ, ເຂດຊົນນະບົດຫ່າງໄກຊອກຫລີກກໍຖືວ່າຍັງຫລາຍ ບາງທີ່ພວກເຮົາຍັງບໍ່ສາມາດຈັດຕັ້ງປະຕິບັດໄດ້, ບາງຄຳເຫັນຂອງຜູ້ແທນແມ່ນພວກເຮົາໄປແຕ່ເຂດທີ່ສະດວກ ອັນນັ້ນ ອັນທີໜຶ່ງ.

**ບັນຫາທີສອງ** ການອອກສຳມະໂນທີ່ດິນນີ້ຄືກັນ ຖືວ່າປະຕິບັດໄດ້ໜ້ອຍ ສ່ວນຫລາຍແມ່ນການໄປອອກສຳມະໂນທີ່ດິນນີ້ຢູ່ຊົນນະບົດຮາກຖານແມ່ນເຂົາບໍ່ແຈ້ງ ເຂົາຈະເຊື່ອງອຳຕອນດິນ ປະຊາຊົນຈິ່ງມີດິນ 4-5 ຕອນ ເຂົາຈະອອກວ່າຕອນ 1-2 ຕອນເທົ່ານັ້ນ ເປັນຈຳນວນຫລາຍ. ເຫດຜົນຂອງເຂົາເຈົ້າແມ່ນບໍ່ຢາກເສຍພັນທະ ບໍ່ຢາກເສຍຄ່າທຳນຽມຄ່າທີ່ດິນ ອັນນີ້ລະແມ່ນອັນທີໜຶ່ງ, ຕິດພັນກັນນີ້ ການຄຸ້ມຄອງ ແລະ ສິດໃນການຊື້-ການຂາຍ ແລະ ການໂອນທີ່ດິນ, ການນຳໃຊ້ກໍຍັງບໍ່ທັນເຂົ້າສູ່ລະບຽບ ເຊິ່ງເຮັດໃຫ້ພວກເຮົາເກັບຄ່າທຳນຽມໃນຫລາຍໆເທື່ອບໍ່ໄດ້ຕາມແຜນ ອັນນັ້ນອັນໜຶ່ງ. ເຊິ່ງຈາກບັນຫາດັ່ງກ່າວນີ້ ຂ້າພະເຈົ້າ ຂໍສະເໜີທາງລັດຖະບານຄືນ ໃຫ້ເບິ່ງຄືນເພື່ອຕອບສະໜອງໃຫ້ບັນລຸຕາມເປົ້າໝາຍ:

1. ຖືວ່າ ຕ້ອງໄດ້ເບິ່ງຄືນທາງດ້ານງົບປະມານໃນການນຳໃຊ້ເຂົ້າໃນວຽກງານໂຕນີ້;

2. ກໍແມ່ນວ່າ ອຸປະກອນຮັບໃຊ້ໃນການອຳນວຍຄວາມສະດວກໃຫ້ທາງດ້ານວິຊາການ;

3. ຄວນສ້າງບຸກຄະລາກອນໂດຍສະເພາະບຸກຄະລາກອນໃນການເຮັດວຽກງານຢູ່ຂັ້ນຮາກຖານບ້ານ, ຮາກຖານເມືອງ ເພາະພວກເຫລົ່ານີ້ໄດ້ເຮັດວຽກງານໂດຍກົງ;

4. ຢາກໃຫ້ເບິ່ງຄືນໃນການແບ່ງຜົນປະໂຫຍດ ທັງການຄຸ້ມຄອງລະຫວ່າງແຂວງ, ເມືອງ ຕິດພັນກັບຜົນປະໂຫຍດໃຫ້ເຂົາເຈົ້າຕື່ມ;

5. ແມ່ນທົບທວນຄືນການເກັບຄ່າທຳນຽມ ກໍຢາກໃຫ້ເປັນເອກະພາບ ໂດຍພື້ນຖານກໍອາດຈະມີນິຕິກຳແລ້ວ, ແຕ່ຢາກໃຫ້ທົບທວນຄືນວ່າບາງບ່ອນໃນການເສຍທຳນຽມໃນການອອກໃບຕາດິນນີ້ແມ່ນແພງ, ອອກດິນ 2 ຕອນໃຊ້ເງິນ 4-5 ລ້ານ ປະຊາຊົນເຂົາກໍບໍ່ສາມາດໄປເສຍໄດ້. ສະນັ້ນ, ນັບແຕ່ຈຸດນີ້ ຢາກໃຫ້ເບິ່ງຄືນວ່າມັນເປັນຈັ່ງໃດ ມັນຈັ່ງບໍ່ສາມາດບັນລຸໄດ້ ອັນນີ້ກໍເປັນບັນຫາໜຶ່ງ.

**ບັນຫາທີສາມ** ຕໍ່ການເຊົ່າສຳປະທານທີ່ດິນ ດັ່ງໃນບົດຕິດຕາມກວດກາຂອງອົງການກວດກາແຫ່ງລັດ ສຳລັບຜົ້ງສາລີພວກເຮົາ ກໍຖືວ່າຍັງຫລາຍໂຄງການທີ່ບໍ່ສາມາດມີສັນຍາເຊົ່າສຳປະທານໄດ້ ເນື່ອງຈາກວ່າໃນເມື່ອກ່ອນພວກເຮົາແມ່ນເຊັນສັນຍາປູກຢາງພາລາ ແມ່ນເຮັກຕາໜຶ່ງຕໍ່ 6 ໂດລາ, ມາປີ 2019 ນະໂຍບາຍວ່າດ້ວຍການເຊົ່າສຳປະທານທີ່ດິນມີການປ່ຽນແປງ ພວກເຮົານີ້ສຳຫລັບຜົ້ງສາລີແມ່ນ ເຊິ່ງໄດ້ຈັດໃນເຂດທີ 1 ຄືໃຫ້ເຊົ່າສຳປະທານໄດ້ 30 ໂດລາຕໍ່ເຮັກຕາ. ສະນັ້ນ, ເມື່ອພວກເຮົາໄປເວົ້ານຳບໍລິສັດໃຫ້ເຂົາມາເຊັນ ເຂົາບໍ່ຢາກເຮັດສັນຍານຳພວກເຮົາ ຈາກ 6 ໂດລາ ມາເປັນ 30 ໂດລາ ອັນນີ້ກໍເປັນບັນຫາ. ສະນັ້ນ, ຫລາຍບໍລິສັດຈຶ່ງຢາກຫັນຮູບແບບການລົງທຶນ ຈາກການເຊົ່າສຳປະທານນັ້ນ ມາເປັນຮູບການ 2+3 ປະຊາຊົນມີສ່ວນຮ່ວມ ອັນນີ້ ກໍເປັນບັນຫາໜຶ່ງທີ່ເຮັດໃຫ້ພວກເຮົາເສຍຜົນປະໂຫຍດ, ທັງທີ່ສັນຍາເຊົ່າສຳປະທານ ນັບທັງປັດໄຈການນຳເຂົ້າຂອງພວກເຮົາຍົກເວັ້ນໃຫ້ຫລາຍດ້ານ ແຕ່ມາຕົວຈິງ ມາດຽວນີ້ແມ່ນບໍ່ເປັນແນວນັ້ນ ຖືວ່າເຂົາບໍ່ຢາກເຮັດສັນຍາ, ແຕ່ເຖິງແນວໃດກໍຕາມ ພວກເຮົາກໍໄດ້ມີການສືບຕໍ່ຊຸກຍູ້ໃຫ້ເຮັດສຳເລັດຫັ້ນລະ ອັນນີ້ບັນຫາທີ່ດິນ ຂ້າພະເຈົ້າຢາກແລກປ່ຽນແນວນັ້ນ.

**ບັນຫາທີສີ່** ຕໍ່ການຂຸດຄົ້ນ ແລະ ທົດລອງແຮ່ເຫລັກຂອງລັດຖະບານນີ້ ເບິ່ງລວມແລ້ວ ພວກເຮົາໄດ້ອອກຊື່ເພາະວ່າເຮັດທົດລອງ ແຕ່ຄວາມເປັນຈິງແລ້ວມາເບິ່ງໃນບົດລາຍງານຂອງລັດຖະບານຖືວ່າ ມັນບໍ່ແມ່ນການທົດລອງ ແມ່ນການເປີດກ້ວາງທຸກແຂວງ ແລະ ກໍຫລາຍບໍລິສັດອີກ, ຂ້າພະເຈົ້າຄິດວ່າ ຕາມທັດສະນະສ່ວນຕົວ ເຮັດທົດລອງຕ້ອງມີຈຸດສຸມ ຈຸດໃດຈຸດໜຶ່ງ, ເຮັດມີຂອບເຂດຈຳກັດ ອາດຈະບໍ່ແມ່ນການເປີດກ້ວາງ, ແຕ່ລະແຂວງກໍມີຫລາຍບໍລິສັດ ຕາມການລາຍງານມີ 70 ກ່ວາບໍລິສັດ. ສະນັ້ນ ມັນບໍ່ແມ່ນຄືວ່າເປີດທົ່ວໄປ ອັນນີ້ຢາກໃຫ້ລັດຖະບານເບິ່ງຄືນວ່າ ຈິດໃຈຖ້າເປັນໄປໄດ້ ຢາກໃຫ້ທົບທວນຄືນວ່າການເຮັດທົດລອງພວກເຮົາຄວນຄຸມໃຫ້ຈຳກັດ ເມື່ອພວກເຮົາສະຫລຸບຖອດຖອນບົດຮຽນຖ້າວ່າມັນດີ ພວກເຮົາຈຶ່ງຄວນຂະຫຍາຍຕໍ່ບໍ່ຊັ້ນລະແມ່ນໝົດ ສ່ວນບາດພວກເຮົາຈະເຮັດແທ້ລະແມ່ນບໍ່ແຮ່ໝົດ ອັນນີ້ຢາກໃຫ້ເບິ່ງຄືນໃນຈຸດນີ້ ຖ້າວ່າພວກເຮົາຈະເຮັດທົດລອງ.

**ບັນຫາທີຫ້າ** ຕໍ່ການພັດທະນາຊັບພະຍາກອນມະນຸດ ການພັດທະນາຊັບພະຍາກອນມະນຸດນີ້ ກໍຢາກໃຫ້ທົບທວນຄືນໃນການສ້າງສີມືແຮງງານ ຫລື ວ່າການສ້າງສາຂາອາຊີບໃຫ້ຊັບພະຍາກອນຂອງພວກເຮົານີ້ ຢາກໃຫ້ເບິ່ງຄວາມເປັນຈິງຕະຫລາດແຮງງານທີ່ພວກເຮົາມີທັງພາຍໃນ ແລະ ຕ່າງປະເທດ, ປະເທດທີ່ໃກ້ຄຽງຂອງພວກເຮົາ ພວກເຮົາຕ້ອງສ້າງໃຫ້ມັນເຖິງ ຢາກໃຫ້ທົບທວນຄືນວ່າພວກເຮົາຕ້ອງການແຮງງານແນວໃດແທ້ ແລະ ໃຫ້ສ້າງໄປຕາມໂຕນັ້ນ ມັນສະແດງຢູ່ບ່ອນໃດ ຂ້າພະເຈົ້າຍົກຕົວຢ່າງວ່າ ບຸກຄະລາກອນຄູ ຖ້າວ່າຄູເຫລືອ ປັດຈຸບັນນີ້ພວກເຮົາກໍຍັງອະນຸມັດໃຫ້ໄປຮຽນຄູນີ້ບັກຫລາຍໆໂກຕາ ບັກຫລາຍໆທືນ ຈົບມາພວກເຮົາບໍ່ສາມາດປະກອບອາຊີບໄດ້; ສະນັ້ນ, ຢາກໃຫ້ພວກເຮົາເບິ່ງຄືນວ່າພວກເຮົາຕ້ອງການແນວໃດແທ້ ຫລື ຈະສ້າງໄປຕາມໂຄງປະກອບເສດຖະກິດຂອງພວກເຮົາບໍ່ ຕົວຢ່າງຄືຜົ້ງສາລີ ທືນໄປຮຽນຄູນີ້ຖືວ່າ ບໍ່ຢາກມີຜູ້ໄປໃດ.

# ຢາກໃຫ້ຊຸກຍູ້ໂຄງການຍົກຍ້າຍເທສະບານແຂວງ



ຄຳເຫັນຂອງທ່ານ ຈອມສີ ລັດຕະນະປັນ ສະມາຊິກສະພາແຫ່ງຊາດ ເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ ປະກອບຄຳເຫັນ ຕໍ່ບົດລາຍງານຂອງລັດຖະບານກ່ຽວກັບແຜນການ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ.

ໂດຍພື້ນຖານກໍມີຄວາມເຫັນດີເຫັນພ້ອມ ແຕ່ວ່າຂ້າພະເຈົ້າຢາກຂໍມີຄຳເຫັນເພີ່ມຕື່ມບາງດ້ານແນວນີ້ຕໍ່ພາກສະຫລຸບ ເຫັນວ່າຫລາຍດ້ານກໍມີທ່ວງທ່າດີຂຶ້ນ ເນື່ອງຈາກຖານລາຍຮັບຕ່າງໆກໍມີຄວາມໜັກແໜ້ນ ຈຶ່ງສາມາດຂຸດຄົ້ນຖານລາຍຮັບບັນລຸ ແລະ ລື່ນແຜນ, ສ່ວນວ່າຢູ່ທ້ອງຖິ່ນແຂວງບໍ່ແກ້ວນີ້ ພວກເຮົາກໍສາມາດບັນລຸໄດ້ຕົວເລກຢ່າງໜ້າເພິ່ງພໍໃຈ ໂດຍເລີ່ມຈາກບັນຫາທີ່ເປັນພື້ນຖານຄືແນວນັ້ນ ເຮັດໃຫ້ຫລາຍໂຄງການລົງທຶນຂອງລັດກໍໄດ້ຄ່ອຍໆສຳລະຊະສາງ ແລະ ຂະບວນການດ້ານຕ່າງໆຢູ່ຮາກຖານກໍໄດ້ມີບັນຍາກາດດີຂຶ້ນ ພາຍຫລັງການແຜ່ລະບາດຂອງພະຍາດໂຄວິດ-19 ໄດ້ຫລຸດຜ່ອນລົງ ແລະ ບັນຫາໜຶ່ງທີ່ຍັງຄ້າງຄາຕົວຈິງ ອັນນີ້ຕາມບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງເຄີຍໄດ້ລົງໄປພົບປະຜູ້ມີສິດເລືອກຕັ້ງຍັງເຫັນວ່າ ບັນຫາການແກ້ໄຂຄວາມທຸກຍາກຂອງປະຊາຊົນນີ້ຍັງຊັກຊ້າຫລາຍ ສະເພາະຢູ່ແຂວງບໍ່ແກ້ວ ກວມ 38% ຖ້າທຽບໃສ່ມະຕິຂອງແຂວງທີ່ວາງໄວ້ຢູ່ໃນສະໄໝທີ VI ກໍວາງໄວ້ຕໍ່າຄື 5%, ອັນນີ້ບໍ່ໃຫ້ເກີນ 5% ອັນນີ້ພວກເຮົາຈະມາຖິ້ມໃຫ້ແຕ່ສະພາບການຂອງໂລກ ຫລື ຖິ້ມໃຫ້ສະພາບການລະບາດຂອງພະຍາດໂຄວິດ ກໍບໍ່ທັນວ່າສົມເຫດສົມຜົນປານໃດ. ຂ້າພະເຈົ້າຄິດວ່າ ຍັງມີຫລາຍບ້ານຍັງບໍ່ທັນໄດ້ຮັບການຈັດສັນບ້ານຄົງທີ່ ຢູ່ບາງເມືອງທຸກຍາກ ແລະ ພວມຈະສືບຕໍ່ຖ້າມີເງື່ອນໄຂ ຄິດວ່າຈະພະຍາຍາມສຳເລັດຢູ່ໃນປີ 2023, ຢູ່ບໍລິເວນນີ້ເຫັນວ່າເປັນເຂດປົດປ່ອຍເກົ່າ ເຊິ່ງປົດປ່ອຍມາແຕ່ສະໄໝປີ 1960 ກວ່າຍັງຂາດເຂດຈັດສັນນີ້.

ສ່ວນບັນຫາທີສອງຢາກແລກປ່ຽນຕື່ມຕໍ່ທີ່ປະຊຸມນີ້ເປັນຂໍ້ສະເໜີຄື:

1. ໂຄງການທີ່ອະນຸມັດໝາຍຄວາມວ່າຜ່ານສະພາຮັບຮອງແລ້ວກໍຍັງມີ ອັນນີ້ຫລາຍຄັ້ງທີ່ຂ້າພະເຈົ້າມີຄຳເຫັນແລ້ວ, ເທື່ອນີ້ມາອ່ານເບິ່ງຈຸດໃດກໍຍັງບໍ່ທັນເຫັນວ່າຈະມີທາງອອກແນວໃດ ແລະ ຂ້າພະເຈົ້າຢາກສະເໜີວ່າແນວໃດກໍແນວ ໂຄງການທີ່ອະນຸຍາດແລ້ວຢາກໃຫ້ມີການສືບຕໍ່ ເພາະວ່າໄປທາງເມືອງປາກທາ ໄປຫາເມືອງຜາອຸດົມ ບໍ່ໄກພຽງແຕ່ 30 ກິໂລ ກໍເຮັດມາແລ້ວສຳເລັດເກືອບ 40-50% ອັນນີ້ມູນຄ່າຢູ່ໃນ 213 ຕື້, ມາເຮັດໄປແລ້ວຈາກປີ 2019 ມາຕົກມູນຄ່າ 113 ຕື້. ມື້ກ່ອນຂ້າພະເຈົ້າມີຄຳເຫັນຢູ່ກຳມາທິການແລ້ວ ໂຕນີ້ຂໍໃຫ້ລັດຖະບານຂອງພວກເຮົາເບິ່ງຄືນຕື່ມບໍ ຖ້າຢຸດຕິຕື່ມບາດນີ້ກໍເສຍໜ້າຕາພັກ-ລັດ, ໜ້າຕາຂອງສະມາຊິກສະພາກໍບໍ່ຢາກມີຄວາມໝາຍປານໃດ ອັນນີ້ຂ້າພະເຈົ້າເວົ້າຄວາມຈິງຄືແນວນັ້ນລະ ເພາະວ່າໂຈະໄວ້ແລ້ວ, ຢຸດຕິໄວ້ແລ້ວ ກົມການເມືອງຕົກລົງໂຈະໂຄງການສະໜາມບິນແລ້ວເຫັນດີເຫັນພ້ອມ, ຄັນມາໂຈະເສັ້ນທາງໂຕນີ້ຕື່ມ ໂອມັນກໍເຮົາຊິອ້າງວ່າບໍ່ມີເງິນເດ ບໍ່ມີເຮົາກໍຕົກລົງໄປແລ້ວເດ ມາລຶບລ້າງກໍຕ້ອງມາຜ່ານສະພາຕື່ມ ຈິດໃຈຂ້າພະເຈົ້າເວົ້າມື້ກ່ອນນີ້ ຄັນຊິລຶບລ້າງກໍສະພາຮັບຮອງຕື່ມບາດໜຶ່ງຈຶ່ງແມ່ນລຶບລ້າງ.

2. ຕິດພັນກັບອັນນີ້ ຂົວນ້ຳຂອງເຫັນວ່າຊັກຊ້າຫລາຍຂໍໃຫ້ລັດຖະບານຊອກມາຫາໄດ້ໄປຊື້ໃສ່ສາ 110 ແມັດທັນນາ ເພາະສອງສິ້ນນີ້ມັນແລ້ວລະເດ ອັນນີ້ພວກເຮົາກາຍໄປກາຍມາກໍໄດ້ແຕ່ຖ່າຍຮູບເອົາ, ຂໍໃຫ້ຢູ່ໃນປີ 2023 ເຮັດໃດກໍເຮັດ ຈະສັ່ງຊື້ຕ່າງປະເທດກໍຊື້ມາສືບຕໍ່ເຮັດໃຫ້ມັນແລ້ວ ອັນສະແດງເຖິງຄວາມເອົາໃຈໃສ່ຂອງພັກ-ລັດເຮົາ.

ບັນຫາທີສາມນີ້ ທ່ານອື່ນກໍມີຄຳເຫັນແລ້ວເລື່ອງກອງທຶນທາງ ນີ້ແມ່ນສະພາບຕົວຈິງຂອງທ້ອງຖິ່ນໃຜກໍເຫັນແລ້ວ ຈະເປັນບວກ ເປັນຂຸມ, ແຕ່ວ່າຖາງຫຍ້າແຄມທາງນີ້ ທຸກປີແມ່ນເຮັດ. ມາຮອດປີແລ້ວ ປີນີ້ນອກຈາກທີ່ລົດແລ່ນໄປແລ່ນມາລະຢຽບແຄມທາງລະກ້ຽງໄປເອງມັນບໍ່ມີໃຜຖາງ ອັນນີ້ຂໍໃຫ້ແບ່ງ ຈະແມ່ນຂັ້ນສູນກາງ ຫລື ຂັ້ນທ້ອງຖິ່ນຄຸ້ມຄອງ ຂໍໃຫ້ມັນແຈ້ງ, ແບ່ງພູດແບ່ງພາຍກັນ ອັນນີ້ໃບໜ້າໃບຕາໃດ໋ ຄືບໍ່ມີຜູ້ຮັບຜິດຊອບນີ້.

ບັນຫາທີສີ່ ແມ່ນຄຳເຫັນຂອງບັນດາທ່ານມີຄຳເຫັນແລ້ວ ຕໍ່ກັບເງິນປະມານ 200 ຕື້ ເຮົາວ່າຂໍໃຫ້ສຸມໃສ່ຂົງເຂດວັດທະນາທຳ-ສັງຄົມ ເປັນຂົງເຂດໃຫຍ່ ເປັນຂົງເຂດທີ່ຈຳເປັນ ບັນດາໂຮງຮຽນນີ້ມັນບໍ່ແມ່ນຊິເພີ່ມຂຶ້ນໃດ໋ ມັນຊິຫລຸດລົງ ຂ້າພະເຈົ້າໄປເຫັນສະພາບຕົວຈິງ ເພາະວ່າຫລາຍບ່ອນຄູບໍ່ຢາກມີແລ້ວຫລຸດໆໄປອອກໄປສ່ວນຫລາຍແມ່ນຄູອາສາເດ ຈັ່ງຊັ້ນແລ້ວມື້ກ່ອນນີ້ທ່ານລັດຖະມົນຕີກະຊວງພາຍໃນກໍມີຄຳເຫັນແລ້ວວ່າພະຍາຍາມລະດົມເຂົາເຈົ້າໄປເຮັດແນວອື່ນ ຄັນວ່າແນວນັ້ນພວກຂ້າພະເຈົ້າຢູ່ທ້ອງຖິ່ນຕາຍເລີຍບໍ່ມີຄູຈະໄປສອນມັນຫລາຍເດຍັງຢູ່ເກືອບ 300 ຄົນພະນັກງານຄູອາສາ ຄັນວ່າພວກເຮົາບໍ່ຄົ້ນຄວ້າການໃຫ້ໂກຕາອື່ນໆເພື່ອທົດແທນ ຫລື ວ່າຕໍ່ກັບພາກສ່ວນອອກໄປ ອັນນີ້ຂ້າພະເຈົ້າຢາກສະເໜີວ່າການແບ່ງເງິນນີ້ຂໍໃຫ້ເກັບກຳຂໍ້ມູນຕົວຈິງຕື່ມ ຂ້າພະເຈົ້າມີຄຳເຫັນເທົ່ານັ້ນ.



# ສົ່ງເສີມການຜະລິດພາຍໃນ ເພື່ອທົດແທນການນຳເຂົ້າ



ຄຳເຫັນຂອງທ່ານ ປອ. ຄຳແສນ ສີສະວົງ ສະມາຊິກສະພາແຫ່ງຊາດ ເຂດເລືອກຕັ້ງທີ 9 ແຂວງຊຽງຂວາງ ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ; ຂ້າພະເຈົ້າກໍເປັນເອກະພາບເຫັນດີຕາມບົດລາຍງານຂອງລັດຖະບານທີ່ມີຜົນສຳເລັດຕໍ່ໂຕຊີ້ວັດຫລາຍຕົວ ຫລື ຕົວຊີ້ບອກ, ແຕ່ຕົວຊີ້ບອກບາງຕົວທີ່ພວກເຮົາຍັງບໍ່ທັນບັນລຸ. ດັ່ງນັ້ນ, ຂ້າພະເຈົ້າ ຈຶ່ງຂໍມີຄຳເຫັນຕໍ່ບັນຫາດັ່ງກ່າວເພື່ອແຜນນັ້ນດີຂຶ້ນ.

**ອັນທີໜຶ່ງ** ຕໍ່ກັບການພັດທະນາ ແລະ ສົ່ງເສີມການຜະລິດສິນຄ້າພາຍໃນເພື່ອທົດແທນການນຳເຂົ້າ ແລະ ເປັນການສົ່ງອອກນີ້ ຜ່ານມາລັດຖະບານກໍເຮັດດີແລ້ວ ແຕ່ຂ້າພະເຈົ້າຢາກຂໍສະເໜີຕື່ມວ່າພວກເຮົາຕ້ອງເຮັດ 2 ຢ່າງໄປພ້ອມກັນ. ອັນທີ 1 ສົ່ງເສີມຜູ້ຜະລິດກໍຄືສົ່ງເສີມຜູ້ປະກອບການ ລັດຖະບານກໍເຮັດດີແລ້ວ, ອັນທີ 2 ຕ້ອງສົ່ງເສີມຜູ້ບໍລິໂພກພາຍໃນພວກເຮົາໄປພ້ອມກັນ ຄຽງຄູ່ກັນການສົ່ງເສີມຜູ້ບໍລິໂພກພາຍໃນນີ້ເປັນບັນຫາທີ່ສຳຄັນ ເຊັ່ນ ພວກເຮົາຈະຈັດຕັ້ງການລົນນະລົງ (ປຸກລະດົມ) ຄົນລາວໃຊ້ສິນຄ້າລາວ ໂດຍສະເພາະນຳເອົາອົງການຈັດຕັ້ງຂອງລັດເປັນແບບຢ່າງໃນການໃຊ້ສິນຄ້າລາວ ຜະລິດຕະພັນບໍລິໂພກ-ອຸປະໂພກນີ້. ອັນທີ 2 ຂ້າພະເຈົ້າເຫັນວ່າຜະລິດຕະພັນຂອງລາວເຮົານີ້ຍັງເກັບພາສີ ຫລື ອາກອນມູນຄ່າເພີ່ມ, ເປັນໄປໄດ້ການສົ່ງເສີມກັນຊົມໃຊ້ສິນຄ້າພາຍໃນພວກເຮົານີ້ຫລາຍປະເທດເພິ່ນກະເຫັນວ່າພວກເຮົາຄວນຍົກເວັ້ນໂຕນີ້ ສິນຄ້າຂອງລາວເຮົານີ້ຕ້ອງຫລຸດສິນຄ້າໃນປະເທດອື່ນໃນລາຄານີ້ ເພາະວ່າເຮົາຫລຸດອາກອນນີ້ຄືນ.

**ອັນທີສອງ** ຕໍ່ກັບການຂຸດຄົ້ນບໍ່ແຮ່ທົດລອງ ແລະ ຕິດພັນກັບການຂຸດຄົ້ນເງິນຄຣິບໂຕ ສອງໂຄງການນີ້ມີລັກສະນະຄ້າຍຄືກັນ. ປັດຈຸບັນນີ້ຄືກອງປະຊຸມສະພາຊຸດແລ້ວນີ້ພວກເຮົາກໍໄດ້ຍົກຂຶ້ນເພື່ອລັດຖະບານໄດ້ຍົກຂຶ້ນຕັ້ງບັນຫາກ່ຽວກັບສອງໂຄງການນີ້, ແຕ່ໃນປັດຈຸບັນເຫັນວ່າສອງໂຄງການນີ້ມີການສະລໍຕົວ, ບໍ່ມີການຜະລິດ, ບໍ່ມີການເຄື່ອນໄຫວ ຍ້ອນວ່າລາຄາຂອງຕະຫລາດແຮ່ເຫລັກມັນຫລຸດລົງເຄິ່ງໜຶ່ງ ແລະ ເລື່ອງຄຣິບໂຕກໍຄືກັນມັນຫລຸດລົງ. ຈັ່ງຊັ້ນຂ້າພະເຈົ້າຢາກໃຫ້ລັດຖະບານກວດຄືນເບິ່ງວ່າຜົນທີ່ໄດ້ກັບຜົນທີ່ເສຍໃນປັດຈຸບັນນີ້ມັນຫລາຍປານໃດ. ຂ້າພະເຈົ້າມາສັງເກດເບິ່ງວ່າຊິບໍ່ເປັນຖືກກັບຍຸດທະສາດການຕະຫລາດຂອງປະເທດອື່ນບໍ່, ເພາະວ່າໂຄງການເຂົາເຈົ້າຢາກຂາຍເຄື່ອງຈັກອັນໃດອັນໜຶ່ງ ເຂົາເຈົ້າຕ້ອງເຮັດກິດຈະກຳອັນໃດອັນໜຶ່ງມັນແມ່ນໂຄງການຍຸດທະສາດການຕະຫລາດຂອງເຂົາເຈົ້ານີ້. ເຂົາບໍ່ໄດ້ເຂົ້າມາຕົງໆ ເຂົາເຈົ້າເຂົ້າມາທາງອ້ອມເຂົາມາປັ່ນປ່ວນວ່າຊິມາຊື້ແຮ່ເຫລັກບັນດາບໍລິສັດຂອງຄົນລາວເຮົານີ້ທັງກູ້ເງິນພາຍໃນປະເທດ ແລະ ທັງຊື້ເຄື່ອງຈັກເຂົາເຈົ້າໄປແດ່ ລົງທຶນຫລາຍຮ້ອຍລ້ານ ໄລຍະໜຶ່ງກໍໄດ້ຂາຍແທ້, ໄລຍະທີ 2 ລາຄາຕົກ. ຄຣິບໂຕນີ້ກໍຄືກັນ ການລົງທຶນຫລາຍໃນປັດຈຸບັນນີ້ແຕ່ວ່າການຜະລິດນີ້ຍັງບໍ່ທັນໄດ້, ແຕ່ເງິນທີ່ເຂົ້າໄປໃນຂະບວນການດັ່ງກ່າວນີ້ໄດ້ໄປສະຕັອກຢູ່ໃນຕະຫລາດຂອງຕ່າງປະເທດແລ້ວ ຖອນອອກໄດ້ແຕ່ບໍ່ຢາກຖອນຍ້ອນວ່າລາຄາຕົກ ໃຜກໍສະລໍໂຕ ບັນຫາດັ່ງກ່າວນີ້ພາໃຫ້ເງິນຕາຮົ່ວໄຫລ ແລະ ເງິນທີ່ໄປກັກຂັງທີ່ບໍ່ໄດ້ໝູນວຽນທາງດ້ານເສດຖະກິດແມ່ນເສຍຫາຍຫລາຍ ຢາກໃຫ້ລັດຖະບານເບິ່ງຄືນ.

**ອັນທີສາມ** ນີ້ຕໍ່ກັບບັນຫາຄຸ້ມຄອງທີ່ດິນ ຫລື ໂຄງການສຳປະທານທີ່ດິນຂອງເອກະຊົນໃນການລົງທຶນຕ່າງໆບໍ່ວ່າເຂດພິເສດຕ່າງໆ, ຂ້າພະເຈົ້າ ເຫັນວ່າຢູ່ໃນບັນດາຕົວເມືອງໃຫຍ່ໆຄື ນະຄອນຫລວງວຽງຈັນ ຫລື ແຂວງອື່ນໆນີ້ ຍັງເປັນການເສຍໂອກາດໃນການພັດທະນາຫລາຍ ເພາະວ່າບາງໂຄງການນີ້ຈັບຈອງມາ ໄດ້ສຳປະທານມາໄດ້ 10 ປີ ຫລື 15 ປີ, 20 ປີ ມາແລ້ວ ແຕ່ກໍບໍ່ເຫັນວ່າພັດທະນາ, ລັດຖະບານຄວນມີມາດຕະການອັນໃດອັນໜຶ່ງ ເຖິງວ່າສັນຍາຈະເຊົ່າໄປ 45 ປີ, 50 ປີ ແຕ່ພວກເຮົາຄວນມີໂຄງການວ່າກິດຈະການດັ່ງກ່າວດຳເນີນໄປຕາມແຜນ ຫລືບໍ່ຄັນບໍ່ໄດ້ຄວນມີນະໂຍບາຍອັນອື່ນເພື່ອຈະທັນທິດ ເພາະວ່າເປັນການອຸດຕັນໃນການພັດທະນາ. ຫລາຍໂອກາດຫລາຍນັກລົງທຶນເຂົ້າມາລະມາເຫັນບັນຫາບ່ອນທີ່ຕັ້ງທຳເລດີໆຖືວ່າສຳປະທານໄປໝົດແລ້ວ, ແຕ່ບໍ່ໄດ້ພັດທະນາ ບໍ່ແມ່ນ 5 ປີ, 10 ປີ, 15 ປີ ຜ່ານມາກໍຍັງຄືເກົ່າ ບັນດາທ່ານຄົງຈະເຫັນວ່າຫລາຍໂຄງການຢູ່ໃນນະຄອນຫລວງວຽງຈັນບໍ່ໄດ້ຮັບການພັດທະ ນາເທົ່າທີ່ຄວນ.

**ອັນສຸດທ້າຍ** ຂ້າພະເຈົ້າຂໍປະກອບສ່ວນເລື່ອງການພັດທະນາພື້ນຖານໂຄງລ່າງທີ່ຕິດພັນກັບຖະໜົນຫົນທາງຢູ່ໃນຕົວເມືອງ ຫລື ຕິດພັນກັບການດຶງດູດການທ່ອງທ່ຽວ. ໃນສະພາບປັດຈຸບັນນີ້ເຮົາເຫັນວ່າຖະໜົນຫົນທາງຢູ່ໃນຕົວເມືອງ ບໍ່ວ່າຈະຢູ່ໃນນະຄອນຫລວງວຽງຈັນ ຫລືວ່າແຂວງຕ່າງໆ, ບັນດາຕົວເມືອງເປເພຫລາຍ. ຕໍ່ກັບບັນຫາດັ່ງກ່າວນີ້ມັນມີຜົນກະທົບຕໍ່ການທ່ອງທ່ຽວ ນັກທ່ອງທ່ຽວເຂົ້າມານີ້ ນັກທ່ອງທ່ຽວຄັ້ນມັນມາທ່ອງທ່ຽວ ຄັ້ນຄົນມັນມີເງິນມັນມາຄັ້ນມາລະມາເຫັນສະພາບຖະໜົນຫົນທາງບໍ່ມີຄວາມປອດໄພ ເຂົາກໍບໍ່ຢາກມາ, ສະນັ້ນແລ້ວ ເປັນໄປໄດ້ບໍ່ວ່າ ຢາກໃຫ້ມີການບູລະນະທາງໃຫ້ຕິດພັນກັບທັງເມືອງທັງບ້ານ. ຂ້າພະເຈົ້າເຄີຍປຸກລະດົມປະຊາຊົນເຮັດທາງຮ່ອມ ທາງຊອຍ ແລະ ບູລະນະ ເຂົາເຈົ້າມີຄຳສະເໜີວ່າ ຖ້າວ່າເງິນທີ່ເຂົາເຈົ້າປະກອບສ່ວນທັນສາມາດໄປລົບອາກອນ ຫລື ພາສີອັນໃດອັນໜຶ່ງໄດ້ ເຂົາເຈົ້າມີຄວາມສົນໃຈຢາກບູລະນະໃຫ້ທາງຫັ້ນດີ ທາງໜ້າຮ້ານ, ໜ້າບໍລິສັດ, ທາງເຂົ້າບ້ານ, ທາງເຂົ້າເມືອງເຂົາເຈົ້າສາມາດບູລະນະຮັກສາໃຫ້ມັນໄດ້ປົກກະຕິ. ແຕ່ວ່າໃນປັດຈຸບັນນີ້ ພວກເຮົາເຮັດບໍ່ໄດ້ ທາງທັງເມືອງ, ທັງບ້ານແມ່ນຂຶ້ນກັບກະຊວງ ຂຶ້ນກັບນະຄອນຫລວງ ເຖິງວ່າຊຸມນ້ອຍໆພວກເຮົາກໍບໍ່ສາມາດບູລະນະໄດ້ປຸກລະດົມກັນບໍ່ໄດ້ກໍຍ້ອນບັນຫາດັ່ງກ່າວ. ຂ້າພະເຈົ້າຢາກສະເໜີໃຫ້ລັດຖະບານຄວນມີນະໂຍບາຍໃນການປະກອບສ່ວນໃນການບູລະນະສ້າງທາງຊອຍທາງຮ່ອມຕ່າງໆນີ້ ຄວນຈະເອົາລາຍຈ່າຍບວກ-ລົບ ໃນການເສຍພາສີອາກອນໃນທຸລະກິດຂອງເຂົາເຈົ້າຫັ້ນ.

**ອັນສຸດທ້າຍ** ກ່ຽວກັບການສຶກສາກໍເປັນບັນຫາທີ່ສຳຄັນ ຂ້າພະເຈົ້າຢາກຂໍສະເໜີ: ອັນທີ 1 ນີ້ຕົວຊີ້ວັດຂອງການສຶກສາ ຄວນຈະຍົກໃຫ້ເຫັນໃນການພັດທະນາພື້ນຖານໂຄງລ່າງ. ຜ່ານມານີ້ພວກເຮົາບໍ່ເຫັນ ເຮົາເຫັນແຕ່ໂຕຊີ້ວັດວ່ານັກຮຽນອອກ-ນັກຮຽນເຂົ້າເທົ່າໃດ. ແຕ່ວ່າບັນຫາພື້ນຖານໂຄງລ່າງຢາກໃຫ້ສະມາຊິກສະພາ ຫລືວ່າກອງປະຊຸມຮັບຮູ້ນຳກັນວ່າຍັງຈັກໂຮງຮຽນທີ່ຍັງບໍ່ທັນໄດ້ມາດຕະຖານຂຶ້ນຢູ່ແຕ່ລະເມືອງແຕ່ລະບ້ານແຕ່ລະແຂວງຫັ້ນ ຕົວຢ່າງວ່າ ໂຮງຮຽນທີ່ບໍ່ມີວິດຖ່າຍມີຈັກໂຮງຮຽນແທ້, ໂຮງຮຽນທີ່ຂາດນ້ຳ, ຂາດໄຟ ແລະ ອື່ນໆ ເພາະວ່າຄຸນນະພາບການສຶກສາມັນຕ້ອງຂຶ້ນກັບຫລາຍປັດໄຈ ບໍ່ແມ່ນແຕ່ຄູກັບນັກຮຽນເທົ່ານັ້ນ,ຂຶ້ນກັບວັດຖຸພື້ນຖານໂຄງລ່າງ ການຮັບໃຊ້ຕ່າງໆ. ຂ້າພະເຈົ້າຄິດວ່າ ຖ້າເຮົາເວົ້າຄຸນນະພາບການສຶກສາກໍຕ້ອງເວົ້າວ່າໂຄງປະກອບການສຶກສາຕ່າງໆໃນການຜະລິດບຸກຄະລາກອນພ້ອມສຳໃດແລ້ວ ແຕ່ຢາກໃຫ້ລັດຖະບານຍົກຂຶ້ນມາ 5 ປີ ສະໄໝນີ້ຈະໃຫ້ພື້ນຖານໂຄງລ່າງການສຶກສານີ້ຍັບຂຶ້ນໄປເທົ່າໃດເປີເຊັນ; ອັນທີ 2 ຢາກໃຫ້ສືບຕໍ່ແກ້ໄຂບັນຫາຄູເຫລືອບໍ່ພໍ ຫລືວ່າ ຄູອາສາສະໝັກ ໃນຄວາມເປັນຈິງແລ້ວແມ່ນຄູບໍ່ພໍ ຂ້າພະເຈົ້າກໍໄປເບິ່ງໃນບັນດາຊົນນະບົດຕ່າງໆນີ້ແມ່ນຄູບໍ່ພໍແທ້, ແຕ່ວ່າບັນຫາຄູອາສາສະໝັກຖ້າເຂົ້າລັດຖະກອນເຂົ້າບໍ່ໄດ້ຊື່ໆ ແຕ່ຄວາມເປັນຈິງແລ້ວໂຮງຮຽນນັ້ນຢາກໃຊ້ແທ້ບໍ່ນາຍຄູ.

# ຂອດປະສານງານລະຫວ່າງ ສູນກາງກັບທ້ອງຖິ່ນ ຕ້ອງກົມກຽວກັນ

ບົດຄຳເຫັນຂອງທ່ານ ບຸນໂຮມ ເທດທານີ ເຂດເລືອກຕັ້ງທີ 9 ແຂວງຊຽງຂວາງ ປະກອບຄຳເຫັນຕໍ່ບົດຂອງລັດຖະບານ ແລະ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປີ 2022 ແລະ ທິດທາງແຜນການປີ 2023 ໂດຍພື້ນຖານກໍເຫັນດີເປັນເອກະພາບຕໍ່ບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ຕໍ່ກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 2022 ແລະ ທິດທາງ 2023, ທາງດ້ານແຜນງົບປະມານເງິນຕາ ແລະ ງົບປະມານແຫ່ງລັດ.

ຂ້າພະເຈົ້າຂໍມີຄຳເຫັນແລກປ່ຽນບາງຈຸດ ດັ່ງນີ້:

1. ຕໍ່ກັບຄາດໝາຍທາງດ້ານເສດຖະກິດໃນປີ 2023 ນັ້ນ 4,5% ກໍຖືວ່າເຫັນດີຕາມຄຳເຫັນຂອງບັນດາທ່ານຜູ້ແທນ ກໍເຫັນວ່າມີຄວາມເໝາະສົມ ເພາະມາເບິ່ງແລ້ວໃນສະພາບໃນຕໍ່ໜ້ານີ້ ພວກເຮົາກໍຍັງບໍ່ຮູ້ວ່າມັນຈະຜັນແປໄປແນວໃດ, ມັນຈະມີຄວາມສະດວກຂຶ້ນ ຫລືບໍ່, ແຕ່ວ່າເຮົາເອົາໄວ້ສ່ຳນີ້ກໍຄືສິເໝາະສົມສຳລັບຕົວເລກຄາດໝາຍທາງດ້ານ GDP.

2. ໂຄງປະກອບການຈັດສັນທາງດ້ານງົບປະມານການລົງທຶນຂອງລັດ ອັນນີ້ກໍເຫັນດີຄືຄຳເຫັນຂອງທ່ານຜູ້ແທນ ຢາກໃຫ້ເນັ້ນໃສ່ວ່າການຊຳລະໜີ້ສິນນັ້ນຢາກໃຫ້ເປັນບູລິມະສິດກ່ອນ ອາດຈະແມ່ນ 60, 30 ຫລື 10 ເພາະວ່າໂຕນີ້ມັນຈະເປັນເງື່ອນໄຂໃນການສ້າງຄວາມເຂັ້ມແຂງໃຫ້ແກ່ນັກລົງທຶນພາຍໃນຂອງພວກເຮົາ ເພາະວ່າມາສັງເກດຢູ່ໃນແຂວງຊຽງຂວາງຂອງພວກເຮົານີ້ ຜ່ານຈາກໄລຍະຜ່ານມາສະພາບເງື່ອນໄຂຄວາມຫຍຸ້ງຍາກກໍເຫັນວ່າຫລາຍບັນດານັກລົງທຶນກໍຫັນໄປສູ່ການຜະລິດທາງດ້ານກະສິກຳ, ການປູກ, ການລ້ຽງ ຍົກຕົວຢ່າງຄືພວກເຮົາມີຟາມງົວຂອງຍີ່ປຸ່ນ, ເມື່ອກ່ອນພວກເຮົາມີງົວພັນຂອງວິກັດເອົາມາແຕ່ອິດສະຕຣາລີ 2000 ກວ່າໂຕ ດຽວນີ້ຈຳໜ່າຍອອກເພື່ອເອົາງົວພັນນົມເຂົ້າມາທົດແທນຈຳນວນ 8000 ໂຕ ສະນັ້ນ ຖືວ່າມາເບິ່ງແລ້ວຈຳນວນສັດສ່ວນທີ່ໄປເອົາງົວໄປລ້ຽງສ່ວນຫລາຍກໍແມ່ນນັກທຸລະກິດຜູ້ປະກອບການ, ເອົາໄປແລ້ວກໍຂະຫຍາຍທົ່ງຫຍ້າ, ແລ້ວກໍເອົາໄປລ້ຽງຂະຫຍາຍເປັນພໍ່ພັນ ອັນນີ້ແມ່ນເປັນພື້ນຖານອັນໜຶ່ງ.

3. ສຳລັບບັນດາມາດຕະການເພີ່ມເຕີມຈຳນວນ 13 ຂໍ້ ຂ້າພະເຈົ້າກໍຖືວ່າເຫັນດີແລ້ວຢູ່ໃນບົດປະກອບຄຳເຫັນຂອງຄະນະປະຈຳສະພາ, ແຕ່ວ່າຢູ່ໃນນີ້ຢາກໃຫ້ເພີ່ມຕື່ມຈຸດໜຶ່ງວ່າ ຂອດການປະສານງານ ລະຫວ່າງຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນກໍຢາກໃຫ້ມັນມີຄວາມກົມກຽວກັນ ໃຫ້ມີຄວາມທະລຸໂລ່ງກັນຕື່ມໃນການປະສານງານໃນແຕ່ລະຂົງເຂດວຽກງານທີ່ໄດ້ກຳນົດຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມ.

4. ຕໍ່ຄາດໝາຍການພັດທະນາຊົນນະບົດ ແລະ ການລຶບລ້າງຄວາມທຸກຍາກນີ້ ໂຕນີ້ພວກເຮົາກໍໄດ້ກຳນົດໄວ້ຫລາຍຢູ່ໃນປີ 2021-2025 ໂດຍສະເພາະແມ່ນຄາດໝາຍບ້ານຄອບຄົວພົ້ນທຸກ, ບ້ານພັດທະນາຕ່າງໆ ຖືວ່າພວກເຮົາກໍເຫັນວ່າໃນປີຜ່ານມານີ້ກໍຈັດຕັ້ງປະຕິບັດ ຖືວ່າຍັງປະຕິບັດບໍ່ໄດ້ 50% ຂອງແຜນການໂຕນີ້ມັນກໍຫຍຸ້ງຍາກຢູ່ບ່ອນວ່າ ອີງໃສ່ເງື່ອນໄຂມາດຕະຖານພົ້ນທຸກ ແລະ ພັດທະນາຕາມ 348 ນັ້ນ. ສະນັ້ນໂຕນີ້ຢາກໃຫ້ພວກເຮົາປັບໂຕມາດຕະຖານນີ້ຄືນໃໝ່ ອາດຈະແມ່ນເວົ້າເລື່ອງຄຳສັບຕ່າງໆໃຫ້ມັນມີຄວາມເໝາະສົມ ໂດຍສະເພາະເຫັນວ່າບັນຫາທີ່ຄາຫລາຍກວ່າໝູ່ແມ່ນການວາງຜັງບ້ານ, ຜັງເມືອງ ອັນນີ້ຖືວ່າຢູ່ຊົນນະບົດຫ່າງໄກສອກຫລີກຢາກໃຫ້ມີຜັງບ້ານມັນກໍຍາກ, ບ່ອນຕັ້ງເຮືອນມັນກໍຍັງຍາກ, ໂຕນີ້ເຮົາຕ້ອງໄດ້ເວົ້າກັນໃໝ່ ມັນຄາໂຕນີ້ແລ້ວກໍຖືວ່າບໍ່ບັນລຸຕາມຄາດໝາຍ ອັນນັ້ນລະແມ່ນຢາກໃຫ້ໄດ້ປັບຄືນໃໝ່ ມາດຕະຖານໂຕນີ້ໃຫ້ມັນມີຄວາມສອດຄ່ອງ ຈະແມ່ນຄຳເວົ້າ ຫລື ແນວໃດໃຫ້ມັນມີຄວາມຈະແຈ້ງຂຶ້ນຕື່ມ.

5. ເລື່ອງການຄາດໝາຍໃນການປົກປັກຮັກສາສິ່ງແວດລ້ອມໃຫ້ມີຄວາມສົມດູນ ຫລຸດຜ່ອນຈາກໄພພິບັດນີ້ ແຕ່ໂຕນີ້ແຕ່ປີ 2018 ໃນທົ່ວປະເທດພວກເຮົານີ້ກໍໄດ້ສ້າງແລ້ວແຜນການຈັດສັນທີ່ດິນ ແລະ ຄຸ້ມຄອງສິ່ງແວດລ້ອມທາງທຳມະຊາດແບບຮອບດ້ານຂອງແຂວງ, ມາເບິ່ງຕາມບົດລາຍງານກໍແມ່ນຍັງມີແຕ່ແຂວງວຽງຈັນ ຖືວ່າມາເບິ່ງໃນການຈັດຕັ້ງປະຕິບັດຕົວຈິງກັບແຜນໂຕນັ້ນກຳນົດໄວ້ລະອຽດດີ, ແຕ່ວ່າການຈັດຕັ້ງປະຕິບັດນີ້ບໍ່ໄດ້ ກໍຍ້ອນວ່າ ພວກເຮົາໄດ້ມີການອະນຸຍາດຊ້ຳຊ້ອນຕ່າງໆ ເຮັດໃຫ້ແຜນໂຕນີ້ດຳເນີນບໍ່ໄດ້. ສະນັ້ນ, ຈິດໃຈກໍຢາກສະເໜີລັດຖະບານວ່າຄວນຈະໄດ້ປະເມີນຄືນ ເບິ່ງວ່າແຜນນີ້ສ້າງໃຫ້ມັນມີຄວາມສອດຄ່ອງ ແລະ ເໝາະສົມຂຶ້ນຈຶ່ງຈະໄດ້ເຮັດໃຫ້ມັນມີປະສິດທິຜົນໃນການຈັດຕັ້ງປະຕິບັດແຜນໂຕນີ້ ແລະ ສ່ວນວ່າບັນຫາໜຶ່ງອີກແມ່ນການຂຶ້ນທະບຽນການອອກໃບຕາດິນນີ້ແມ່ນຄາດໝາຍ 2022 ຂອງລັດຖະບານກໍ 300.000 ແຕ່ວ່າຈັດຕັ້ງປະຕິບັດໄດ້ບໍ່ຮອດ 50% ໄດ້ແຕ່ 33,67%, ແຕ່ມາປີນີ້ພັດເພີ່ມຂຶ້ນອີກເປັນ 400.000 ອັນນີ້ກໍເປັນຄາດໝາຍຕົວເລກທີ່ທ້າທາຍຫລາຍ ເພາະແບ່ງໃຫ້ແຕ່ລະແຂວງ ໂດຍສະເພາະແຂວງຊຽງຂວາງຂອງພວກເຮົານີ້ກໍເຫັນວ່າບໍ່ບັນລຸ. ສະນັ້ນ ລວມທັງບຸກຄະລາກອນ ລວມທັງເງື່ອນໄຂຕ່າງໆທີ່ຈະສຸມໃສ່ໂຕນີ້. ດັ່ງນັ້ນ, ໂຕເລກນີ້ຢາກໃຫ້ວາງໃຫ້ສົມເຫດສົມຜົນໃນທາງທີ່ຈັດຕັ້ງປະຕິບັດໄປໄດ້, ຖ້າວາງໄວ້ຫລາຍແຕ່ບໍ່ສຳເລັດ ນີ້ຖືວ່າບໍ່ຈັກສິວ່າໂຕນີ້ ແຜນການນີ້ບາງເທື່ອມັນກໍຈະເປັນແຜນລ້າ ອັນນີ້ກໍຖືວ່າບໍ່ຢາກໃຫ້ມັນຕົກຢູ່ກໍລະນີນັ້ນ.

6. ກໍຄືບັນດາທ່ານໄດ້ສະເໜີນັ້ນ ສຳລັບເລື່ອງການຕິດພັນກັບວາລະແຫ່ງຊາດ ແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ ໂດຍສະເພາະແມ່ນໂຄງການອະນຸຍາດວ່າດ້ວຍການຂຸດຄົ້ນບັນດາແຮ່ເຫລັກຕ່າງໆ ອັນນີ້ຈິດໃຈກໍຢາກໃຫ້ປະເມີນ. ຢູ່ຊຽງຂວາງຂອງພວກເຮົາ ຢູ່ຕາມບັນຊີກໍຖືວ່າມີ 6 ບໍລິສັດ, ແຕ່ວ່າເຄື່ອນໄຫວແທ້ໆນັ້ນມີແຕ່ 3 ບໍລິສັດ ທີ່ວ່າໄດ້ສົ່ງອອກ ແລະ ໄດ້ຂຸດຄົ້ນນັ້ນກໍຖືວ່າມີ 2 ບໍລິສັດ, ບໍລິສັດໜຶ່ງນັ້ນກໍຖືວ່າຜິດຕາມສັນຍາ ເພາະວ່າອະນຸຍາດຂຸດຄົ້ນແຮ່ເຫລັກ ບາດໄປເຮັດພັດຂຸດຄົ້ນແຮ່ຄຳ. ດຽວນີ້ກໍຖືວ່າຍັງໄດ້ເວົ້າກັນຢູ່ ຍັງຈະແກ້ກັນ ລັດຖະບານກໍໄດ້ມີຄຳເຫັນຊີ້ນຳໄປແລ້ວ ອັນນີ້ກໍເປັນບັນຫາທີ່ຫຍຸ້ງຍາກ. ແຕ່ບັນຫາໜຶ່ງອີກຄື ການຄຸ້ມຄອງການສົ່ງອອກແຮ່ທາດ ຫລືວ່າແຮ່ເຫລັກນີ້ ຢູ່ແຂວງຊຽງຂວາງພວກເຮົານີ້ກໍໄດ້ສົ່ງອອກປະມານ 30.000 ແຕ່ມາເບິ່ງໃນການຄຸ້ມຄອງ, ການຈັດເກດ, ການຕີລາຄາເສຍພັນທະຕ່າງໆນີ້ ໂຕນີ້ເຫັນວ່າຍັງມີບັນຫາ ເພາະສັງເກດເຫັນໄດ້ວ່າ ຫວ່າງແລ້ວນີ້ພວກເຮົາກໍຖືວ່າປະຕິບັດມາດຕະການຕໍ່ຜູ້ລະເມີດ ເພາະວ່າມີການເຄື່ອນຍ້າຍບໍ່ຖືກຕ້ອງຈຳນວນ 600 ກວ່າໂຕນ, ບາດນີ້ເອົາມາຕີລາຄາເອົາມາກວດຄືນລະຖືວ່າມູນຄ່າຂອງໂຕນີ້ມັນຕົກຢູ່ເກດທີ່ສູງທີ່ສຸດ ແຕ່ວ່າເວລາທີ່ເສຍພັນທະສົ່ງອອກນັ້ນແມ່ນຢູ່ໃນເກດຕ່ຳທີ່ສຸດ. ສະນັ້ນ ເຮັດໃຫ້ລາຍຮັບມັນສູນເສຍໄປຢູ່ໃນນັ້ນ ແລະ ການຄຸ້ມຄອງໃນຂອດການສົ່ງອອກ ໂຕນີ້ກໍຢາກໃຫ້ມີຄວາມຈະແຈ້ງຂຶ້ນຕື່ມ, ບໍ່ຢາກໃຫ້ມັນຕົກຢູ່ກໍລະນີໃນເມື່ອກ່ອນ ພວກເຮົາຂຸດຄົ້ນໄມ້ສົ່ງອອກ ມີ ເກດ ກ, ເກດ ຂ ແລະ ນ ປ ພ..., ບາດອອກນັ້ນສ່ວນຫລາຍແມ່ນປະເພດ ນ ປ ພ, ນັ້ນສ່ວນຫລາຍແມ່ນເປັນປະເພດໄມ້ດີ ອັນນີ້ກໍບໍ່ຢາກໃຫ້ມັນຕົກຢູ່ໃນກໍລະນີນັ້ນຕື່ມ ເພື່ອບໍ່ໃຫ້ຊັບສິນຂອງຊາດພວກເຮົາສູນເສຍ ຈຶ່ງຢາກສະເໜີທາງລັດຖະບານໃຫ້ມີການຄົ້ນຄວ້າພິຈາລະນາ ແລະ ອີກບັນຫາໜຶ່ງນີ້ ເລື່ອງການຂຸດຄົ້ນແຮ່ນີ້ ກໍມີຄວາມສັບສົນເລື່ອງການຂົນສົ່ງເຄື່ອນຍ້າຍພາຍໃນນີ້ ແລະ ໂດຍສະເພາະແມ່ນການ, ແຕ່ວ່າລັດຖະບານກໍໄດ້ມີແລ້ວແຈ້ງການ 1587 ວ່າເລື່ອງການຊຳລະສະສາງກ່ອນການອອກຈາກປາກບໍ່ທັນໄປບໍ່ແຕ່ວ່າດຽວນີ້ຫັ້ນບາງບໍລິສັດບໍ່ປະຕິບັດ ຂຸດຄົ້ນອອກໄປແລ້ວອາໄສເຄື່ອນຍ້າຍໄປໄວ້ສະໜາມນັ້ນ ສະໜາມນີ້ ສະນັ້ນເຮັດໃຫ້ການຄຸ້ມຄອງໂຕນີ້ນິມີບັນຫາ, ມີຄວາມຫຍຸ້ງຍາກ, ເປັນບັນຫາທີ່ຫລໍ່ແຫລມທີ່ຈະເຮັດໃຫ້ມີການລັກລອບອອກຕ່າງໆ ບັນດາເລື່ອງແຮ່ເຫລັກຕ່າງໆ. ສ່ວນວ່າແຮ່ຫາຍາກນີ້ຢູ່ຊຽງຂວາງຂອງພວກເຮົາກໍມີຫລາຍໂຄງການ ແຕ່ວ່າມາຮອດປັດຈຸບັນນີ້ຖືວ່າມີ 2 ໂຄງການ ຖືວ່າເປັນພື້ນຖານ ແລະ ສາມາດເປີດໂຮງງານໄດ້ແລ້ວ ສະນັ້ນໂຕນີ້ນິ ກໍຢູ່ໃນສັນຍາກໍວ່າໃຫ້ເປັນໂຄງການຕົວແບບທົດລອງຢູ່ແຂວງຊຽງຂວາງຫັ້ນແລະ ຄັນຖ້າວ່າໄດ້ມີຜົນສຳເລັດ ກໍຢາກໃຫ້ຂະຫຍາຍອອກ ອັນນີ້ຢາກໃຫ້ລັດຖະບານເບິ່ງຄືນ ສຶກສາເບິ່ງໂຕນີ້ວ່າມີເສດຖະກິດ

ອ່ານຕໍ່ໜ້າ 7...

# ເບິ່ງຄືນ ເຂດເສດຖະກິດພິເສດ



ຄຳເຫັນຂອງທ່ານ ທ່ານ ປອ. ໄຊບັນດິດ ຣາຊະພົນ ສະມາຊິກສະພາແຫ່ງຊາດ ເຂດເລືອກຕັ້ງທີ 15 ແຂວງໄຊສົມບູນ ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ

ກ່ອນອື່ນໝົດ ຂ້າພະເຈົ້າຂໍສະແດງຄວາມເປັນເອກະພາບຕໍ່ກັບຄຳຖາມເຈາະຈີ້ມຂອງທ່ານປະທານ ພ້ອມກັນນັ້ນກໍເຫັນດີເປັນເອກະພາບຕໍ່ກັບບົດປະກອບຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດ, ແຕ່ກໍມີບາງບັນຫາທີ່ຢາກຈະເພີ່ມເຕີມ ແລະ ແລກປ່ຽນນຳ ໂດຍສະເພາະກ່ຽວກັບຄຳຖາມທີ່ວ່າພວກເຮົາຈະເຮັດໄດ້ບໍ່ ອັດຕາເຕີບໂຕສຳລັບ 2023 GDP 4,5% ນີ້ເນາະ, ຂ້າພະເຈົ້າຄິດວ່າເປັນໄປໄດ້ກໍເຫັນດີເນາະ ແຕ່ວ່າພວກເຮົາຈະຕ້ອງໄດ້ອອກແຮງຕື່ມ, ຈະຕ້ອງໄດ້ສ້າງກົນໄກ ສ້າງສັກກະຍາພາບຫລາຍໆຢ່າງເພີ່ມຕື່ມ. ໃນນັ້ນ, ຂ້າພະເຈົ້າຄິດວ່າໜຶ່ງໃນໂຄງການທີ່ພວກເຮົາຈະເບິ່ງຕື່ມ ແມ່ນອີງໃສ່ດຳລັດໂຕອອກໃໝ່ ກ່ຽວກັບພົນລະເມືອງກິດຕິມະສັກ 279/ລບ, ລົງວັນທີ 9/8/2022 ນີ້ ຂ້າພະເຈົ້າຄິດວ່າ ຜ່ານມາພວກເຮົາໄດ້ອອກໃຫ້ຕັ້ງແຕ່ຜູ້ທີ່ມີຜົນງານແລ້ວເນາະ ຜູ້ທີ່ໄດ້ເຮັດໄປແລ້ວພວກເຮົາໄດ້ໃຫ້ເພິ່ນ. ແຕ່ຂ້າພະເຈົ້າຄິດວ່າ ແຫລ່ງລາຍຮັບຕົວຈິງຫລັກໆນີ້ ແມ່ນຕ້ອງໄດ້ມາຈາກຜູ້ທີ່ຍັງບໍ່ທັນໄດ້ມາ ເຮົາຢາກດຶງດູດເອົາແຮງງານອັນໃໝ່ ເຮົາຢາກດຶງດູດໄດ້ແຫລ່ງທຶນອັນໃໝ່ ເຮົາຈະຕ້ອງອອກກົນໄກອັນໃໝ່ ຕ້ອງອອກນະໂຍບາຍອັນໃໝ່ເນາະ. ຢູ່ໃນນີ້ເພິ່ນກໍວ່າ ລົງທຶນ 500.000 ໂດລາ ຫາ 1.000.000 ໂດລາ, ຖ້າຫາກວ່າ 1.000.000 ໂດລາຕໍ່ຄົນ ຜູ້ໃໝ່ມາລົງທຶນ ມີພັນຄົນມາເຮົາກໍຈະໄດ້ 1 ຕື້, ໃນ 1 ຕື້ໂດລານັ້ນ (ຂໍອະນຸຍາດເວົ້າເປັນເງິນໂດລາ) ຈະສໍ່າກັບວ່າ 6% ຂອງ GDP ສາມາດຫລຸດຄວາມດຸ່ນດ່ຽງງົບປະມານໄດ້ ຊຶ່ງ 2,16% ທີ່ທ່ານລັດຖະມົນຕີກະຊວງການເງິນທີ່ໄດ້ເວົ້າໄປແລ້ວນັ້ນ ອັນນີ້ແມ່ນວິທີການໜຶ່ງທີ່ຈະສ້າງລາຍຮັບໄດ້ດີ. ຂ້າພະເຈົ້າຄິດວ່າປະເທດລາວເຮົານີ້ຍັງແມ່ນປະເທດທີ່ສົດໃສ ປະເທດທີ່ສວຍງາມໃຜກໍຢາກມາ ໃຜກໍຢາກມາທ່ຽວ ແລະ ຢາກມາຢູ່ອີກດ້ວຍ ອັນນີ້ ພວກເຮົາຄວນເບິ່ງຄືນຕື່ມ ແລະ ອອກນະໂຍບາຍຢ່າງຄັກແນ່ ອັນນີ້ຈະສ້າງລາຍຮັບໄດ້ດີ.

ອັນທີສອງ ຂ້າພະເຈົ້າຢາກຂໍປະກອບຄຳເຫັນ ດັ່ງນີ້: ຫລາຍໆທ່ານກໍໄດ້ເວົ້າໄປແລ້ວ ແມ່ນກ່ຽວກັບເລື່ອງວິຊາຊີບ. ຂ້າພະເຈົ້າຄິດວ່າໃນຍຸກປັດຈຸບັນນີ້ຫາອະນາຄົດ ໂດຍສະເພາະເຮົາຕ້ອງເບິ່ງອະນາຄົດ ໃນອານາຄົດນີ້ຫລາຍໆວິຊາການຈະຫາຍຕົວໄປ ຈະໝົດໄປ ຈະບໍ່ໄດ້ມີ, ຈະນຳໃຊ້ເຕັກໂນໂລຢີ ຈະນຳໃຊ້ AI ຈະນຳໃຊ້ອື່ນໆເຂົ້າມາ,ດັ່ງນັ້ນແລ້ວພວກເຮົາຈະຕ້ອງກຽມພ້ອມຕໍ່ກັບການປ່ຽນແປງຂອງສັງຄົມ ວິທີການເຮັດຕ່າງໆດັ່ງກ່າວນີ້, ໂດຍສະເພາະແມ່ນພວກເຮົາເອງນີ້ ເຮົາຊິເຮັດຫຍັງ ຫລື ສິສ້າງລາຍຮັບຈາກພວກນີ້ໄດ້ຄືແນວໃດ. ຂ້າພະເຈົ້າວ່າໜຶ່ງໃນຫັ້ນເລື່ອງເຕັກໂນໂລຢີຂອງພວກເຮົາຍັງບໍ່ທັນກຽມພ້ອມພຽງພໍ ສະຖາບັນ, ສູນຄົ້ນຄ້ວາ, ມະຫາວິທະຍາໄລ, ວິທະຍາໄລ, ວິຊາຊີບ ແລະ ອື່ນໆນີ້ຍັງບໍ່ທັນມີ ພວກເຮົາຄວນສົ່ງເສີມ ເຮັດແນວໃດ. ຂໍອະນຸຍາດຍົກຕົວຢ່າງ ປະເທດທີ່ວ່າເກັ່ງເລື່ອງການ Programming ພວກເຮົາກໍຄວນຈະນຳໃຊ້ຫລືຊົມໃຊ້ ໂຕນີ້ມັນຫາໄດ້ງ່າຍ ບໍ່ໄດ້ຍາກ ຄົນລາວຮຽນໜັງສືເກັ່ງ ໂດຍສະເພາະດ້ານສາຍທຳມະຊາດ, ຮຽນເລກກໍເກັ່ງ, ເຄມີ ຫລື ອື່ນໆ ຟີຊິກກໍເກັ່ງເນາະ, ຂ້າພະເຈົ້າຄິດວ່າ ພວກເຮົາຄວນສົ່ງເສີມເອົາອັດສະລິຍະຂອງພວກເຮົາ ນັກຮຽນເກັ່ງໆພວກເຮົານີ້ ໂຮງຮຽນພອນສະຫວັນອື່ນໆມາສ້າງ ພວກໂປຣແກຣມ Programming ໃຫ້ມັນໄດ້ຄັກໆ ເພາະວ່າການວ່າຈ້າງ Programming ຕ່າງໆແມ່ນລະດັບສູງ. ຄືພວກເຮົາໄດ້ຮູ້ກັນແລ້ວ ປັດຈຸບັນນີ້ ພວກເຮົາເປັນພຽງຜູ້ນຳໃຊ້ ແຕ່ພວກເຮົາຕ້ອງກາຍເປັນຜູ້ປະດິດ ພວກເຮົາຈຶ່ງຈະມີມູນຄ່າສູງ ຂ້າພະເຈົ້າຄິດວ່ານີ້ແມ່ນໜຶ່ງສາຂາທີ່ພວກເຮົາຈະຕ້ອງໄດ້ລົງເລິກຄັກແນ່ ແລະ ຄົ້ນຄ້ວາ, ມອບໃຫ້ທາງລັດຖະບານຄົ້ນຄ້ວາຕື່ມ. ນອກຈາກນັ້ນສາຂາທີ່ພວກເຮົາຄວນເບິ່ງແມ່ນເລື່ອງສາທາລະນະສຸກ, ເລື່ອງສຸຂະພາບແມ່ນໃຜກໍເປັນຫ່ວງສຸຂະພາບ ໃຜກໍຢາກມີອາຍຸຍືນ ອັນນີ້ກໍແມ່ນສຳຄັນເພາະສະນັ້ນແລ້ວ ສາຂານີ້ເດ ພວກເຮົາສິເຮັດຈັ່ງໃດ ໃນເມື່ອພວກເຮົາມີປະເທດທີ່ສວຍງາມ ມີອາກາດທີ່ດີ ມີສີຂຽວ ມີພູມສັນຖານ ແລະ ອື່ນໆ ພວກເຮົາຕ້ອງສ້າງໃຫ້ມັນເກີດ. ຂ້າພະເຈົ້າຄິດວ່າ ຄືດັ່ງທ່ານປະທານໄດ້ເວົ້າໄປແລ້ວ ທ່ອງທ່ຽວເຮົາຊິມີຫຍັງແດ່ ນອກຈາກທ່ອງທ່ຽວທຳມະຊາດ ທ່ອງທ່ຽວກະສິກຳ ແລະ ອື່ນໆ, ເຮົາຕ້ອງມີທ່ອງທ່ຽວສຸຂະພາບ ອັນນີ້ແມ່ນສຳຄັນຫລາຍ ການທ່ອງທ່ຽວສຸຂະພາບຈະເຮັດໃຫ້ສ້າງລາຍຮັບໄດ້ດີກວາເກົ່າ ເຮົາຈະບໍ່ໄດ້ລົງທຶນຫລາຍ ພຽງແຕ່ສ້າງພື້ນຖານອື່ນໆໃຫ້ມັນກົມກຽວກັນຈຶ່ງເຮັດໄດ້ເນາະ. ແນ່ນອນແລ້ວໃນປັດຈຸບັນນີ້ ສາຂາອັນໜຶ່ງທີ່ກຳລັງເຮັດດີ ແລະ ກໍສ້າງລາຍຮັບໄດ້ດີ ກໍຄືສາຂາກະສິກຳ-ປ່າໄມ້ ພວກເຮົາກໍໄດ້ສົ່ງອອກຫລາຍ ມີລາຍຮັບເຂົ້າມາຫລາຍ ໂດຍສະເພາະ ແມ່ນຢາງພາລາ, ແຕ່ຢາງພາລາແທ້ ກໍຍັງບໍ່ຮູ້ວ່າຊິມີຜົນກະທົບອີຫຍັງຕໍ່ໄປ ຢາກໃຫ້ມີແນວອື່ນຕື່ມເນາະ ແລະ ປັດຈຸບັນນີ້ ອີກອັນໜຶ່ງສາຂາທີ່ພວກເຮົາກຳລັງເບິ່ງກັນເຖິງວ່າພວກເຮົາເປັນປະເທດແລນລິ້ງ (Land Link) ປະເທດທີ່ເຊື່ອມໂຍງໄດ້ສ້າງກົນໄກຫລາຍໆຢ່າງ ໄດ້ສ້າງເສັ້ນທາງ, ສາຍການບິນ, ທາງລົດໄຟ ແລະ ອື່ນໆ ຂ້າພະເຈົ້າຄິດວ່າອັນນີ້ ກໍຄວນນຳໃຊ້ໃຫ້ມັນໄດ້ ເນື່ອງຈາກວ່າ ຖ້າເຮົາຜະລິດກະສິກຳທີ່ດີ ສີຂຽວ ມີຄຸນນະພາບຕໍ່ຊີວິດ ເຮົາສາມາດສົ່ງອອກໄດ້, ສາມາດສ້າງລາຍຮັບໄດ້ດີ ຂ້າພະເຈົ້າຄິດວ່າໃຫ້ ແລະ ກໍຄວນຄົ້ນຄ້ວາຕື່ມວ່າ ການສົ່ງຜະລິດຕະພັນພວກເຮົານີ້ອອກໄປຂາຍຕ່າງປະເທດໄດ້ຄືແນວໃດ ໂດຍສະເພາະແມ່ນຜະລິດຕະພັນສີຂຽວ ຜະລິດຕະພັນອໍການິກນີ້ລະເນາະ ມັນຈຶ່ງຊິມີລາຍຮັບເຂົ້າມາໄດ້ດີ ພວກເຮົາຕ້ອງການມີລາຍຮັບ ຈຶ່ງຊິມີເງິນຕາສູງ ສ້າງເສດຖະກິດເຂັ້ມແຂງ.

ຕໍ່ໄປທີ່ຂ້າພະເຈົ້າຢາກປະກອບຄຳເຫັນ ແລະ ແລກປ່ຽນຕື່ມອີກ ແມ່ນກ່ຽວກັບ ເລື່ອງເຂດເສດຖະກິດພິເສດ ປັດຈຸບັນນີ້ 12 ເຂດ ຂ້າພະເຈົ້າຄິດວ່າກໍຈະມີສະເພາະຂອງເພິ່ນວ່າປະເພດຫຍັງຕ່າງໆ, ແຕ່ມາປາກົດເບິ່ງຕົວຈິງແລ້ວ ມັນຍັງມີການສັບສົນ ຫລື ມີການຂັດແຍ່ງກັບບັນດາທຸລະກິດທີ່ຢູ່ນອກເຂດເສດຖະກິດ. ມັນເຮັດໃຫ້ມີການຍາດແຍ່ງແຮງງານ, ຍາດແຍ່ງສີມື, ຍາດແຍ່ງປະສົບການ ແລະອື່ນໆ ສະນັ້ນແລ້ວຂ້າພະເຈົ້າຈຶ່ງວ່າເຮັດແນວໃດພວກເຮົາຈຶ່ງຊິສາມາດ ໃຫ້ມັນກົມກຽວກັນໄດ້ລະຫວ່າງ ເຂດເສດຖະກິດພິເສດ ແລະ ບໍ່ແມ່ນເສດຖະກິດພິເສດນີ້ເນາະ ເພາະມັນເຮັດໃຫ້ມີສອງລະບົບທີ່ວ່າມັນຂັດແຍ່ງ, ຂ້າພະເຈົ້າຄິດວ່າເຮັດແນວໃດ ຖ້າວ່າເຮັດໃຫ້ເປັນອັນດຽວກັນກໍເປັນການດີ ເອົາໝົດປະເທດເຮົາເລີຍເປັນເສດຖະກິດພິເສດຊິບໍ່ດີກ່ອນບໍ່ເນາະ ຂ້າພະເຈົ້າຄິດວ່າ ອັນນີ້ຈະເປັນການດຶງດູດອັນໜຶ່ງເພື່ອເຮັດໃຫ້ໄດ້ດີ.

ອີກບັນຫາໜຶ່ງທີ່ຫລາຍໆທ່ານກໍໄດ້ເວົ້າໄປແລ້ວ ກ່ຽວກັບເລື່ອງ SME ພວກເຮົາກໍຮູ້ກັນແລ້ວວ່າປະຊາຊົນລາວສ່ວນຫລາຍຈະແມ່ນ MSME ຫລື SME ແລະ ກົດໝາຍວ່າດ້ວຍຈຸນລະວິສາຫະກິດ, ກົດໝາຍວິສາຫະກິດກໍໄດ້ມາປຶກສາຫາລື ແລະ ໄດ້ມາຜ່ານທາງສະພາແຫ່ງຊາດພວກເຮົານີ້ແລ້ວ ສະນັ້ນການຈັດຕັ້ງປະຕິບັດ ຂ້າພະເຈົ້າຄິດວ່າຄວນໃຫ້ເປັນໄປໄດ້ ສິສ້າງທະນາຄານເບາະ ຫລື ສ້າງກົນໄກອັນໃດອັນໜຶ່ງ ເຮັດໃຫ້ທຸລະກິດພວກນີ້ ເຮັດໃຫ້ຈຸນລະວິສາຫະກິດພວກນີ້ເຂັ້ມແຂງຂຶ້ນໄດ້. ຖ້າຫາກວ່າພວກນີ້ເຂັ້ມແຂງຂຶ້ນໄດ້ ເຂົາຈະຊ່ວຍໃນການເສຍພັນທະ ເສຍພາລະ ແລະ ອື່ນໆໃຫ້ກັບງົບປະມານຂອງພວກເຮົາໄດ້ດີ ຂ້າພະເຈົ້າຄິດວ່າ ເຮົາຄວນທີ່ຈະມີກົນໄກທີ່ດີໄປກ່ວານີ້ ໃຫ້ມັນໄດ້ເຂົ້າເຖິງໝົດທຸກຄົນ. ບາດນີ້ສະເພາະເລື່ອງຈຸນລະວິສາຫະກິດ ຫລື ວິສາຫະກິດນີ້ ຢູ່ໃນທຸກຂະແໜງການ ໂດຍສະເພາະບ້ານເຮົາຕ້ອງເນັ້ນໃສ່ການບໍລິການກະສິກຳ ແລະ ເຕັກໂນໂລຢີ.

# ການສະຫລຸບ ແລະ ການສ້າງແຜນ



ຄຳເຫັນຂອງທ່ານ ປະເດີມ ພອນ ສິນທະນີ ສະມາຊິກສະພາແຫ່ງຊາດ ເຂດເລືອກຕັ້ງທີ 14 ແຂວງສາລະວັນ ຕໍ່ບົດລາຍງານລັດຖະບານ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ

ກ່ອນອື່ນ ຂ້າພະເຈົ້າກໍຂໍສະແດງຄວາມເຫັນດີເປັນເອກະພາບນຳການສະເໜີ ກໍຄືການປະກອບຄຳຄິດຄຳເຫັນຂອງບັນດາທ່ານທັງໝົດຜ່ານມານັ້ນ ຈຸດທີ່ຂ້າພະເຈົ້າຢາກປະກອບຄຳເຫັນນີ້:

ອັນທີໜຶ່ງ ຢາກໃຫ້ຂໍ້ສັງເກດກ່ຽວກັບການສະຫລຸບ ແລະ ການສ້າງແຜນ ກໍເຂົ້າໃຈວ່າການສະຫລຸບ ກໍຄືການສ້າງແຜນນີ້ ແມ່ນພວກເຮົາອີງໃສ່ຄວາມຮູ້ຄວາມສາມາດ ກໍຄືປະສົບການໃນການປະຕິບັດຜ່ານມາແຕ່ລະໄລຍະ, ແຕ່ວ່າ ຂ້າພະເຈົ້າກໍຍັງເຫັນວ່າປະເດັນສຳຄັນເຊິ່ງເຮົາເຂົ້າໃຈວ່າ ສິ່ງທີ່ເຮົາຂຶ້ນແຜນມານັ້ນ ແມ່ນສິ່ງທີ່ເຮົາຢາກໄດ້ ແລະ ກໍອີງໃສ່ງົບປະມານທີ່ມີ ບາງເທື່ອນີ້ກໍຢາກໄດ້ຫລາຍກ່ອນນີ້ ຢາກເຮັດດີກ່ອນນີ້ ແຕ່ງົບປະມານກໍຈຳກັດ ພວກເຮົາກໍພະຍາຍາມກຳນົດເອົາສຳນີ້ ຄິດວ່າຫລາຍກະຊວງຫລາຍພາກສ່ວນກໍພະຍາຍາມເຮັດແນວນັ້ນ ກໍພະຍາຍາມເຮັດແນວນັ້ນ. ແຕ່ທັງນີ້ທັງນັ້ນ ຂ້າພະເຈົ້າຄິດວ່າ ທີ່ເປັນປັດໃຈຕັດສິນອີກຢ່າງໜຶ່ງ ກໍແມ່ນງົບປະມານ ພວກເຮົາພ້ອມກັນຂຶ້ນແຜນວ່າຊິເຮັດອັນນັ້ນທໍ່ນັ້ນ ເຮັດອັນນີທໍ່ນີ້ ແຕ່ສຸດທ້າຍງົບປະມານບໍ່ມີ ຫລືມາຊ້າກໍຄິດວ່າຊິບັນລຸ ຊິຂັບເຄື່ອນແຜນດັ່ງກ່າວແມ່ນຍາກ, ຈັ່ງຊັ້ນເຫັນຄວາມຈຳເປັນວ່າ ຜູ້ທີ່ບັນຊາງົບປະມານນີ້ຈະມີກົນໄກການປະສານງານແນວໃດໃຫ້ສາມາດຂັບເຄື່ອນວຽກນີ້ໄດ້ ອັນຈຸດທີໜຶ່ງ ທີ່ຂ້າພະເຈົ້າຢາກຍົກຂຶ້ນ.

ຈຸດທີສອງ ຂ້າພະເຈົ້າຢາກຍົກຂຶ້ນ ເລື່ອງການບໍລິຫານລັດໃຫ້ມີປະສິດທິພາບນີ້ ຫາກໍຫລາຍທ່ານໄດ້ມີຄຳເຫັນໄປແລ້ວວ່າ ຄ່າຄອງຊີບກໍຂຶ້ນສູງ ເງິນນະໂຍບາຍ ເງິນເດືອນກໍຍັງຄືເກົ່າ ແລະ ຂ້າພະເຈົ້າກໍຢາກຢືນຢັນຄືນ ແລະ ເຫັນຄວາມເອກະພາບຄືນວ່າ ຖ້າວ່ານະໂຍບາຍ ເງິນເດືອນຂອງພວກເຮົາຍັງຢູ່ແບບນີ້ໄປອີກດົນນີ້ນະ ຄຳວ່າຮັບປະກັນຄຸນນະພາບ ແລະ ປະສິດທິພາບນີ້ ບໍ່ຢາກຮັບປະກັນປານໃດ ສຳລັບຂ້າພະເຈົ້າຄິດໄດ໋, ແຕ່ແນ່ນອນວ່າ ເບື້ອງລັດຖະບານກໍໄດ້ມີຄວາມພະຍາຍາມວ່າຈະພະຍາຍາມທົບທວນຄືນ ຈະພະຍາຍາມເບິ່ງຄືນເງິນນະໂຍບາຍ ເງິນເດືອນນັ້ນ ແລະ ສິ່ງທີ່ຂ້າພະເຈົ້າຢາກຍົກຂຶ້ນຢູ່ນີ້ວ່າຢາກໃຫ້ເບິ່ງນີ້ແມ່ນເບິ່ງຫຍັງ, ເຮົາມີໜ້ອຍທັນນ່າ ເຮົາມີໜ້ອຍເບິ່ງຄວາມຈຳເປັນພື້ນຖານທີ່ມີຄວາມເອກະພາບ ຕົວຢ່າງ: ຜູ້ທີ່ເຮັດວຽກຢູ່ຫ່າງໄກສອກຫລີກ ຈະຕ້ອງການງົບປະມານແນວໜຶ່ງຕ່າງຫາກ, ຜູ້ທີ່ເຮັດວຽກຢູ່ໃນເມືອງ ກໍຕ້ອງການແນວໜຶ່ງຕ່າງຫາກ ແລະ ງົບປະມານທີ່ຈຳເປັນພື້ນຖານຫັ້ນ, ຂ້າພະເຈົ້າຄິດວ່າ ຄວນໄດ້ມີການຊົມໃຊ້ເທົ່າທຽມກັນ ຍົກຕົວຢ່າງ ຜູ້ທີ່ເດີນທາງໄກ ເງິນເດືອນ, ເດີນທາງກໍບໍ່ພໍແລ້ວ, ຍົກຕົວຢ່າງຊິໃຫ້ເຂົາມີຄຸນນະພາບ ມີປະສິດທິພາບໃນການເຮັດວຽກນີ້ ຖ້າຈະໃຫ້ມັນຮ້ອຍມັນກໍບໍ່ຢາກຮ້ອຍປານໃດ ຂ້າພະເຈົ້າຄິດ ແລະ ຜູ້ທີ່ບໍ່ໄດ້ເດີນທາງໄກງົບປະມານກໍໄດ້ສໍ່າກັນຍົກຕົວຢ່າງຊື້ເນາະ ອັນນີ້ແມ່ນຍົກຕົວຢາງບາງອັນທີ່ຂ້າພະເຈົ້າຢາກຕັ້ງຂຶ້ນວ່າ ເວລາເຮົາປັບປຸງນະໂຍບາຍນີ້ ຄວນໄດ້ຄຳນຶງເຖິງວ່າ ອັນໃດແມ່ນຄວາມຈຳເປັນພື້ນຖານທີ່ມີຄວາມເປັນເອກະພາບ ໂຕນີ້ໆທີ່ຂ້າພະເຈົ້າຍົກຂຶ້ນນັ້ນຄື ຢູ່ ສສ.ຫວຽດນາມ ຂ້າພະເຈົ້າໄດ້ຍິນແຕ່ຊຸມປີ 80 ພຸ້ນໄດ໋ ອັນພາສາຫວຽດເພິ່ນເອີ້ນວ່າ ເຈີ້ ເກິບ ຄູ ວຶກ (Trợ cấp khu vực) ທັ້ນນະເນາະ ເພິ່ນມີແຕ່ດົນແລ້ວອັນນີ້ນະ ໝາຍວ່າ ເປົ້າໝາຍພວກເຮົາຄວນໃຫ້ກັນແນວໃດ, ອັນໃດກໍຢ່າ, ເທົ່າທຽມກັນໝົດນີ້ມັນກໍຊິມີຄວາມຫຍຸ້ງຍາກໃນການຮັບປະກັນຄຸນນະພາບ.

ອັນຕໍ່ມານີ້ ຂ້າພະເຈົ້າຢາກຍົກຂຶ້ນ ແມ່ນເລື່ອງຊັບພະຍາກອນມະນຸດ ໂຕນີ້ນີ້ ມັນກໍຕິດພັນກັບຫລາຍຂະແໜງການ ກໍຂ້າພະເຈົ້າຈະຍົກຂຶ້ນນີ້ບໍ່ໝາຍວ່າມີແຕ່ກະຊວງແຮງງານຄືບໍ່ເຮັດ ທີ່ຂ້າພະເຈົ້າຢາກເວົ້ານີ້ໄດ໋ ຍົກຕົວຢ່າງວ່າ ປັດຈຸບັນນີ້ນະ ຄວາມຕ້ອງການຂອງຕະຫລາດແຮງງານນີ້ ມັນແມ່ນແລ້ວບໍ ວ່າລະບົບການສຶກສາຂອງເຮົາຕອບສະໜອງຄວາມຕ້ອງການຕະຫລາດແຮງງານ, ເຮົາມີຫລາຍວິສາຫະກິດ, ມີຫລາຍບໍລິສັດ ບາດນີ້ເຮົາມາເບິ່ງວ່າແຕ່ລະບໍລິສັດ, ວິສາຫະກິດ ມັນມີດ່ອກເຕີຈັກຄົນ, ປະລິນຍາໂທຈັກຄົນ, ນອກຈາກນັ້ນ ແມ່ນໃຜ ແລະ ເຮົາເປັນຫຍັງບໍ່ຝຶກ ບໍ່ສ້າງຄວາມເຂົ້າໃຈ ບໍ່ສ້າງລະບົບໃຫ້ໄປດຶງດູດຄົນໃຫ້ໄປລະບົບແນວນັ້ນ, ດຽວນີ້ນັກລົງທຶນຊິມາລົງທຶນນີ້ເຂົາບໍ່ໄດ້ມາຖາມໄດ໋ວ່າຈົບປະລິນຍາເອກຈັກຄົນ ປະລິນຍາໂທຈັກຄົນ ເຂົາຈະເອົາຄົນທີ່ເຂົາຕ້ອງການເອົາມາເຮັດວຽກ ມີຄຸນນະພາບນັ້ນມາເຮັດວຽກ ແລະ ບາດນີ້ ເຮົາພັດພາກັນຝຶກກັນຍາດເອົາໃບປະກາດ ໄປຍາດເອົາຊັ້ນເງິນເດືອນເຜີ໋ງ ຄຸນນະພາບນີ້ຈັກສໍ່າໃດ. ຂ້າພະເຈົ້າຄິດວ່າ ເຮົາຄວນມີກົນໄກລຸກໃໝ່ນັ່ງໃໝ່ ຄິດວ່າດຽວນີ້ ເຮົາຈະສ້າງກຳລັງແຮງງານເຮົາຄືແນວໃດ ເພື່ອໃຫ້ຕິດພັນກັບຄວາມຕ້ອງການກັບຕະຫລາດແຮງງານ ແລະ ຈະບໍ່ແມ່ນແຕ່ກະຊວງແຮງງານ ວຽກເຮັດໂຕນີ ອັນນີ້ແມ່ນຂ້າພະເຈົ້າຢາກຕັ້ງຂຶ້ນ.

ປະເດັນຕໍ່ມາ ຂ້າພະເຈົ້າຢາກຍົກຂຶ້ນ ເລື່ອງການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ. ການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນນີ້ ກໍແນ່ນອນແລ້ວ ດຽວນີ້ໆການມີສະຕິ, ການມີສ່ວນຮ່ວມ, ການເປັນເຈົ້າການໃນການປະຕິບັດນິຕິກຳລະບຽບກົດໝາຍນີ້ ໃນສັງຄົມເຮົານີ້ ບາງເທື່ອກໍຄິດວ່າ ບາງຈຸດ, ບາງບ່ອນ, ບາງກຸ່ມຄົນ ກໍບໍ່ທັນສູງປານໃດ. ຕົວຢ່າງ ກົດໝາຍປະກັນສັງຄົມ, ກົດໝາຍປະກັນສຸຂະພາບ ດັ່ງກົດໝາຍປະກັນສຸຂະພາບນີ້ ຕ້ອງເວົ້າຈະແຈ້ງວ່າມັນຕ້ອງສະໜອງງົບປະມານໃຫ້ພຽງພໍ ແລະ ການບໍລິການກໍຕ້ອງມີຄຸນນະພາບ ແລະ ການບໍລິການຂັ້ນພື້ນຖານ ແລະ ປະກັນສັງຄົມກໍຄືກັນ ວ່າເປັນພາກບັງຄັບ ທຸກຫົວໜ່ວຍວິສາຫະກິດໃນລະດັບໃດທີ່ເປັນພາກບັງຄັບ, ແຕ່ຕົວຈິງ ປະກັນສັງຄົມທຸກມື້ນີ້ໄດ້ຈັກເປີເຊັນຂອງກຸ່ມເປົ້າໝາຍ ບໍ່ໄດ້ຮອດ 40% ຂອງກຸ່ມເປົ້າໝາຍຊໍ້າ, ບາດນີ້ປະກັນສັງຄົມ ແລະ ປະກັນສຸຂະພາບມັນດຸ່ນດ່ຽງກັນໄດ໋ ຖ້າວ່າເຂົ້າປະກັນສັງຄົມຫລາຍ ປະກັນສັງຄົມເປັນລະບົບທີ່ສ້າງຂຶ້ນແບບໃຫ້ກຸ້ມຕົນເອງທາງດ້ານການເງິນ ຊ່ວຍເຫລືອເຊິ່ງກັນແລະກັນ, ສະເລ່ຍຄວາມສ່ຽງ, ຊື້ປະກັນສຸຂະພາບ ບໍ່ແມ່ນຊິມີຄວາມສ່ຽງ ຊື້ປະກັນສຸຂະພາບ ແມ່ນມີລັດຖະບານອູ້ມໂດຍມີການຈ່າຍຮ່ວມ ເຂົາເອີ້ນວ່າ ໂກເພເມັ້ນ (Go Payments) ປະກັນສັງຄົມເຂົາເອີ້ນວ່າ ພີ້ເພເມັ້ນ (Prepayment) ໝາຍຄວາມວ່າ ຕ້ອງຈ່າຍກ່ອນ ແລ້ວເອົາເງິນດັ່ງກ່າວມາສະເລ່ຍນຳກັນ ແລະ ຜູ້ທີ່ເປັນປະກັນສັງຄົມກໍໄດ້ຮັບປະກັນສຸຂະພາບ ລະບາດນີ້ ເຂົາເຈົ້າຢາກຈ່າຍລະບົບປະກັນສຸຂະພາບດ້ວຍເຂົາເອງ ເຊິ່ງວ່າຜູ້ທີ່ບໍ່ເຂົ້າປະກັນສັງຄົມຫັ້ນລະແມ່ນເຂົາເຈົ້າເອົາເງິນລັດໄປ.

ສຳລັບບັນຫາສຸດທ້າຍນີ້ ແມ່ນກ່ຽວກັບເລື່ອງການຫັນໄປສູ່ທັນສະໄໝ ຂ້າພະເຈົ້າຄິດວ່າພວກເຮົາຈະຕ້ອງຈິງຈັງແທ້ໆ ກ່ຽວກັບການຫັນໄປສູ່ທັນສະໄໝ ມັນຈຶ່ງຈະຊ່ວຍໃຫ້ມີຄວາມໂປ່ງໃສ ມີຄວາມຊັດເຈນ ໂດຍສະເພາະຕ້ອງມີກົນໄກການປະສານງານກັນຄັກແນ່ລະຫວ່າງ ກະຊວງທີ່ກ່ຽວຂ້ອງ ກະຊວງເຕັກໂນໂລຢີ ແລະ ການສື່ສານ, ທະນາຄານແຫ່ງຊາດ ແລະ ກະຊວງການເງິນ ເຮັດຈັ່ງໃດການນຳໃຊ້ເງິນຜ່ານລະບົບບັນຊີ,ການໂອນການໃຊ້ຈ່າຍຫຍັງຕ່າງໆໃຫ້ມັນໄດ້ປະກົດຜົນເປັນຈິງ ຢ່າງແທ້ຈິງໃນເວລານັ້ນເງິນຈະເຂົ້າຢູ່ໃນລະບົບ ແລະ ອື່ນໆດັ່ງຊັ້ນແລ້ວDigitalCurrency ຂອງພວກເຮົາຈຶ່ງຈະເກີດຂຶ້ນໄດ້ ແລະ ການນຳໃຊ້ເງິນ Digital ກໍຈະເປັນໄປໄດ້ດີ ແລະ ການຊື້ຂາຍຂ້າມຊາດ ກໍຈະເປັນໄປໄດ້ດີຂຶ້ນ ຂໍຂອບໃຈທ່ານປະທານ.

## ເພີ່ມທະວີ...

ຂອງພັກ-ລັດ ຕໍ່ກັບຄູອາສາສະໝັກຢູ່ຂັ້ນຮາກຖານນີ້ ເຫັນວ່າຜ່ານມາຍັງມີຫລາຍຄົນ, ຫລາຍເຂດ, ຫລາຍເມືອງທີ່ວ່າໄດ້ໄປສອນແລ້ວແຕ່ຍັງບໍ່ໄດ້ຮັບເປັນລັດຖະກອນ ຢູ່ໃນຈຸດນີ້ຜ່ານການລົງເຄື່ອນໄຫວຂອງສະມາຊິກສະພາແຫ່ງຊາດ ປະຊາຊົນກໍໄດ້ສະເໜີແລ້ວສະເໜີອີກ ປີແລ້ວນີ້ກໍໄດ້ເວົ້າແລ້ວ ດຽວນີ້ມາເບິ່ງແລ້ວຈຳນວນພະນັກງານຄູທີ່ຮອດກະສຽນບຳນານໄດ້ພັກຜ່ອນແຕ່ລະປີເປັນຈຳນວນຫລາຍ ແລະ ໂກຕາຮັບລັດຖະກອນເຂົ້າໃໝ່ຊ້ຳພັດໜ້ອຍ ຢູ່ໃນຈຸດນີ້ຄິດວ່າໃນອະນາຄົດກໍອາດຈະເຮັດໃຫ້ຂາດແຄນຄູສອນ ໃນເມື່ອເປັນຄືແນວນັ້ນຄຸນນະພາບຂອງນັກຮຽນຮຸ່ນໃໝ່ຊິເປັນແນວໃດ ຂໍຢາກໃຫ້ເພິ່ນທົບທວນຄືນເບິ່ງ ໂດຍສະເພາະແມ່ນຄູອາສາທີ່ໄດ້ສອນຫ້ອງຄວບ ອັນນີ້ກໍແມ່ນມີຄວາມຫຍຸ້ງຍາກຫລາຍ ບາງຄົນກໍມີແນວຄິດລໍຄອຍ ລໍຄອຍມາຫລາຍປີແລ້ວກໍບໍ່ໄດ້ ເຮັດໃຫ້ເຂົາເຈົ້າມີແນວຄິດທໍ້ຖອຍ ແລະ ກໍລາອອກຈາກການເປັນຄູອາສາຈຳນວນຫລາຍ; ສະນັ້ນ, ຈຶ່ງຢາກສະເໜີຜ່ານກອງປະຊຸມນີ້ ໃຫ້ທາງພາກສ່ວນກ່ຽວຂ້ອງໄດ້ນຳເອົາບັນຫານີ້ໄປຄົ້ນຄວ້າຊ່ວຍຕື່ມ.

2. ກ່ຽວກັບບັນຫາການຈັດຕັ້ງປະຕິບັດສອງວາລະແຫ່ງຊາດນີ້ ໂດຍສະເພາະກໍແມ່ນເວົ້າເລື່ອງການຂຸດຄົ້ນແຮ່ທາດ ເຊິ່ງວ່າຕິດພັນກັບການເກັບກູ້ໄມ້ ສຳລັບການຂຸດຄົ້ນແຮ່ທາດນີ້ ມັນກໍເປັນການກວດກາ, ເປັນການຈັດຕັ້ງປະຕິບັດ ຫລື ວ່າການອະນຸຍາດໃຫ້ພາກສ່ວນທຸລະກິດນີ້ດຳເນີນກິດຈະການການຂຸດຄົ້ນແຮ່ທາດ ໂດຍສະເພາະແມ່ນການຂຸດຄົ້ນແຮ່ທາດແບບທົດລອງ. ຜ່ານມາການສຳປະທານເນື້ອທີ່ຂຸດຄົ້ນ ບາງບໍລິສັດກໍໄດ້ຫລາຍ ແຕ່ເມື່ອໄດ້ຮັບສຳປະທານແລ້ວ ປະຊາຊົນຢາກເຂົ້າໄປທຳການຜະລິດ, ຢາກໄປປູກໄປຝັງພືດລົ້ມລຸກນີ້ກໍຖືວ່າບໍ່ໃຫ້ເຂົ້າໄປເລີຍໃນເຂດສຳປະທານ ອັນນີ້ກໍສ້າງຄວາມຫຍຸ້ງຍາກໃຫ້ແກ່ປະຊາຊົນທີ່ໃກ້ຄຽງໃນເຂດສຳປະທານນັ້ນ. ສະນັ້ນ, ບາງບ່ອນກະຖືວ່າເນື້ອທີ່ສຳປະທານຊ້ຳພັດຕິດພັນກັບປ່າສະຫງວນ, ບາງບ່ອນກໍແມ່ນມີການສວຍໂອກາດຕັດໄມ້ທຳລາຍປ່າ ເພາະວ່າເຂດດັ່ງກ່າວນັ້ນມີບໍລິສັດສຳປະທານແລ້ວ, ປະຊາຊົນຈຳນວນໜຶ່ງ ຫລື ວ່ານັກທຸລະກິດໄມ້ໄດ້ສວຍໂອກາດເຂົ້າໄປຂຸດຄົ້ນເອົາໄມ້ຢູ່ນັ້ນໂດຍບໍ່ຜ່ານການຈັດຕັ້ງ ອັນນີ້ກໍເຮັດໃຫ້ຄວາມຫຍຸ້ງຍາກໃນການປົກປັກຮັກສາ ແລະ ບໍ່ສາມາດຄຸ້ມຄອງໄດ້ໃນການເກັບລາຍຮັບນຳພາກສ່ວນກ່ຽວຂ້ອງ.

3. ກ່ຽວກັບການສົ່ງເສີມການຜະລິດ: ຕໍ່ກັບການຄຸ້ມຄອງ ແລະ ສົ່ງເສີມການຜະລິດ ຕິດພັນກັບການກຳນົດລາຄາສິນຄ້າໃນທ້ອງຕະຫລາດ ເຊິ່ງໃນປັດຈຸບັນ, ລັດຖະບານກໍໄດ້ມີນະໂຍບາຍວ່າດ້ວຍການສົ່ງເສີມການຜະລິດພາຍໃນເພື່ອທົດແທນການນຳເຂົ້າຈາກຕ່າງປະເທດ ແຕ່ໃນສະພາບລວມພາຍໃນປະເທດ ກໍຄືໃນແຂວງສະຫວັນນະເຂດ ກ່ຽວກັບການຈັດຕັ້ງປະຕິບັດວຽກງານນີ້ ກໍໄດ້ຊຸກຍູ້ ແລະ ສົ່ງເສີມໃຫ້ປະຊາຊົນທຳການຜະລິດ ແລະ ກໍຜະລິດໃຫ້ເປັນສິນຄ້າ ແຕ່ກໍຍັງບໍ່ທັນເຂັ້ມແຂງເທົ່າທີ່ຄວນ, ຍັງບໍ່ທັນເປັນຂະບວນການຟົດຟື້ນ ແລະ ເປັນລະບົບຄົບຊຸດ. ດັ່ງນັ້ນ, ຕໍ່ກັບຈຸດນີ້ທາງພາກລັດຂອງພວກເຮົານີ້ຄວນຈະມີສ່ວນຮ່ວມ ຫລື ຈະຍູ້ແຮງແນວໃດຕື່ມ. ນອກຈາກນັ້ນ, ກໍເຫັນຄວນໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງເພີ່ມທະວີຄວາມເປັນເຈົ້າການໃນການປົກປ້ອງຕະຫລາດສິນຄ້າທີ່ປະຊາຊົນລາວຂອງພວກເຮົາສາມາດຜະລິດໄດ້, ຖ້າວ່າຍັງປະປ່ອຍ ຫລື ໃຫ້ຂອງເຖື່ອນເຂົ້າມານີ້ກະແນ່ນອນແລ້ວມັນກະຊິຕີຕະຫລາດຂອງພວກເຮົາ ປະຊາຊົນກໍເກີດມີຄວາມທໍ້ຖອຍອີກ.

4. ດ້ານການເກັບລາຍຮັບ ແລະ ປະຕິບັດລາຍຈ່າຍງົບປະມານ: ເຫັນຄວນເພີ່ມທະວີຄວາມເຂັ້ມງວດໃນການເກັບລາຍຮັບງົບປະມານໃຫ້ຄົບຖ້ວນ, ຖືກຕ້ອງຕາມລະບຽບກົດໝາຍ ເປັນຕົ້ນ ການຫລົບຫລີກພາສີ, ອາກອນ ແລະ ຄ່າພາກຫລວງຊັບພະຍາກອນທຳມະຊາດຕ່າງໆ, ຄຽງຄູ່ກັນນັ້ນເຫັນຄວນໃຫ້ເພີ່ມທະວີຄວາມເຂັ້ມງວດໃນການປະຕິບັດກົດໝາຍວ່າດ້ວຍການປະມູນ, ການຈັດຊື້ຈັດຈ້າງ ແນໃສ່ອັດຊ່ອງຫວ່າງໃນການຮົ່ວໄຫລຂອງງົບປະມານແຫ່ງລັດໃຫ້ຫລຸດໜ້ອຍຖອຍລົງເທື່ອລະກ້າວ.

5. ເປັນການສະເໜີກໍວ່າແມ່ນ ເລື່ອງການຈັດສັນງົບປະມານ ໃນຈຸດນີ້ກໍຢາກສະເໜີໃຫ້ທັງກະຊວງກ່ຽວຂ້ອງເບິ່ງຕົວຈິງໃນການຈັດແບ່ງງົບປະມານ ຄັນສິແບ່ງເອົາຕາມຈຳນວນພົນກໍໃຫ້ເບິ່ງຕາມຈຳນວນພົນ ຫລື ວ່າເປັນຈຳນວນເມືອງບໍ່ແຂວງໃຫຍ່, ແຂວງນ້ອຍທັ້ນນາ ບໍ່ຢາກໃຫ້ສະເລ່ຍແບບວ່າ ສປປລາວ ມີເທົ່າໃດແຂວງແລ້ວກໍສະເລ່ຍໄປໂລດ ຢາກຂໍໃຫ້ເພິ່ນເອົາໃຈໃສ່ຕື່ມອີກ ແລະ ນອກຈາກນັ້ນ, ກໍສະເໜີໃຫ້ທາງລັດຖະບານເພີ່ມທະວີຄວາມເປັນເຈົ້າການໃນການປົກປັກຮັກສາພື້ນຖານໂຄງລ່າງທີ່ສ້າງສຳເລັດ ແລະ ກໍບໍ່ທັນສຳເລັດກໍຢາກໃຫ້ສຸມໃສ່ ຄື ສສຊ ແຂວງໄຊສົມບູນເວົ້າຫັ້ນເຮັດແນວໃດໃຫ້ມີຄວາມຍືນຍົງ ເປັນຕົ້ນການຄຸ້ມຄອງນ້ຳໜັກມີຄວາມສຳຄັນຫລາຍເຮັດໃຫ້ເສັ້ນທາງ ໂດຍສະເພາະທາງເລກ 9 ເປ່ເພຫລາຍແລ້ວ; ສະນັ້ນ, ຂໍໃຫ້ທາງພາກສ່ວນກ່ຽວຂ້ອງເອົາໃຈໃສ່ຕື່ມ

## ຢາກໃຫ້...

ມາຈາກຫລາຍເງື່ອນໄຂຫລາຍປັດໃຈທີ່ເອື້ອອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ກໍຄືແຜນງົບປະມານແຫ່ງລັດ ແຕ່ແນວໃດກໍດີຈາກການຈັດຕັ້ງປະຕິບັດຕົວຈິງ ກໍຄືຜ່ານການຕິດຕາມກວດກາ ກໍຍັງເຫັນວ່າມີບັນຫາທີ່ຄວນຈະຕ້ອງໄດ້ເອົາໃຈໃສ່ໂດຍສະເພາະ:

ບັນຫາທີ 1: ກ່ຽວກັບບັນດາໂຄງການການລົງທຶນເຊົ່າສຳປະທານເພື່ອພັດທະນາກ່ຽວກັບແຮ່ທາດ ຫລື ວ່າພະລັງງານ ເຫັນວ່າຍັງມີຂອດທີ່ວ່າຈະຕ້ອງໄດ້ເອົາໃຈໃສ່ ໃນການຈັດຕັ້ງປະຕິບັດຕິດຕາມກວດກາຢ່າງເຂັ້ມງວດຂຶ້ນໄປຕື່ມ ຍົກຕົວຢ່າງ: ການພັດທະນາແຮ່ທາດຄືຖ່ານຫີນ ເມືອງກະລຶມ ຜະລິດຕະພັນນີ້ຈະໄດ້ສົ່ງອອກຂາຍ ແຕ່ວ່າສັນຍາເຊົ່າສຳປະທານຍັງບໍ່ທັນໄດ້ມີສັນຍາເຊົ່າ ເຂື່ອນໄຟຟ້າຫ້ວຍລະພັນເຕົ້າເຫິງເຕົ້າລຸ່ມ ກະແສໄຟຟ້າກໍໄດ້ຜະລິດສົ່ງອອກແຕ່ວ່າບັນດາການສັນຍາເຊົ່າສຳປະທານ ກໍຍັງເຊັ່ນດຽວກັນນີ້ຂໍສະເໜີໃຫ້ທາງຄະນະລັດຖະບານໃຫ້ຊຸກຍູ້ໃຫ້ປະຕິບັດການເຮັດສັນຍາເຊົ່າໃຫ້ສຳເລັດ ກໍເປັນທ່າແຮງໜຶ່ງໃນການຈັດເກັບລາຍຮັບຂອງພວກເຮົາ.

ສຳລັບດ້ານງົບປະມານນີ້ ມາເບິ່ງແລ້ວກໍເຫັນວ່າມີຜົນສຳເລັດ ແລະ ບັນລຸ ສ່ວນບົດສະຫລຸບຂາດຕົວກໍເກີນແຜນ ແຕ່ມາເບິ່ງຖານຂໍ້ມູນລາຍຮັບນີ້ຈຳນວນໜຶ່ງກາເຮັດໃຫ້ພວກເຮົາເຫັນວ່າຍັງບໍ່ແມ່ນຖານລາຍຮັບທີ່ຍືນຍົງ ບໍ່ທັນແມ່ນຖານລາຍຮັບທີ່ແນ່ນອນ ບໍ່ແມ່ນລາຍຮັບທີ່ຍຸດທະສາດໃຫ້ແກ່ພວກເຮົາແທ້. ຍົກຕົວຢ່າງ: ທ້ອງຖິ່ນຂອງພວກຂ້າພະເຈົ້າຈະໄດ້ເກີນແຜນແມ່ນໄດ້ມາຈາກການອ່ອຍໜີ້ 3 ແຈ ຂອງໂຄງການພື້ນຖານໂຄງລ່າງ ໃນປີ 2022 ກໍຄາດວ່າເພິ່ນຈະມີນະໂຍບາຍການອ່ອຍໜີ້ 3 ແຈດັ່ງກ່າວ ກໍຈະເກີນແຜນອີກໃນປີ 2022 ນີ້; ສະນັ້ນ, ຖ້າວ່າບໍ່ມີຖານຂໍ້ມູນໂຕນີ້ກໍອາດຈະມີຄວາມເປັນໄປໄດ້ຍາກ ກັບການຈັດຕັ້ງປະຕິບັດລາຍຮັບຂອງງົບປະມານ ຂໍໃຫ້ມີທິດທາງກ່ຽວກັບຖານຂໍ້ມູນທີ່ຍືນຍົງໃນທິດຕໍ່ໄປ.

ບັນຫາທີ 2: ຕໍ່ການລົງທຶນເຊົ່າສຳປະທານ ບໍ່ວ່າຈະເປັນການຜະລິດກະສິກຳ ຫລືວ່າ ເປັນການພັດທະນາແຮ່ທາດກໍເຊັ່ນດຽວກັນ ຂໍໃຫ້ສະເໜີຄົ້ນຄວ້າພິຈາລະນາ, ວິເຄາະ, ວິໄຈຢ່າງລະອຽດຖີ່ຖ້ວນ ໂດຍສະເພາະຕໍ່ຜົນກະທົບທາງດ້ານທຳມະຊາດກໍຄືສິ່ງແວດລ້ອມ ຕົວຢ່າງ: ປ່າປົກຄຸມປ່າໄມ້ຂອງລັດຖະບານ ເພິ່ນກຳນົດ 70% ແຕ່ວ່າມັນຫາກມາຢູ່ໃນຂົງເຂດເຊົ່າສຳປະທານດັ່ງກ່າວ, ແລ້ວໃນຈຳນວນກວມເປີເຊັນສູງ ກໍຄວນວ່າອັນໃດຈະຄວນຍົກເວັ້ນ ແລະ ອັນໃດຈະບໍ່ຄວນຍົກເວັ້ນ ຂໍຍົກຕົວຢ່າງແຜນພັດທະນາເຊົ່າສຳປະທານ, ພັດທະນາເຊົ່າສຳປະທານແຮ່ບົກຊິດຢູ່ເມືອງດັກຈຶງ ໃນຕໍ່ໜ້ານີ້ ຍັງເນື້ອທີ່ປະມານ 800 ເຮັກຕາ ແລະ ໃນນັ້ນມີຢູ່ປະມານ 200 ເຮັກຕາ ແລະ ເປັນພື້ນທີ່ທີ່ມີທົ່ງຫຍ້າສີຂຽວ ມີຕົ້ນໄມ້ແປກທີ່ຂຽວງາມເປັນສຸມໜຶ່ງປະມານ 100 ຫລື 200 ຕົ້ນ ສະນັ້ນ, ຢູ່ໃນເຂດນີ້ຂ້າພະເຈົ້າໃນນາມຢູ່ທ້ອງຖິ່ນ ຕົວແທນຂອງທ້ອງຖິ່ນ ຂໍສະເໜີມາຍັງລັດຖະບານ ວ່າເປັນໄປໄດ້ບໍ່ຂໍໂຈະໃນການຂຸດຄົ້ນແຮ່ບົກຊິດຢູ່ໃນເນື້ອທີ່ປະມານ 200 ເຮັກຕາ ທີ່ມັນເປັນເນື້ອທີ່ທົ່ງຫຍ້າ ແລະ ທົ່ງໄມ້ແປກທີ່ຂຽວສົດງົດງາມຄືແບບນີ້ ຂໍໃຫ້ສະຫງວນແບບທ່ອງທ່ຽວຈະຄ້າຍຄືກັບທົ່ງໄຫຫີນຊຽງຂວາງ, ເນື້ອທີ່ໂຕນີ້ ພາສາທ້ອງຖິ່ນເພິ່ນເອີ້ນວ່າທົ່ງໝີມ ມີແຕ່ວ່າມັນບໍ່ມີໄຫຫີນຊື່ໆ ຢາກສະເໜີໄປແນວນັ້ນ ແລະ ຈຸດຕໍ່ມານີ້ກ່ຽວກັບການອ່ອຍແລວນ້ຳເຊກອງຈາກແລວນ້ຳທຳມະຊາດ ໄປເປັນແລວນ້ຳອັນໃໝ່ ໃນລວງຍາວຢູ່ໃນ 5,4 ກິໂລແມັດ ຢາກໃຫ້ເບິ່ງຄືນ ວິເຄາະ, ວິໄຈຄືນ ເພາະວ່າແຫລ່ງນ້ຳດັ່ງກ່າວນີ້ ແມ່ນແຫລ່ງນ້ຳທີ່ໄຫລມາຈາກເພື່ອນບ້ານ ສສ.ຫວຽດນາມ ຜ່ານໄປຫາແຂວງອັດຕະປື ຜ່ານລົງໄປໃສ່ປະເທດກຳປູເຈຍ. ສະນັ້ນ, ບັນຫາຜົນກະທົບຕ່າງໆ ຈະຄວນບໍ່ ວ່າຈະມີການປະສານກັບພາກສ່ວນທີ່ກ່ຽວຂ້ອງ.

ສຳລັບຂົງເຂດສັງຄົມວຽກການສຶກສາ ມາເບິ່ງແລ້ວກ່ຽວກັບໂຕຊີ້ວັດທີ່ບໍ່ບັນລຸຄືທ້ອງຖິ່ນຂອງພວກຂ້າພະເຈົ້າ ແມ່ນມີອັດຕາການປະລະການຮຽນຊັ້ນປະຖົມ ຖ້າວ່າການປະລະຊັ້ນປະຖົມນີ້ບໍ່ບັນລຸ ມັນຈະເປັນເຄືອຄ່າຍ ຫລື ເປັນຕ່ອງໂສ້ໃຫ້ແກ່ບັນຫາ ອັດຕາການສອບເສັງເລື່ອນຂັ້ນ ແລະ ຈົບຊັ້ນປະຖົມຈະບໍ່ບັນລຸ .

ຂໍໃຫ້ເອົາໃຈໃສ່ ຖ້າຫາກວ່າມັນບັນລຸການສອບເສັງເລື່ອນຊັ້ນຂັ້ນປະຖົມ ມັນຈະໄປຕອບສະໜອງ ຫລື ສະໜັບສະໜູນໃນອັດຕາການເລື່ອນຊັ້ນປໍ 5 ຫາຊັ້ນມໍ 1, ຂໍໃຫ້ເອົາໃຈໃສ່ຢູ່ໃນນະໂຍບາຍໃນຊັ້ນນີ້ ແລະ ໂຕສຸດທ້າຍນີ້ ສຳລັບອັດຕາການເຂົ້າຮຽນຊັ້ນມໍ 4 ປະຈຸບັນນີ້ປະຕິບັດໄດ້ຍາກອັດຕາດັ່ງກ່າວນີ້ ເນື່ອງຈາກວ່າປະຊາກອນໃນເກນດັ່ງກ່າວ ແມ່ນຕ້ອງການເງິນ ຫລື ວ່າຫາລາຍຮັບຊ່ວຍຄອບຄົວ ຄືຕົວຢ່າງ: ປະຈຸບັນນີ້ບໍ່ຈົບມໍ 4 ກໍໄປອອກແຮງງານທັງພາຍໃນ ແລະ ຕ່າງປະເທດ, ອາຍຸບໍ່ທັນຮອດ 18 ປີ ກໍສາມາດໄປເຮັດໃຫ້ຖືກ 18 ປີໄດ້ ສາມາດໄປອອກແຮງງານໄດ້.

ສະນັ້ນ, ເປັນໄປໄດ້ບໍ່ວ່າຢາກໃຫ້ເດັກໃນເກນອາຍຸທີ່ບໍ່ຈົບມໍ 4 ຂໍໃຫ້ວຽກງານການສຶກສາປະສານສົມທົບກັບຂະແໜງການກ່ຽວຂ້ອງ ໂດຍສະເພາະແມ່ນແຮງງານວັດທະນະທຳ-ສັງຄົມ ຖ້າວ່າເດັກບໍ່ໄດ້ຈົບຊັ້ນມໍ 4 ແມ່ນບໍ່ອະນຸຍາດໃຫ້ໄປອອກແຮງງານ ຫລື ວ່າໄປເຮັດວຽກຢູ່ຕ່າງປະເທດໄດ້. ຂໍໃຫ້ມີທັດສະນະນິຕິກຳຢ່າງເຂັ້ມງວດຕື່ມ ຄິດວ່າຊິມີອັນບັນລຸສູງໃນຂັ້ນຕໍ່ໄປໄດ້ ສ່ວນແຜນການນີ້ກໍເຫັນດີຕາມທິດສະເໜີຄຳເຫັນຂອງຂ້າພະເຈົ້າ.

## ການຕ້ານ...

ຫວ່າງຕົວເລກໃນປີ 2021 ກໍຄືເດືອນພະຈິກ 2021 ຄືທຽບລະຫວ່າງປີ 2022 ເດືອນພະຈິກ 2022 ກັບ 2021 ເຊິ່ງໃນປີ 2021 ຄືດັ່ງພວກເຮົາຮູ້ແລ້ວວ່າ ມັນເປັນປີທີ່ມີການລອກດາວ ຈາກສະພາບການແຜ່ລະບາດຂອງພະຍາດໂຄວິດ-19 ແນ່ນອນບາງຕົວເລກມັນກໍມີການຂະຫຍາຍຕົວມີການເພີ່ມຂຶ້ນຕົວຢ່າງເຊັ່ນ ເພິ່ນວ່າການເກັບລາຍຮັບງົບປະມານໃນການຈັດຕັ້ງປະຕິບັດອື່ນມັນມີການເພີ່ມຂຶ້ນຖ້າມີການທຽບໃສ່ເດືອນພະຈິກ 2021 ເຊັ່ນ: ລາຍຮັບງົບປະມານປີ 2022 ທຽບໃສ່ໄລຍະດຽວ 2021 ເພີ່ມຂຶ້ນ 26% ຢູ່ໃນເອກະສານເພິ່ນລາຍງານ 33% ເຊິ່ງຂ້າພະເຈົ້າຄິດວ່າຖ້າປຽບທຽບແນວນີ້ກໍດີຢູ່ ແຕ່ວ່າກໍຄວນຈະມີຂຽນໝາຍເຫດ ຫລືວ່າໃສ່ໃນວົງເລັບວ່າ ໄລຍະຊຸມປີຜ່ານມານັ້ນການເກັບລາຍຮັບມັນຕ່ຳ ຍ້ອນມີສະພາບການລະບາດຂອງພະຍາດໂຄວິດ-19 ແລະ ອື່ນໆ ດີແທ້ການປຽບທຽບນັ້ນ ຄວນຈະສົມທຽບໃສ່ຕົວເລກ ຫລື ຄາດໝາຍຂອງສະພາແຫ່ງຊາດທີ່ວ່າໄດ້ຮັບຮອງເອົາຫັ້ນຈະດີທີ່ສຸດ ເພາະວ່າໄດ້ມີການຜ່ານການຄົ້ນຄວ້າພິຈາລະນາອີງໃສ່ສະພາບການຕ່າງໆໃນໄລຍະຜ່ານມາ ແລ້ວອອກມາເປັນມະຕິຄືແນວນັ້ນຈະດີທີ່ສຸດເນາະອັນນັ້ນແມ່ນຈຸດທີໜຶ່ງ.

ຈຸດທີສອງ ຂ້າພະເຈົ້າຢາກປະກອບຄຳເຫັນແມ່ນກ່ຽວຂ້ອງກັບການເກັບລາຍຮັບງົບປະມານ ຄືດັ່ງທີ່ພວກເຮົາຮູ້ນຳກັນແລ້ວວ່າ ການເພີ່ມການເກັບລາຍຮັບງົບປະມານ ແລະ ຕ້ານການຮົ່ວໄຫລຂອງງົບປະມານລັດນີ້ ແມ່ນມີຄວາມສຳຄັນ ແລະ ເປັນປັດໄຈທີ່ວ່າຕັດສິນສຳລັບການຂັບເຄື່ອນເສດຖະກິດໃຫ້ມັນຄ່ອງຕົວດີຂຶ້ນ ແລະ ໃນການເກັບລາຍຮັບທີ່ວ່າຢາກໃຫ້ມັນໄດ້ຮັບປະສິດທິພາບ ແລະ ປະສິດທິຜົນສູງ ກໍຄືການຫັນເປັນດີຈີຕອນ ຫລື ທັນສະໄໝຫັ້ນ ແຕ່ຢູ່ໃນບົດລາຍງານທີ່ໄດ້ຟັງມື້ເຊົ້ານີ້ ເພິ່ນວ່າມີ 10.500 ຫົວໜ່ວຍ ແຕ່ຢູ່ໃນຫັ້ນບໍ່ໄດ້ລະບຸວ່າຫົວໜ່ວຍຫຍັງ ຂ້າພະເຈົ້າກໍເຂົ້າໃຈວ່າໜ້າຈະເປັນຫົວໜ່ວຍທຸລະກິດໃນຂອບເຂດທົ່ວປະເທດ ເຊິ່ງຂ້າພະເຈົ້າສັງເກດເຫັນວ່າມັນເປັນການລາຍງານອາດຈະຕ່ຳເກີນຄວາມເປັນຈິງເນາະ ແລະ ຢູ່ໃນ 10.500 ຫົວໜ່ວຍ ທີ່ວ່າເພິ່ນລາຍງານນີ້ ເພິ່ນວ່າໄດ້ມີການສ້າງຖານອາກອນມູນຄ່າເພີ່ມໄດ້ 9.391 ຫົວໜ່ວຍ ຄິດໄລ່ເປັນເປີເຊັນປະມານ 80 ປາຍເປີເຊັນ ເຊິ່ງໂຕນີ້ຂ້າພະເຈົ້າຢາກສະເໜີຖາມວ່າ ທີ່ເຫລືອ 10 ປາຍເປີເຊັນນັ້ນ ເຮົາຈະມີມາດຕະການ, ຈະມີວິທີການແກ້ໄຂແນວໃດເພື່ອໃຫ້ການສ້າງຖານອາກອນຂໍ້ມູນດັ່ງກ່າວ ມັນເພີ່ມຂຶ້ນອັນນັ້ນແມ່ນຈຸດທີສອງ.

ຈຸດທີສາມ ແມ່ນກ່ຽວຂ້ອງກັບເລື່ອງການປະຕິບັດລາຍຈ່າຍງົບປະມານຂອງລັດ, ຢູ່ໃນບົດລາຍງານຕອນໜຶ່ງ ຂອງລັດຖະບານເພິ່ນໄດ້ລະບຸໄວ້ວ່າ ເນື່ອງຈາກລັດຖະບານສາມາດປະຢັດລາຍຈ່າຍຈຳນວນໜຶ່ງທີ່ບໍ່ຈຳເປັນອອກໄດ້ເຮັດໃຫ້ມູນຄ່າການຂາດດຸນງົບປະມານຫລຸດລົງ ທຽບໃສ່ແຜນການທີ່ສະພາແຫ່ງຊາດຮັບຮອງເອົາ ຂ້າພະເຈົ້າຂໍລົ້ມຄືນອີກເທື່ອໜຶ່ງເນື່ອງຈາກລັດຖະບານສາມາດປະຢັດລາຍຈ່າຍຈຳນວນໜຶ່ງທີ່ບໍ່ຈຳເປັນອອກເຮັດໃຫ້ມູນຄ່າການຂາດດຸນງົບປະມານຫລຸດລົງ ທຽບໃສ່ແຜນການທີ່ທາງສະພາແຫ່ງຊາດໄດ້ຮັບຮອງເອົາໂຕນີ້ຂ້າພະເຈົ້າໄດ້ຍົກຂຶ້ນເພາະວ່າມີຄວາມສຳຄັນຫລາຍ ເພາະວ່າການຫລຸດຜ່ອນລາຍຈ່າຍທີ່ບໍ່ຈຳເປັນອອກໂຕນີ້ ເປັນມາດຕະການໜຶ່ງທີ່ສຳຄັນໃນການຈັດຕັ້ງປະຕິບັດມາດຕະການໃນການສະກັດກັ້ນການຟຸ່ມເຟືອຍ, ຖ້າວ່າໂຕນີ້ຢາກສະເໜີໃຫ້ລັດຖະບານອະທິບາຍຈະແຈ້ງຕື່ມອີກວ່າ ການທີ່ເພິ່ນສາມາດປະຢັດລາຍຈ່າຍຈຳນວນໜຶ່ງທີ່ບໍ່ຈຳເປັນອອກມັນແມ່ນຫຍັງແທ້ ແລະ ເຮັດໃຫ້ມູນຄ່າການຂາດດູນງົບປະມານຫລຸດລົງ ທຽບໃສ່ແຜນການທີ່ທາງສະພາແຫ່ງຊາດຮັບຮອງເອົານັ້ນ ສາມາດຫລຸດຜ່ອນໄດ້ຫລາຍປານໃດ? ປະກອບສ່ວນໄດ້ຫລາຍປານໃດ? ໂຕນີ້ເພາະວ່າຫຍັງ ມັນຈະເປັນບົດຮຽນໜຶ່ງທີ່ສຳຄັນສາມາດນຳໄປຖອດຖອນບົດຮຽນ, ນຳໄປຍຶດເປັນແນວທາງຍຸດທະສາດ ໃນການຈັດຕັ້ງປະຕິບັດເລື່ອງການສະກັດກັ້ນ ແລະ ຕ້ານການຟູມເຟືອຍ ແລະ ຊຸກຍູ້ເຮັດໃຫ້ການແກ້ໄຂບັນຫາທາງດ້ານເສດຖະກິດ, ການເງິນທີ່ພວກເຮົາກຳລັງປະສົບພົບພໍ້ໃນເວລານີ້ດີຂຶ້ນກ່ວາເກົ່າ.

ຈຸດຕໍ່ໄປ ແມ່ນກ່ຽວຂ້ອງກັບການຮັກສາສະຖຽນລະພາບທາງດ້ານເງິນຕານີ້ ທາງລັດຖະບານກໍໄດ້ລາຍງານວ່າໄດ້ມີການສຸມໃສ່ຄຸ້ມຄອງຮ້ານແລກປ່ຽນໃຫ້ເຂົ້າສູ່ການຄຸ້ມຄອງຂອງທະນາຄານທຸລະກິດ ເຊິ່ງມາຮອດປະຈຸບັນນີ້ເພິ່ນກໍໄດ້ລາຍງານວ່າ ເພິ່ນສາມາດຄັດສົມຈາກ 500 ກວ່າຮ້ານໃນເມື່ອກ່ອນ ມາເຫລືອພຽງ 113 ຮ້ານ ອັນນີ້ກະຊົມເຊີຍທີ່ທາງລັດຖະບານໄດ້ຕັດສິນໃຈໃນການປະຕິຮູບ, ແຕ່ວ່າຄຳຖາມກໍຄືວ່າ ອີກເຫລືອ 100 ກວ່າຮ້ານນັ້ນ ເປັນຫຍັງຈຶ່ງບໍ່ສາມາດເຮັດໄດ້ໝົດ ແລະ ເຮັດແນວໃດເຮົາຈຶ່ງສິສາມາດຄັດສົມໄດ້ໝົດ ແລະ ຄາດວ່າປີໃດຈະເຮັດໄດ້ໝົດ. ທັງນີ້ກະເພື່ອວ່າເຮັດໃຫ້ການປະຕິຮູບ ຫລື ການຫັນປ່ຽນດັ່ງກ່າວມີລັກສະນະຕັ້ງໜ້າ, ມີຄວາມຍຸຕິທຳ, ມີຄວາມສະເໝີພາບ, ມີຄວາມໂປ່ງໃສສາມາດກວດສອບໄດ້ ແລະ ປະເດັນສຸດທ້າຍທີ່ຂ້າພະເຈົ້າຢາກປະກອບຄຳເຫັນ ກໍຄືການປະຕິຮູບລັດວິສາຫະກິດ ເຊິ່ງກອງປະຊຸມສະໄໝສາມັນເທື່ອທີ 3 ທາງລັດຖະບານກໍໄດ້ໃຫ້ຄຳໝັ້ນສັນຍາວ່າຈະມີການປະຕິຮູບລັດວິສາຫະກິດຈຳນວນໜຶ່ງທີ່ຈຳເປັນ ແລະ ມື້ເຊົ້ານີ້ກໍໄດ້ຟັງການລາຍງານ ກໍແມ່ນວ່າໄດ້ເລີ່ມມີການປະຕິຮູບແລ້ວ ແຕ່ວ່າຍັງມີການລາຍງານລັກສະນະກວມລວມ, ຖ້າວ່າເປັນໄປໄດ້ເພື່ອເຮັດໃຫ້ການແກ້ໄຂບັນຫາດັ່ງກ່າວມີລັກສະນະຕັ້ງໜ້າ, ມີປະສິດທິພາບ, ມີປະສິດທິຜົນ ຖ້າເປັນໄປໄດ້ກໍຢາກໃຫ້ທາງລັດຖະບານລາຍງານເລີຍວ່າ ລັດວິສາຫະກິດໂຕໃດທີ່ວ່າໄດ້ມີການປະຕິຮູບໄປແລ້ວ, ໄດ້ຮັບຜົນດີຫລາຍໜ້ອຍປານໃດ ແລະ ຍັງລັດວິສາຫະກິດຫຍັງທີ່ວ່າຍັງຄ້າງຄາ ເພື່ອເຮັດໃຫ້ສະພາຂອງພວກເຮົາສາມາດຕິດຕາມ, ກວດສອບໄດ້ຢ່າງມີປະສິດທິພາບ ມີປະສິດທິຜົນ.

## ຂອດປະສານ...

ແນວໃດແທ້ ເພາະຕາມເບິ່ງນັ້ນມັນມີ 16-17 ແຮ່ພຸ້ນເນາະ ຖືວ່າໄດ້ມາແລ້ວເຮົາສົ່ງອອກໄປຄົ້ນຄວ້າ ໄປວິໄຈຢູ່ຈີນພຸ້ນໃດ໋, ຊັ້ນລຳພັງຢູ່ ສປປລາວ ໂຮງງານກັ່ນໂຕນີ້ເຊິ່ງວ່າບໍ່ທັນມີ, ສະນັ້ນຖືວ່າການໄລ່ລຽງເສດຖະກິດນີ້ ກໍບໍ່ຮູ້ວ່າເຮົາໄລ່ລຽງກັນແນວໃດ, ມັນຈະມີປະສິດທິຜົນໜ້ອຍປະສິດທິຜົນຫລາຍແນວໃດ ອັນນີ້ຢາກໃຫ້ເບິ່ງ ຖ້າທ່ານຜູ້ແທນສົນໃຈກໍໄປສຶກສາແລກປ່ຽນເບິ່ງ ໂຮງງານຂຸດຄົ້ນປຸງແຕ່ງແຮ່ຫາຍາກຢູ່ຊຽງຂວາງນັ້ນ ຄັນວ່າເປັນພື້ນຖານເປັນໂຄງການທີ່ໃຫຍ່ ແລະ ບັນຫາສຸດທ້າຍນີ້ກ່ຽວກັບງົບປະມານຂອງກອງທຶນທາງນີ້ ກໍຢາກໃຫ້ມີຄວາມກະຈ່າງແຈ້ງຂຶ້ນຕື່ມ ໂດຍສະເພາະຄືພວກເຮົາຢູ່ໃນເຂດເລືອກຕັ້ງນີ້ຖືວ່າ ບັນດາໂຄງການຕ່າງໆນີ້ກໍເຂົ້າເຖິງຍາກ ເພາະບໍ່ຮູ້ທີ່ໄປທີ່ມາຂອງມັນ ກໍມີແຕ່ວ່າໂຄງການນີ້ຂຶ້ນກັບທາງພະແນກໂຍທາ, ຜູ້ຄຸ້ມຄອງລະຂຶ້ນກັບກະຊວງໂຍທາແລະໂຕນີ້ມັນລວມສູນຢູ່ໃນແຜນພັດທະນາ ຫລື ວ່າແຜນຮັບຮອງຢູ່ໃນງົບປະມານຂອງສະພາແຫ່ງຊາດ ກໍຄືວ່າຜ່ານມານີ້ບໍ່ເຫັນມູນຄ່າຂອງການລົງທຶນໂຕນີ້ ຖືວ່າມູນຄ່າການລົງທຶນມັນກໍສູງ ຈິດໃຈກໍວ່າແມ່ນ, ຖ້າສະເໜີກໍສະເໜີຜ່ານໂຕນີ້ ແລ້ວກໍສະພາແຫ່ງຊາດພວກເຮົາຮັບຮອງ ແລະ ຕິດຕາມກວດກາມັນຈຶ່ງມີຄວາມສະດວກຂຶ້ນຕື່ມ ສະນັ້ນການມີຄຳເຫັນຂອງຂ້າພະເຈົ້າມາຮອດນີ້ຂໍຈົບ.

# ຢາກໃຫ້ຊີ້ແຈງ ການເກັບຊື້ສະກຸນເງິນ ຄຣິບໂຕ

ຄຳເຫັນຂອງທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ສະມາຊິກສະພາແຫ່ງຊາດ ເຂດເລືອກຕັ້ງທີ 01 ນະຄອນຫລວງວຽງຈັນ ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ກ່ອນອື່ນ ຂ້າພະເຈົ້າຂໍສະແດງຄວາມເຫັນດີເປັນເອກະພາບ ຕໍ່ບົດລາຍງານຂອງລັດຖະບານ ແລະ ຂອງຄະນະປະຈຳສະພາແຫ່ງຊາດ ຈະເຫັນໄດ້ວ່າ ລັດຖະບານມີຄວາມພະຍາຍາມຢ່າງສູງ ເພື່ອເຮັດໃຫ້ເສດຖະກິດເລີ່ມນັບມື້ນັບດີຂຶ້ນ ໂດຍສະເພາະແມ່ນຈະເຫັນໄດ້ວ່າ ຢູ່ໃນຫັ້ນລະແມ່ນລາຍຮັບເພີ່ມຕື່ມນີ້ແມ່ນເກັບໄດ້ຫລາຍ ຈັ່ງຊັ້ນ ກໍຂໍສະແດງຄວາມເຫັນດີເປັນເອກະພາບ ແລະ ຂ້າພະເຈົ້າຂໍແລກປ່ຽນບາງຈຸດເພີ່ມຕື່ມ ໂດຍສະເພາະແມ່ນ:

ຈຸດທີໜຶ່ງ ຂ້າພະເຈົ້າຢາກແລກປ່ຽນ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ ທີ່ຕິດພັນກັບການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກນີ້ ເຊິ່ງຈະເຫັນໄດ້ວ່າ ວຽກງານດັ່ງກ່າວນີ້ ຖືໄດ້ວ່າເປັນວຽກງານທີ່ຈຳເປັນທີ່ສຸດ ແລະ ມີຄວາມສຳຄັນໃນສະພາບປັດຈຸບັນຂອງພວກເຮົານີ້ ທີ່ວ່າຈະຕ້ອງໄດ້ສູ້ຊົນ ເຮັດໃຫ້ສຳເລັດ ສະເພາະແມ່ນຕ້ອງໄດ້ສ້າງຄອບຄົວ, ບ້ານ, ເມືອງ ທີ່ວ່າພົ້ນທຸກ ແລະ ກ້າວໄປເຖິງການພັດທະນາໃນຂົງເຂດຕ່າງໆ ເຊິ່ງວ່າໃນຕົວຈິງແລ້ວ ວຽກງານດັ່ງກ່າວນີ້ ມາເບິ່ງແລ້ວ ຈະເປັນວຽກງານທຸກຂະແໜງການທີ່ປິ່ນອ້ອມ ແລະ ມີຫລາຍໆຕົວຊີ້ວັດ ຊຶ່ງວ່າມີຄວາມຈຳເປັນ ແລະ ຮຽກຮ້ອງໃຫ້ມີສ່ວນຮ່ວມຈາກຫລາຍຂະແໜງການເສດຖະກິດທີ່ກ່ຽວຂ້ອງນັ້ນ ນັບຕັ້ງແຕ່ຂະແໜງຄົມມະນາຄົມ ຖະໜົນຫົນທາງ, ການສຶກສາ, ການສື່ສານ, ສາທາ ຕະຫລອດເຖິງວຽກງານຕ່າງໆໃນຂົງເຂດເສດຖະກິດນັ້ນ. ຈັ່ງຊັ້ນນີ້ ຂ້າພະເຈົ້າຄິດວ່າ ຕະຫລອດຮອດພື້ນຖານການຜະລິດຊົນລະປະທານ, ກະສິກຳຕ່າງໆ ຫລືອື່ນໆ ເຊິ່ງວ່າໃນປັດຈຸບັນນີ້ ຂະແໜງການກະສິກຳ ຖືວ່າເປັນໃຈກາງໃນການປະສານງານຕໍ່ວຽກງານດັ່ງກ່າວ. ຈັ່ງຊັ້ນ ຕໍ່ວຽກງານດັ່ງກ່າວ ຂ້າພະເຈົ້າຄິດວ່າ ມັນກໍມີຄວາມຈຳເປັນຈະຕ້ອງໄດ້ຮຽກຮ້ອງໃຫ້ພາກສ່ວນກ່ຽວຂ້ອງທຸກໆຂະແໜງການທີ່ປິ່ນອ້ອມຫັ້ນ ຈະຕ້ອງໄດ້ມີການປະສານສົມທົບ, ມີການວາງແຜນໃຫ້ມັນເກາະກ່າຍເຊິ່ງກັນແລະກັນ ເຊິ່ງມັນຈະກ້າວໄປເຖິງການຕິດຕາມກວດກາຄືນຢ່າງເປັນລະບົບ ຈຶ່ງຈະສາມາດສະຫລຸບຕີລາຄາ ແລະ ຖອດຖອນບົດຮຽນໄດ້ຢ່າງເປັນລະບົບຄົບຊຸດ. ຕໍ່ວຽກງານດັ່ງກ່າວ ຂ້າພະເຈົ້າຄິດວ່າ ຈະຕ້ອງໄດ້ມີການສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເຊິ່ງວ່າໃນຫັ້ນ ກໍແມ່ນຂະແໜງການກະສິກຳ ແລະ ປ່າໄມ້ຫັ້ນ ຈະເປັນຜູ້ຕີຈັງຫວະ ເປັນໃຈກາງໃນການປະສານສົມທົບຕໍ່ວຽກງານດັ່ງກ່າວຫັ້ນ ອັນນີ້ແມ່ນຈຸດທີໜຶ່ງ ທີ່ຂ້າພະເຈົ້າຢາກຂໍອະນຸຍາດແລກປ່ຽນ.

ຈຸດທີສອງນີ້ ຂ້າພະເຈົ້າຄິດວ່າ ຕໍ່ວຽກງານຈຸດສຸມ ເຊິ່ງມັນຕິດພັນກັບຂົງເຂດຍົກສູງການຜະລິດພາຍໃນ ເພື່ອຫລຸດຜ່ອນການນຳເຂົ້າໄປເທື່ອລະກ້າວນັ້ນ ກໍແມ່ນຕິດພັນກັບວາລະແຫ່ງຊາດ ທີ່ວ່າພວກເຮົາໄດ້ສຸມໃສ່ຫັ້ນ ອັນສຳຄັນທີ່ສຸດ ຂ້າພະເຈົ້າວ່າຕໍ່ການຜະລິດ ຂ້າພະເຈົ້າຄິດວ່າພາກສ່ວນທີ່ກ່ຽວຂ້ອງ ກໍຄືລັດຖະບານນັ້ນຈະຕ້ອງໄດ້ສຸມໃສ່ເຮັດການຄຸ້ນຄ່ຽງເພື່ອວ່າເບິ່ງຈຸດແຂງຂອງການຜະລິດພາຍໃນທີ່ພວກເຮົາມີ ຍົກຕົວຢ່າງ: ຝຸ່ນ, ປຸ໋ຍ ຫລື ແນວພັນຕ່າງໆ. ຈັ່ງຊັ້ນນີ້ ກ້າວໄປເຖິງບັນດາສັດຕ່າງໆ ທີ່ພວກເຮົາຈະສົ່ງອອກໄປນີ້ ພາຍຫລັງທີ່ພວກເຮົາມີການຄຸ້ນຄ່ຽງ ພວກເຮົາຈະສາມາດສຸມໃສ່ວ່າຈຸດໃດ ທີ່ພວກເຮົາຈະຕ້ອງໄດ້ສຸມໃສ່ຜະລິດເພື່ອສົ່ງອອກ ຍົກຕົວຢ່າງ: ແນວພັນຫົວອາຫານສັດ ຫລືວ່າສັດຕ່າງໆ ຍົກຕົວຢ່າງ: ການນຳເຂົ້າໝູຕ່າງໆ ຍົກຕົວຢ່າງວ່າຢູ່ພາຍໃນ ຖ້າວ່າພວກເຮົາສາມາດຜະລິດໄດ້ ຍົກຕົວຢ່າງວ່າ 70%, ເຫລືອ 30% ພວກເຮົາຈະຕ້ອງໄດ້ນຳເຂົ້າ ແລະ ຫລຸດຜ່ອນການນຳເຂົ້າໄປເທື່ອລະກ້າວ ຈົນກ້າວໄປເຖິງບໍ່ມີການນຳເຂົ້າ ຂ້າພະເຈົ້າຄິດວ່າມີຄວາມຈຳເປັນຈະຕ້ອງໄດ້ສຸມໃສ່ໃນການຄຸ້ນຄ່ຽງ. ຄຽງຄູ່ກັບການຄຸ້ນຄ່ຽງນັ້ນ ຂ້າພະເຈົ້າຄິດວ່າ ຈະຕ້ອງໄດ້ມີການກຳນົດເຂດປູກ, ເຂດລ້ຽງ, ຈັດສັນການຜະລິດໃຫ້ມັນຄົບຊຸດ, ເປັນລະບົບວ່າເຂດໃດຈະປູກເຂົ້າ, ເຂດໃດຈະເຮັດການລ້ຽງສັດ ມັນຕ້ອງໄດ້ມີການຂີດເພາະວ່າທຸກມື້ນີ້ ດິນເຮັດການຜະລິດນັບມື້ນັບຫລຸດໜ້ອຍຖອຍລົງ ຈະເຫັນໄດ້ວ່າ ມັນມີການພັດທະນາຫລາຍຂຶ້ນ, ດິນກະສິກຳກໍຈະຫລຸດໜ້ອຍຖ່ອຍລົງ ຈັ່ງຊັ້ນ ພວກເຮົາກໍຕ້ອງໄດ້ມີການຮັກສາ ຂ້າພະເຈົ້າຄິດວ່າ ຈະຕ້ອງໄດ້ມີການເອົາໃຈໃສ່. ນອກຈາກນັ້ນ ກໍບັນຫາການຄຸ້ມຄອງລາຄາຂອງສິນຄ້າ ກໍຈະຕ້ອງເປັນບັນຫາໜຶ່ງ ພວກເຮົາຈະຕ້ອງໄດ້ເອົາໃຈໃສ່ສຸມໃສ່ ຖ້າວ່າເປັນໄປໄດ້ ກໍຢາກຂໍໃຫ້ທາງລັດຖະບານ ແລະ ພາກສ່ວນທີ່ກ່ຽວຂ້ອງຕ້ອງໄດ້ພິຈາລະນາເພີ່ມຕື່ມ ເພື່ອວ່າເຮັດໃຫ້ວາລະດັ່ງກ່າວນີ້ ສຳເລັດນັ້ນ ອັນນີ້ ຂ້າພະເຈົ້າກໍຢາກເນັ້ນຄືແນວນັ້ນ. ນອກຈາກນັ້ນ ອີກບັນຫາໜຶ່ງ ທີ່ວ່າຂ້າພະເຈົ້າຢາກສະເໜີແລກປ່ຽນກໍຄື ເລື່ອງການຈັດສັນງົບປະມານເຂົ້າໂຄງການຕ່າງໆ ທີ່ສຳຄັນແມ່ນມີຄວາມຈຳເປັນ ກໍເຂົ້າໃຈວ່າມັນມີຫລາຍໂຄງການທີ່ວ່າພວກເຮົາຈະຕ້ອງໄດ້ສຸມໃສ່ໃຫ້ມັນສຳເລັດ, ແຕ່ວ່າ ອັນສຳຄັນທີ່ສຸດ ແມ່ນຕ້ອງໄດ້ມີການຈັດສັນງົບປະມານເຂົ້າບັນດາໂຄງການທີ່ວ່າເຮັດສຳເລັດແລ້ວ ຫລືວ່າໃກ້ຈະສຳເລັດຫັ້ນ ເພື່ອວ່າໃຫ້ເຂົາເຈົ້າສາມາດຂັບເຄື່ອນໄປໄດ້ ຍົກຕົວຢ່າງວ່າບາງໂຄງການ ຄືຢູ່ແຂວງສະຫວັນນະເຂດ ກໍຍັງມີໂຄງການຫ້ວຍອະໄຕນີ້ ຫ້ວຍອະໄຕຢູ່ເມືອງພີນ. ນອກຈາກນັ້ນ ຢູ່ແຂວງຄຳມ່ວນກໍແມ່ນໂຄງການປະຕູ 3, ປະຕູ 4 ທີ່ວ່າພວກເຮົາໄດ້ເລີ່ມຈັດຕັ້ງປະຕິບັດແຕ່ໄລຍະຜ່ານມາ ແຕ່ວ່າຍັງໜ້ອຍດຽວທີ່ວ່າຈະສຳເລັດ. ທັດສະນະສ່ວນໂຕ ຂ້າພະເຈົ້າຄິດວ່າ ມັນຄວນເປັນບຸລິມະສິດທີ່ຕ້ອງໄດ້ຈັດສັນງົບປະມານໃຫ້ມັນສຳເລັດ ຖ້າວ່າໂຄງການດັ່ງກ່າວສຳເລັດ ຂ້າພະເຈົ້າຄິດວ່າ ຈະສາມາດທົດພື້ນທີ່ການຜະລິດ ຫລື ວ່າຮັບໃຊ້ພື້ນທີ່ການຜະລິດໄດ້ຫລາຍກ່ວາ 2,000 ກ່ວາເຮັກຕ້າ ໃນເຂດພາກກາງ ແລະ ພາກໃຕ້ ຂ້າພະເຈົ້າຄິດວ່າມັນກໍມີຄວາມຈຳເປັນເນາະ ຈັ່ງຊັ້ນກະຂໍໃຫ້ທາງລັດຖະບານ ແລະ ພາກສ່ວນທີ່ກ່ຽວຂ້ອງນັ້ນ ຄົ້ນຄວ້າພິຈາລະນາເພີ່ມຕື່ມ ເພື່ອວ່າເຮັດໃຫ້ໂຄງການດັ່ງກ່າວສຳເລັດ.

ຈຸດທີສາມ ທີ່ຂ້າພະເຈົ້າຢາກແລກປ່ຽນນຳລະແມ່ນ ບັນຫາທີ່ຕິດພັນກັບງົບປະມານ ແລະ ເງິນຕານີ້. ກໍຖືວ່າມັນມີຄວາມຈຳເປັນ ຄືພວກເຮົາໄດ້ຮັບຊາບນຳກັນຫັ້ນ ຈຶ່ງຢາກຂໍໃຫ້ພາກສ່ວນທີ່ກ່ຽວຂ້ອງນັ້ນ ມີການຄົ້ນຄວ້າພິຈາລະນາເພີ່ມຕື່ມ ໂດຍສະເພາະແມ່ນບັນຫາທີ່ໂຄງການຕິດພັນກັບໂຄງການສິນເຊື່ອຊຸກຍູ້ການຜະລິດ ໂດຍສະເພາະແມ່ນພວກເຮົາຖືວ່າການຜະລິດກະສິກຳ ຫລືວ່າການຜະລິດກົນໄກການກໍ່ສ້າງພື້ນຖານໂຄງລ່າງເພື່ອຮັບໃຊ້ໃຫ້ແກ່ວາລະແຫ່ງຊາດຖືວ່າເປັນສຳຄັນ ຈັ່ງຊັ້ນ ບັນຫາສຳຄັນ ພວກເຮົາກໍຕ້ອງໄດ້ຄົ້ນຄວ້າແຫລ່ງທຶນໃນການກູ້ຢືມ ດອກເບ້ຍຕ່ຳ ຫລືວ່າຕາມຄວາມເໝາະສົມຫັ້ນແລນໍ ໃຫ້ເຂົາເຈົ້າສາມາດຂັບເຄື່ອນໄປໄດ້. ອີກດ້ານໜຶ່ງກໍເຫັນວ່າ ການສົ່ງອອກການຜະລິດຕ່າງໆນີ້ ໂດຍສະເພາະແມ່ນການສົ່ງອອກແຮ່ທາດ, ການສົ່ງອອກຜົນຜະລິດທາງດ້ານກະສິກຳ ມາຮອດປັດຈຸບັນນີ້ ຖືວ່າພວກເຮົາມີທ່າແໜງຫລາຍ ໂດຍສະເພາະແມ່ນນອກຈາກຄຳທີ່ພວກເຮົາໄດ້ສົ່ງອອກ ແລະ ຍັງເຫັນວ່າມີຈຳນວນໜຶ່ງ ໂດຍສະເພາະແມ່ນບັນດາຜົນຜະລິດກະສິກຳຄື: ຢາງພາລາ, ໃບຢາສູບ, ກາເຟ ກະຖືວ່າພວກເຮົາໄດ້ສົ່ງອອກເປັນຈຳນວນຫລວງຫລາຍໃນແຕ່ລະເດືອນນັ້ນ. ຂ້າພະເຈົ້າຄິດວ່າ ບາດນີ້ສົມທຽບໃສ່ກັບແຫລ່ງເງິນທຶນທີ່ພວກເຮົາໄດ້ຮັບໃນໄລຍະຜ່ານມາ ລະແມ່ນເງິນທີ່ວ່າຈະເຂົ້ານັ້ນ ກໍຖືວ່າບໍ່ທັນຄຸ້ນຄ່ຽງ ຈັ່ງຊັ້ນນີ້ ຂ້າພະເຈົ້າຄິດວ່າ ສະເໜີໃຫ້ທາງພາກສ່ວນທີ່ກ່ຽວຂ້ອງ ກໍຄືທາງທະນາຄານນັ້ນອາດຈະຄົ້ນຄວ້າກົນໄກບັນດາມາດຕະການ ເພື່ອວ່າເຮັດແນວໃດໃຫ້ບັນດາແຫລ່ງທຶນດັ່ງກ່າວ ຫລືເງິນທີ່ວ່າໃນການໃຊ້ຈ່າຍຕ່າງໆນັ້ນ ສາມາດກັບຄືນມາຈາກການຂາຍຜົນຜະລິດນັ້ນ ເພື່ອວ່າເຂົ້າຜ່ານລະບົບທະນາຄານໃຫ້ໄດ້ຫລາຍກ່ວາເກົ່າ ໃຫ້ມັນສາມາດຄຸ້ນຄ່ຽງໄດ້ ອັນນີ້ຂ້າພະເຈົ້າຄິດວ່າ ມັນກໍມີຄວາມຈຳເປັນ ແລະ ກໍມີຄວາມເປັນຈິງເນາະ.

ບັນຫາສຸດທ້າຍ ທີ່ຂ້າພະເຈົ້າຢາກແລກປ່ຽນນຳ ກໍຄືມື້ວານນີ້ເນາະ ຄືທ່ານຜູ້ວ່າ ບໍ່ຮູ້ວ່າເພິ່ນມາ ຫລືບໍ່, ເພິ່ນກໍໄດ້ສະເໜີວ່າ ທາງທະນາຄານກໍໄດ້ສຸມໃສ່ເປີດສູນເກັບຊື້ເງິນສະກຸນຄຣິບໂຕ ເຊິ່ງວ່າມາຮອດປັດຈຸບັນນີ້ ເຫັນໄດ້ວ່າ ມີສູນຊື້ຄຣິບໂຕ ເງິນຄຣິບໂຕມີຫລາຍປະເທດເຂົາເຈົ້າກໍໄດ້ຍົກເລີກ ຈັ່ງຊັ້ນ ບໍ່ຮູ້ວ່າທາງທະນາຄານເພິ່ນໄດ້ມີຍຸດທະສາດ ຫລື ນະໂຍບາຍແນວໃດ ໃນການຈະສືບຕໍ່ພັກດັນບັນຫາດັ່ງກ່າວ, ຢາກໃຫ້ເພິ່ນຊ່ວຍໃຫ້ຄວາມກະຈ່າງ ແລະຊີ້ແຈງຕື່ມອີກ ຖ້າວ່າມີໂອກາດ.

# ເປັນຫວ່ງການຈັດສັນໜີ້ສິນ



ຄຳເຫັນຂອງທ່ານ ທັນຕາ ກອງຜາລີ ສະມາຊິກສະພາແຫ່ງຊາດ ເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ ປະກອບຄຳເຫັນຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ ແຜນງົບປະມານແຫ່ງ ລັດ ແລະ ແຜນເງິນຕາ ຂ້າພະເຈົ້າ ຂໍມີຄຳເຫັນຍໍ້ໆຢູ່ 2 ຈຸດ ທ່ານປະທານ.

ຈຸດທີໜຶ່ງ ກ່ຽວກັບການລົງທຶນຂອງລັດນີ້. ເນື່ອງຈາກວ່າໃນປີນີ້ ກຳມາທິການແຜນການ, ການເງິນ ແລະ ການກວດສອບ ໄດ້ມີຄວາມພະຍາຍາມສູງ ໃນການປະສານສົມທົບແຕ່ຫົວທີກັບລັດຖະບານໃນການສະໜອງເອກະສານຕ່າງໆ, ການຈັດແບ່ງງົບປະມານຂອງລັດ ລວມທັງໝົດທັງພາກ 61 ຈົນຮອດ 67 ນັ້ນ. ສະນັ້ນ ສະເພາະພາກ 67 ນັ້ນ ໄດ້ມີການແບ່ງງົບປະມານໄປແລ້ວ, ແຕ່ວ່າທີ່ວ່າເປັນຮ່າງເບື້ອງຕົ້ນ ໄດ້ສົ່ງໃຫ້ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳແຕ່ລະເຂດ ເພື່ອຄົ້ນຄວ້າ. ດັ່ງນັ້ນ ເພື່ອໃຫ້ກຳມາທິການນີ້ ທາງກອງເລຂາໄດ້ມີຄວາມສະດວກໃນການສັງລວມນັ້ນ ຂໍໃຫ້ບັນດາທ່ານ ຈຶ່ງໄດ້ປະກອບຄຳເຫັນເປັນອັນຊັດເຈນ ໂດຍສະເພາະການຈັດສັນໂຄງການໜີ້ສິນພວກເຮົາເປັນຫ່ວງທີ່ສຸດກໍແມ່ນຄວາມຍຸຕິທຳ ການບໍ່ເລືອກປະຕິບັດໃນການຊຳລະໜີ້ສິນນີ້ ວ່າມີຄວາມຫຍຸ້ງຍາກສໍ່າໃດ ແລະ ແກ້ໄຂແນວໃດ? ເພາະວ່າລັດຖະບານໄດ້ມີ 6 ມາດຕະການໃນການແກ້ໄຂໜີ້ສິນ ແນ່ນອນວ່າຕ້ອງແກ້ໄຂໜີ້ສິນໃຫ້ຜູ້ປະກອບການທີ່ຈະເອົາທຶນນັ້ນໄປລົງທຶນຕໍ່ໃນຂົງເຂດກະສິກຳ ຫລື ຂົງເຂດການສົ່ງອອກ ຫລືຕ່າງໆ, ສ້າງມູນຄ່າເພີ່ມ ແຕ່ບໍ່ແມ່ນແກ້ໄຂໜີ້ສິນເພື່ອເອົາໄປໃຊ້ເສີຍໆ ອັນນີ້ແມ່ນຕ້ອງໄດ້ເບິ່ງເນາະເປົ້າໝາຍຕ່າງໆ ແລະ ການປົດໜີ້ໂຄງການທີ່ມີມູນຄ່າຄ້າງ 500 ລ້ານກີບລົງມາ ຕ້ອງປົດໃຫ້ໝົດ ໂຕນີ້ປາກົດວ່າເບິ່ງລາຍລະອຽດແລ້ວກໍຄືຊິຍັງເນາະ ອັນນີ້ກໍຂໍໃຫ້ບັນດາທ່ານເບິ່ງເນາະ.

ໂຕທີສອງ ແມ່ນໂຄງການສືບຕໍ່. ຫລາຍທ່ານກໍມີຄຳເຫັນວ່າ ໂຄງການໃດທີ່ສຳຄັນກ່ວາ ໃກ້ຈະສຳເລັດ ຄືຫລາຍທ່ານໄດ້ມີຄຳເຫັນໃກ້ຈະສຳເລັດໃຊ້ປະໂຫຍດໄດ້ ອັນນີ້ກໍຂໍໃຫ້ເບິ່ງເນາະ ແລະ ໂຄງການສືບຕໍ່ນີ້ ທ່ານປະທານ ຍັງມີບັນຊີໂຄງການຈຳນວນໜຶ່ງ ກຳມາທິການຈະສະໜອງໃຫ້ທາງຄະນະປະຈຳ ເພື່ອມີຄຳເຫັນຕໍ່ລັດຖະບານ, ແມ່ນກອງປະຊຸມຮ່ວມລະຫວ່າງ ລັດຖະບານ ກັບຄະນະປະຈຳ ໄດ້ສະເໜີວ່າ ໂຄງການສືບຕໍ່ຈຳນວນໜຶ່ງມີຄວາມຈຳເປັນທີ່ຕິດພັນກັນກັບການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໂດຍສະເພາະເສັ້ນທາງຊາຍແດນລາວ-ກຳປູເຈຍ, ຂົວເຊລຳເພົາ, ເສັ້ນທາງເຊື່ອມຕໍ່ຍຸດທະສາດແຂວງບໍ່ແກ້ວ ກັບແຂວງໄຊຍະບູລີ, ຂົວກ່ອນຕືນ, ຕາຝັ່ງເຈື່ອນເຂດແມ່ນ້ຳເຫືອງ, ລວມທັງຂົວນ້ຳເງິນຕອນໃຕ້ ທີ່ທ່ານປະທານກຳມາທິການບັນດາເຜົ່າໄດ້ສະເໜີໄປແລ້ວ ແລະ ອື່ນໆ ມີຫລາຍໂຄງການ ສະນັ້ນຕ້ອງໄດ້ເບິ່ງແທ້ໆອັນໃດຈຳເປັນແທ້.

ປະເດັນໂຕທີສາມ ແມ່ນໂຄງການໃໝ່. ອັນນີ້ເປັນບັນຫາແທ້ຂໍໃຫ້ເບິ່ງຄັກໆເນາະ ເພາະວ່າຫຍັງ ໃນກອງປະຊຸມຄົບຄະນະກຳມາທິການ ໄດ້ມີ ສສຊ ທີ່ເປັນກຳມະການຂອງກຳມາທິການໄດ້ສະເໜີວ່າ ໂຄງການທີ່ສະເໜີມານີ້ ມີບາງອັນກໍເຊື່ອງຊ້ອນ, ໂຄງການທີ່ເຮັດໄປແລ້ວ ແຕ່ເມື່ອກ່ອນເປັນນອກແຜນ ເອົາມາເຂົ້າເປັນໂຄງການໃໝ່ກໍມີ, ໂຄງການຈັດສັນຕາມກົດໝາຍ ໂຄງການປະເພດ 20 ຕື້ຂຶ້ນໄປນີ້ຕ້ອງຜ່ານການຮັບຮອງຂອງກອງປະຊຸມສະພາແຫ່ງຊາດ, ສ່ວນໂຄງການ 20 ຕື້ລົງໄປນັ້ນ ແມ່ນມອບໃຫ້ສະພາປະຊາຊົນຂັ້ນແຂວງເປັນຄົນດຳເນີນການ. ແຕ່ວ່າ ສສຊ ຫລາຍທ່ານກໍສະເໜີວ່າ ບໍ່ສາມາດຈັດໄປຕາມກຳນົດໝາຍຕ່າງໆ ແລະ ບໍ່ສາມາດຊຳລະໄດ້ຕາມມາດຕາ 19 ຂອງກົດໝາຍລົງທຶນຂອງລັດ, ຍັງແບ່ງທຶນໃຫ້ໄດ້ໜ້ອຍດຽວ ອັນນີ້ຂໍໃຫ້ ສສຊ ພວກເຮົາໄດ້ເບິ່ງ ເພາະວ່າສຸດທ້າຍລັດຖະບານກໍວ່າ ອ້າວ! ອັນນີ້ສະພາກໍໄດ້ຮັບຮອງໄປແລ້ວເດ່ ແມ້ກະທັ້ງທ່ານປະທານອົງການກວດກາ, ອົງການກວດສອບ ໄປກວດເບິ່ງວ່າໂຄງການທີ່ມີມູນຄ່າສູງ 20% ຂຶ້ນໄປຕ້ອງກວດຄືນໃຫ້ໝົດ ກວດແລ້ວຫລາຍຮ້ອຍໂຄງການ ມູນຄ່າພັນກ່ວາຕື້, ໃນເມື່ອລັດຖະບານ ພາກສ່ວນກ່ຽວຂ້ອງກະຊວງແຜນການ ແລະ ການລົງທຶນ ໄດ້ຕໍ່ລອງກັບຜູ້ປະກອບການ ອ້າວ! ບໍ່ໄດ້ແລ້ວຫລຸດບໍ່ໄດ້ ລາຄາຫົວໜ່ວຍສູງກໍຕາມຫລຸດບໍ່ໄດ້ ສະພາຮັບຮອງເອົາແລ້ວເດ່, ມູນຄ່າກໍຮັບຮອງເອົາແລ້ວ, ແບບກໍຮັບຮອງເອົາແລ້ວ ອັນນີ້ເປັນຈຸດທີ່ຄ້າງຄາຂອງພວກເຮົາ. ສະນັ້ນ, ໂຄງການໃຫມ່ຕ້ອງເບິ່ງຄັກໆ ຄັນຊັ້ນເປັນໄປບໍ່ໄດ້ ເຮັດໃຫ້ພວກເຮົາມີໜີ້ສິນ ຕິດພັນກັບງົບປະມານເປັນເວລາຫລາຍປີ ທີ່ເປັນສາເຫດໃຫ້ມີໜີ້ສິນ ອັນນີ້ແມ່ນບັນຫາຂອງການລົງທຶນຂອງລັດ. ໃນນີ້ຕ້ອງເບິ່ງຄືນວ່າສະພາແຫ່ງຊາດຂອງພວກເຮົາ ປະຊຸມກັນພາຍໃນ ແລະ 2 ມື້ຜ່ານນີ້ກໍວ່າ ໂຄງປະກອບການລົງທຶນລັດຖະບານຈັດ 30, 57, 11 ກ່ວາ% ຫລາຍທ່ານສະເໜີວ່າ ການຊຳລະໜີ້ບໍ່ຄວນຈະຕ່ຳກ່ວາ 50% ໂຄງການສືບຕໍ່ 35 ຫລືວ່າຄວນ 15 ອັນນີ້ເຮັດໄດ້ບໍ, ຂ້າພະເຈົ້າຄິດວ່າກະຫຍຸ້ງຢູ່ນໍ່ ເພາະວ່າຫຍັງລັດຖະບານໄດ້ຈັດສັນໃສ່ໂຄງການຕ່າງໆຕາມໂຄງປະກອບແລ້ວ, ຖ້າເຮົາຢາກເພີ່ມ ຈະເພີ່ມນີ້ ຂ້າພະເຈົ້າສະເໜີວ່າ ຍັງມີເງິນທີ່ລັດຖະບານສະເໜີວ່າ ປີ 2022 ນີ້ ລັດຖະບານພະຍາຍາມໃຫ້ໄດ້ຄາດໝາຍ ຫລື່ນຄາດໝາຍ 2%, ແຕ່ເພິ່ນຈະພະຍາຍາມຕື່ມໃຫ້ໄດ້ຫລື່ນແຜນ ການປະມານ 6% ແລະ ຈະມີເງິນປະມານ 1,981 ຕື້ ເພື່ອຈັດສັນເພີ່ມ. ສະນັ້ນການຈັດສັນເພີ່ມ ຂ້າພະເຈົ້າຂໍເຂົ້າເລື່ອງການສັນເພີ່ມເປັນເລື່ອງທີ 2 ຂົງເຂດວັດທະນະທຳ-ສັງຄົມ ແລະ ພັດທະນາຊົນນະບົດແກ້ໄຂຄວາມທຸກຍາກຂໍເພີ່ມ 200 ຕື້ ອັນນີ້ມີເຫດຜົນ, ແຕ່ວ່າຕ້ອງເບິ່ງວ່າຈະເພີ່ມໃສຈຸດໃດແທ້ ເພີ່ມໃສ່ມີປະສິດທິຜົນແທ້ບໍ່ ອັນນີ້ກໍຂໍໃຫ້ເບິ່ງ ເປັນຕົ້ນການສຶກສາເພີ່ມໃສ່ຫຍັງເພີ່ມໃສ່ໂຄງລ່າງ ຫລື ເພີ່ມໃສ່ເບ້ຍລ້ຽງນັກຮຽນ ຫລື ອັນອື່ນທີ່ມີຄວາມຈຳເປັນ ແລະ ນັກຮຽນທີ່ວ່າບໍ່ໄປຮຽນນັ້ນ ກະຕຸກໄດ້ບໍ່ ຫລືວ່າແມ່ນຍ້ອນສາເຫດເຂົາເຈົ້າທຸກຍາກ ຫລືວ່າໝົດຫວັງວ່າຈະມີອາຊີບຕ່າງໆ ອັນນີ້ກໍຕ້ອງໄດ້ເບິ່ງຄັກໆ. ທີ 2 ມາ ການຂໍເພີ່ມຂອງຂົງເຂດອື່ນ ມີຫລາຍພາກສ່ວນສະເໜີຂໍເພີ່ມທ່ານປະທານ ທັງກວດກາ, ກວດສອບ, ທັງສານ, ໄອຍະການ ລວມທັງກະຊວງການຕ່າງປະເທດ ທີ່ຈະເປັນເຈົ້າພາບອາຊຽນໃນປີ 2024, ສະພາແຫ່ງຊາດ ເປັນເຈົ້າພາບ CLV ປີ 2023 ແລະ ເປັນເຈົ້າພາບ AIPA ປີ 2024 ທັງໝົດທັງມວນນີ້ເປັນເງິນຈຳນວນຫລວງຫລາຍ ອັນນີ້ຂ້າພະເຈົ້າຄິດວ່າຈະຕ້ອງໄດ້ໄປປຶກສາຫາລືວ່າເອົາເງິນສ່ວນທີ່ເຫລືອ ຄາດວ່າຈະໄດ້ຈາກການໄດ້ງົບປະມານເພີ່ມປະມານ 1,981 ຕື້ ຕ້ອງໄດ້ເບິ່ງ ອັນນີ້ແມ່ນບັນຫາທີ 2.

ສຸດທ້າຍທ່ານປະທານ ເນື່ອງຈາກປີ 2023 ເປັນປີທີ່ຈະກາງສະໄໝແລ້ວ ສະເໜີໃຫ້ລັດຖະບານວ່າຈະມີການທົບທວນກາງສະໄໝ ຫລືບໍ່ ເພາະວ່າແຜນພັດທະນາ, ງົບປະມານຕ່າງໆ ຍັງມີຫລາຍບັນຫາທີ່ຕ້ອງໄດ້ແກ້ໄຂ. ສະນັ້ນ ໃນກອງປະຊຸມສະໄໝສາມັນເທື່ອທີ 5 ໜ້າຈະໄດ້ທົບທວນແຜນການ 5 ປີ ທັງໝົດລະບົບ ຄືຫລາຍທ່ານກໍມີຄວາມເປັນຫ່ວງ ມີຫລາຍຄົນເປັນຫ່ວງ ເລື່ອງການລົງທຶນພາກເອກະຊົນເປັນແນວໃດ ຫລື ຕ່າງໆ.